<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2014 by BAPTISTWAY PRESS®.**

**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ๊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປື້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher, BAPTISTWAY PRESS®: Scott Stevens

Language Materials Team

Bible Study Writer for Lessons 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3
Phaisane  Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons  4, 5, 6, 7
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons  4, 5, 6, 7
Phaisane  Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons   8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons  8, 9, 10
Phaisane  Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons  11, 12, 13 and Christmas
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13 and Christmas
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ບົດຮຽນຄຣິສມັສ
## ຄວາມເຊື່ອເກີດເຫັນກັບຕາ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ລູກາ 2:21-38

**ພູມຫລັງຂອງພຣະຄັມພີ:** ລູກາ 2

**ຈຸດສໍາຄັນຂອງບົດຮຽນນີ້:** ຂ້າໃຊ້ຜູ້ສັດຊື່ສອງຄົນໄດ້ເຫັນພຣະເຢຊູຫລັງຈາກຄອຍຖ້າຢ່າງຍາວນານ.

**ຄໍາຖາມເພື່ອການຄົ້ນຄວ້າ:** ເຮົາຈະຕ້ອນຮັບພຣະຜູ້ໂຜດໃຫ້ພົ້ນແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອເຮົາຈະຂອບພຣະຄຸນທີ່ນໍາເອົາຄວາມລອດພົ້ນໂດຍການບັງເກີດຂອງພຣະເຢຊູ.

## ບົດນໍາ

ພຣະທັມລູກາບອກເຮົາວ່າ ຄໍາສັນຍາຂອງພຣະເຈົ້າມາຮອດແລ້ວ ຄືພຣະເຈົ້າໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາເກີດໃນໂລກເພື່ອຈະຊ່ອຍໄພ່ພົນຂອງພຣະອົງໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ. ໃນບົດຮຽນເຣື່ອງຄຣິສມັສນີ້ຈະເວົ້າເຣື່ອງ ພຣະເຢຊູເກີດພາຍໃຕ້ກົດເກນຂອງຢິວ ຈໍາຕ້ອງເຮັດຕາມກົດຂອງຢິວ. ຢ່າງທີສອງຈະເວົ້າເຖິງພວກຜູ້ທໍານວາຍນ້ອຍສອງຄົນ ທີ່ມີອາຍຸເຖົ້າແກ່ຊະຣາລໍຖ້າເຫັນໜ້າພຣະເມຊີອາລົງມາເກີດ ພວກເພິ່ນບອກວ່າ ເພິ່ນຈະບໍ່ຕາຍຈົນກວ່າຈະເຫັນໜ້າພຣະເມຊີອາ.

## 1. ເດັກເກີດໃໝ່ໃຕ້ກົດຢິວ: (ລູກາ 2:21-24).

ພຣະທັມລູກາ ຜູ້ເປັນພໍ່ແມ່ຝ່າຍຮ່າງກາຍຂອງພຣະເຢຊູໄດ້ເຮັດຕາມກົດຣະບຽບຂອງຊາດຢິວເມື່ອພຣະເຢຊູຊົງບັງເກີດນໍາທ່ານທັງສອງ. ອາຈານໂປໂລຊຽນຈົດໝາຍສະບັບນຶ່ງໄປຍັງເມືອງຄາລາເຕັຽບອກວ່າ ພຣະຜູ້ໂຜດໃຫ້ພົ້ນໄດ້ບັງເກີດພາຍໃຕ້ກົດຣະບຽບເພື່ອຈະຊ່ອຍຄົນທັງຫລາຍທີ່ຢູ່ພາຍໃຕ້ກົດຣະບຽບໃຫ້ພົ້ນ (ຄາລາເຕັຍ 4:4-5). ໃນກົດດຽວກັນນັ້ນພໍ່ແມ່ຂອງພຣະເຢຊູໄດ້ນໍາເອົາພຣະເຢຊູໄປຍັງພຣະວິຫານຫລັງຈາກພຣະເຢຊູຊົງບັງເກີດໄດ້ແປດວັນແລ້ວ "*ໃນມື້ທີແປດໃຫ້ຕັດໜັງປາຍອະວັຍະວະເພດຂອງເດັກນ້ອຍ ເພື່ອເປັນການເຂົ້າພິທີຕັດ*" (ອ່ານ ກົດຣະບຽບຂອງເລວີ (12:3). ເຣື່ອງການຕັດອະວັຍະວະເພດນັ້ນຄັ້ງທໍາອິດແມ່ນພຣະສັນຍາໃນຣະຫວ່າງພຣະເຈົ້າກັບອັບຣາຮາມວ່າ "*ອັນນີ້ແມ່ນສິ່ງທີ່ເຈົ້າແລະເຊື້ອສາຍຂອງເຈົ້າຕ້ອງປະຕິບັດຄື ຜູ້ຊາຍທຸກຄົນໃນພວກເຈົ້າຕ້ອງເຂົ້າພິທີຕັດຕັ້ງແຕ່ບັດນີ້ໄປເຈົ້າຈະຕ້ອງທໍາພິທີຕັດໃຫ້ແກ່ເພດຊາຍທຸກໆຄົນ*" (ປະຖົມມະການ 17:10-11). ຈົນມາເຖິງສມັຍຂອງຊາຂາຣີຢາ ກໍໄດ້ເຮັດຢ່າງດຽວກັນກັບໂຢຮັນໃນວັນທີແປດທີ່ໂຢຮັນເກີດ (ລູກາ 1:59-64).

ເມື່ອລູກຊາຍນ້ອຍໄດ້ເຮັດພິທີນີ້ແລ້ວຈຶ່ງຖືວ່າຖືກຕ້ອງຕາມກົດຂອງຊາດຢິວ ແລະຍັງມີຄວາມໝາຍອີກວ່າ ຜູ້ເປັນພໍ່ແມ່ໃຫ້ຄໍາໝັ້ນສັນຍາວ່າຈະລ້ຽງລູກໃຫ້ຢູ່ໃນສາສນາຢິວຢ່າງເຄັ່ງຄັດ.

ໂຢເຊບແລະມາຣີອາໄດ້ນໍາພຣະກຸມມານນ້ອຍເຢຊູໄປຍັງກຸງເຢຣູຊາເລັມຕາມຣະບຽບການ "*ເມື່ອເຖິງເວລາທີ່ຈະທໍາພິທີຊໍາຣະຕົວໃຫ້ສະອາດ ເຂົາຈຶ່ງເອົາພຣະກຸມມານໄປຍັງກຸງເຢຣູຊາເລັມ ເພື່ອຖວາຍແດ່ອົງ ພຣະຜູ້ເປັນເຈົ້າ (ຕາມທີ່ຂຽນໄວ້ແລ້ວໃນພຣະບັນຍັດຂອງອົງພຣະຜູ້ເປັນເຈົ້າວ່າ, "ລູກຊາຍກົກທຸກຄົນຈະໄດ້ເອີ້ນວ່າ ເປັນລູກທີ່ຖວາຍແດ່ອົງພຣະຜູ້ເປັນເຈົ້າ")* (ລູກາ 2: 22-23). ນອກນັ້ນໂຢເຊບແລະມາຣີອາຈະຕ້ອງໄດ້ຫາງຫາເຄື່ອງຖວາຍບູຊາຕາມທີ່ຊົງກໍານົດໄວ້ *"ແລະເພື່ອຖວາຍຂອງບູຊາຕາມທີ່ຊົງກ່າວໄວ້ແລ້ວໃນພຣະບັນຍັດຂອງອົງພຣະຜູ້ເປັນເຈົ້າ ຄື "ນົກເຂົາຄູ່ນຶ່ງຫລືນົກກາງແກໜຸ່ມສອງໂຕ"* (ຂໍ້ 24). ການປະຕິບັດຕາມກົດຂອງໂຢເຊບແລະມາຣີອາເປັນບົດຮຽນທີ່ດີສໍາລັບຄຣິສຕຽນໃນວັນນີ້ຄື ເຮົາຈະຢູ່ທີ່ໃດ? ປະເທດໃດ? ເຮົາຈໍາເປັນຈະຕ້ອງນັບຖືກົດຂອງບ້ານເມືອງນັ້ນ, ໃນພຣະທັມໂຣມ 13 ໄດ້ສອນເຮົາດັ່ງນັ້ນ.

## 2. <u>ຊີເມໂອນພົບກັບພຣະເມຊີອາ:</u> (ລູກາ 2:25-35)

ໃນພຣະຄັມພີມີຄົນຊື່ ຊີເມໂອນ ຊື່ນີ້ມີພຽງແຕ່ຫ້າຄົນໃນພຣະຄັມພີ, ສ່ວນທ່ານຊີເມໂອນຜູ້ນີ້ເປັນຄົນຢິວຜູ້ນຶ່ງທີ່ອາສັຍຢູ່ໃນກຸງເຢຣູຊາເລັມລາວມີອາຍຸເຖົ້າແກ່ແລ້ວ, ລາວເປັນຄົນສິນທັມແລະຢໍາເກງພຣະເຈົ້າ ລາວໄດ້ບອກພວກລູກຫລານ ແລະໄທບ້ານ, ໄທເມືອງ, ວ່າລາວຈະບໍ່ຕາຍຈົນກວ່າຈະເຫັນໜ້າພຣະເມຊີອາ (Messiah). ດັ່ງນັ້ນວັນນີ້ທ່ານຊີເມໂອນຖືກບັນດານໃຈໃຫ້ໄປຍັງພຣະວິຫານເພື່ອຈະພົບກັບພຣະກຸມມານນ້ອຍເຢຊູ ທີ່ມີສາຍານາມວ່າເມຊີອາ (ແປວ່າພຣະຜູ້ຖືກຫົດສົງໃຫ້ລົງມາໄຖ່). ທ່ານໄດ້ພົບກັບພຣະກຸມມານນ້ອຍເຢຊູໃນຂະນະທີ່ໂຢເຊບແລະມາຣີອານໍາພຣະກຸມມານນ້ອຍເຢຊູມາທີ່ພຣະວິຫານກຸງເຢຣູຊາເລັມ. *"ຊີເມໂອນຈຶ່ງອຸ້ມເອົາພຣະກຸມມານ ແລະສັຣເສີນພຣະເຈົ້າວ່າ, "ຂ້າແດ່ພຣະອົງເຈົ້າ ບັດນີ້ພຣະອົງໄດ້ຊົງໃຫ້ຂ້ອຍໃຊ້ຂອງພຣະອົງໄປເປັນສຸກ ຕາມພຣະທັມຂອງພຣະອົງເພາະວ່າຕາຂ້າພຣະອົງໄດ້ເຫັນຄວາມພົ້ນທີ່ມາຈາກພຣະອົງແລ້ວ ຊຶ່ງພຣະອົງໄດ້ຊົງຈັດຕຽມໄວ້ຕໍ່ໜ້າໄພ່ພົນທັງຫລາຍເປັນຄວາມສວ່າງສ່ອງແສງແກ່ບັນດາປະຊາຊາດ ແລະເປັນສະງ່າຣາສີແກ່ພວກອິສຣາເອນພົລເມືອງຂອງພຣະອົງ"* (ຂໍ້ 29-32). ທ່ານຊີເມໂອນໄດ້ລໍຖ້າໂອກາດນີ້ເປັນເວລາຍາວນານດ້ວຍຄວາມອົດທົນ ເພື່ອໃຫ້ທຸກຢ່າງສໍາເຮັດຕາມຄໍາທໍານວາຍຂອງຜູ້ທໍານວາຍເອຊາຢາທີ່ທໍານວາຍໄວ້ວ່າ " *ໂອຟ້າສວັນເອີຍ ຈົ່ງຮ້ອງເພງເຖີດ ໂອແຜ່ນດິນເອີຍ ຈົ່ງມ່ວນຊື່ນເບີກບານເຖີດ ຂໍໃຫ້ພູທັງຫລາຍຮ້ອງເພງອອກມາ ພຣະຜູ້ເປັນເຈົ້າຊົງເລົ້າໂລມໄພ່ພົນຂອງພຣະອົງແລະຈະຊົງສົງສານໄພ່ພົນທີ່ຕົກທຸກໄດ້ຍາກ* " (ເອຊາຢາ 49:13).

ທ່ານຊີເມໂອນໄປຍັງພຣະວິຫານດ້ວຍຣິດເດດການຊົງນໍາຂອງອົງພຣະຜູ້ເປັນເຈົ້າ ແລະໄດ້ກ່າວກັບບິດາມານດາຂອງພຣະກຸມມານນ້ອຍເຢຊູດ້ວຍການເປີດເຜີຍຈາກເບື້ອງເທິງວ່າ *"ເບິ່ງແມ, ພຣະກຸມມານນີ້ຊົງຕັ້ງໄວ້ເປັນເຫດໃຫ້ຫລາຍຄົນໃນພວກອິສຣາເອນລົ້ມລົງແລະລຸກຂຶ້ນໃໝ່ ແລະເປັນໝາຍສໍາຄັນທີ່ເຂົາຈະກ່າວຕໍ່ສູ້ເພື່ອຄວາມຄຶດໃນໃຈຂອງຄົນຈໍານວນຫລາຍຈະໄດ້ປາກົດແຈ້ງ ສ່ວນນາງ ດາບຈະແທງທົ່ວໃຈຂອງນາງເອງໃຫ້ຊອດ"* ( ລູກາ 2:34-35). ທ່ານຊີເມໂອນໄດ້ກ່າວເຣື່ອງຂອງພຣະເຢຊູຈົນເຖິງວັນເຂົາຄຶງພຣະອົງທີ່

ໄມ້ກາງແຂນ ມານດາຈະເຈັດປວດຫລາຍເໝືອນດັ່ງຈິດໃຈທີ່ຖືກແທງດ້ວຍດາບ. ໃນເຣື່ອງນີ້ໄດ້ມີນັກສາສນາສາດຕີຄວາມໝາຍນາໆປະການ ແຕ່ຂ້າພະເຈົ້າຂໍນຳຄວາມໝາຍທີ່ຂ້າພະເຈົ້າເຫັນພ້ອມດັ່ງທີ່ກ່າວມາຂ້າງເທິງນັ້ນ.

ຊີວິດຂອງທ່ານຊີເມໂອນເປັນແບບຢ່າງທີ່ດີໃນການອົດທົນດົນນານ ດັ່ງນັ້ນເຮົາທັງຫລາຍຄວນຮຽນເອົາແບບຢ່າງຂອງຄວາມອົດທົນດົນນານດ້ວຍໃຈໃສສັດທາຈົນເຖິງວັນທີ່ພຣະອົງຊົງສັນຍາຈະກັບຄືນມາຮັບເອົາເຮົາເໝືອນດັ່ງທ່ານຊີເມໂອນໄດ້ກ່າວວ່າທ່ານຈະບໍ່ຕາຍຈົນເຫັນພຣະກຸມມານນ້ອຍ ເຮົາທັງຫລາຍກໍຈະບໍ່ທໍ້ຖອຍຈົນກວ່າວັນທີ່ພຣະເຢຊູສະເດັດກັບຄືນມາ, ເຮົາທັງຫລາຍຈະຕ້ອງມີສັນຕິສຸກໃນໃຈຂອງເຮົາ, ເຮົາທັງຫລາຍຈະຕ້ອງມີສັນຕິສຸກກັບຜູ້ອື່ນຈົນກວ່າວັນນັ້ນມາເຖິງ.

## 3. <u>**ຜູ້ທຳນວາຍອານາ:**</u> (ລູກາ 2:36-38).

ພຣະທັມລູກາບອກເຖິງຜູ້ທຳນວາຍອີກຜູ້ນຶ່ງມີຊື່ວ່າ ອານາ (Anna) ເປັນຄົນເຖົ້າແກ່ຊະຣາຫລາຍສົມຄວນ, ລາວເປັນຍິງທີ່ອຸທິດຕົນໃນການເຂົ້າເຝົ້ານະມັສການຮັບໃຊ້ພຣະເຈົ້າມາຕັ້ງແຕ່ເປັນສາວຊ່ຳນ້ອຍມາ, ນາງໄດ້ຮຽນຮູ້ເຂົ້າໃຈວ່າພຣະເມຊີອາຈະລົງມາໄກ່ ດ້ວຍເຫດນີ້ນາງຈຶ່ງລໍຖ້າແລະຕັ້ງຄວາມຫວັງເໝືອນທ່ານຊີເມໂອນ ວ່າຈະບໍ່ຕາຍຈົນກວ່າຈະເຫັນໜ້າພຣະເມຊີອາ. ດ້ວຍຄວາມແກ່ຊະຣາແລະການອຸທິດຕົນປະຕິບັດພຣະເຈົ້າເປັນເວລາຍາວນານຈຶ່ງເຮັດໃຫ້ຊື່ສຽງຂອງລາວເປັນທີ່ນັບຖືແລະເຊື່ອຟັງແກ່ຄົນທົ່ວໄປ "*ຍັງມີໝໍທຳນວາຍຍິງຄົນນຶ່ງຊື່ອານາ ເປັນລູກຂອງຟານູເອນໃນຕະກູນອາເຊີ ນາງເປັນຄົນແກ່ຊະຣາຫລາຍແລ້ວ ມີຜົວຕັ້ງແຕ່ເປັນສາວໜຸ່ມ ແລະຢູ່ນຳຜົວໄດ້ເຈັດປີແລ້ວກໍເປັນໝ້າຍຢູ່ລະຫວ່າງແປດສິບສີ່ປີ ນາງບໍ່ໜີຈາກບໍຣິເວນພຣະວິຫານ ແຕ່ໄດ້ຢູ່ປະຕິບັດພຣະເຈົ້າ ຮັກສາສິນດ້ວຍອົດອາຫານແລະໄຫວ້ວອນທັງກາງເວັນແລະກາງຄືນ ໃນຂນະນັ້ນນາງໄດ້ເຂົ້າມາໂມທະນາພຣະຄຸນພຣະເຈົ້າ ແລະກ່າວເຖິງພຣະກຸມມານໃຫ້ຄົນທັງປວງໃນກຸງເຢຣູຊາເລັມຟັງ ຊຶ່ງເຂົາກຳລັງຄອຍຖ້າການຊົງໄຖ່ໃຫ້ພົ້ນນັ້ນ*" (ຂໍ້ 36-38).

ນາງອານາໃຊ້ຊີວິດກັບຜົວພຽງເຈັດປີເທົ່ານັ້ນ, ຫລັງຈາກຜົວຂອງລາວຕາຍແລ້ວລາວກໍບໍ່ໄດ້ແຕ່ງງານໃໝ່ໂດຍໃຊ້ຊີວິດເປັນໝ້າຍຢູ່ ແປດສິບສີ່ປີ ເຮົາບໍ່ຮູ້ແນ່ນອນວ່າເວລາທີ່ລາວພົບກັບພຣະກຸມມານນ້ອຍເຢຊູນັ້ນລາວມີອາຍຸຈັກປີແທ້ ແຕ່ສົມມຸດວ່າລາວແຕ່ງງານອາຍຸ 18 ປີ ສົມໃສ່ 7 ປີ ທີ່ຢູ່ນຳຜົວ ແລະສົມໃສ່ເປັນໝ້າຍ 84ປີ (18+7+84=109) ກໍເຫັນວ່າລາວມີອາຍຸ 109 ປີ. ອີງຕາມພຣະທັມລູກາແລ້ວເຫັນວ່າ ນັບຕັ້ງແຕ່ລາວເປັນໝ້າຍ ແມ່ເຖົ້າອານາບໍ່ເຄີຍຫ່າງເຫີນພຣະວິຫານຂອງພຣະເຈົ້າທີ່ກຸງເຢຣູຊາເລັມຈັກເທື່ອ, ດ້ວຍເຫດນີ້ຈຶ່ງບໍ່ເປັນການແປກປລາດທີ່ຄົນໃນພຣະວິຫານຮູ້ຈັກຮັກແພງລາວແລະນັບຖືລາວ. ແມ່ເຖົ້າ ອານາ ໄດ້ເວົ້າເຖິງຄວາມສຳຄັນຂອງພຣະກຸມມານນ້ອຍເຢຊູໃຫ້ເຂົາຟັງ ໃນຂະນະທີ່ລາວພົບເຫັນພຣະກຸມມານໃນພຣະວິຫານ (ຂໍ້ 38).

<u>**ຄຳຖາມ:**</u>

1. ທ່ານຄິດວ່າເປັນຫຍັງພຣະທັມລູກາຈຶ່ງກ່າວເຖິງ ຊີເມໂອນ ແລະ ອານາ?
2. ທ່ານຊີເມໂອນຮູ້ໄດ້ແນວໃດວ່າພຣະກຸມມານນ້ອຍແມ່ນພຣະເມຊີອາ?

3. ແມ່ເຖົ້າ ອານາ ເວົ້າເຣື່ອງຂອງພຣະກຸມມານໃຫ້ໃຜຟັງ?

4. ທ່ານເດ, ໄດ້ຄອຍຖ້າດົນປານໃດແລ້ວທີ່ຈະໃຫ້ພຣະເຈົ້າຕອບຄຳອະຖິຖານຂອງທ່ານ?

5. ເມື່ອປຽບທຽບຄວາມອົດທົນຂອງທ່ານກັບ ທ່ານຊີເມໂອນ ແລະ ແມ່ເຖົ້າອານາ ແລ້ວທ່ານຈະເຮັດແນວໃດໃນຂັ້ນຕໍ່ໄປ?

6. ເມື່ອທ່ານໄດ້ຮຽນຮູ້ບົດຮຽນນີ້ແລ້ວທ່ານຈະເຮັດແນວໃດກັບງານຄຣິສມັສທີ່ຈະມາເຖິງນີ້?

*ທ.ວ.*

# ບົດຮຽນທີ 1

## ການສະເດັດມາຂອງກະສັດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມັດທາຍ 1:18-2:12

**ພູມຫລັງຂອງພຣະຄັມພີ:** ມັດທາຍ 1:18-2:12

**ຈຸດສໍາຄັນສໍາລັບບົດຮຽນນີ້:** ການອັສຈັນຂອງການເກີດຂອງພຣະເຢຊູ ເພື່ອໃຫ້ພຣະສັນຍາສໍາເຣັດ ແລະເປັນການສົມຄວນແກ່ການນະມັສການ

**ຄໍາຖາມເພື່ອການຄົ້ນຄວ້າ:** ຈະອະທິບາຍຢ່າງໃດ ເພື່ອເນັ້ນຄວາມເຂົ້າໃຈຂອງພວກເຮົາ ແລະຄວນຈະມີຄວາມຮັບຜິດຊອບຢ່າງໃດໃນການສະເດັດມາຂອງພຣະອົງ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ເຂົ້າໃຈໃນຄໍາທໍານວາຍກ່ຽວກັບການປະສູດ ແລະຄວນມີຄວາມຮັບຜິດຊອບຢ່າງໃດ.

### ຄໍານໍາ

ໃນບັນດາຜູ້ທີ່ມີຊື່ສຽງທັງຫລາຍ, ນັກຫລິ້ນດົນຕຣີເພັງຣ໊ອກ ອາລິສ ຄູບເປີ້ ໄດ້ດື່ມເຫລົ້າວິສກີ້ ນິ້ລະແກ້ວ, ເກືອບທໍາລາຍຄອບຄົວຂອງຕົນເອງທີ່ໄດ້ສ້າງມາເປັນເວລາ 30 ປີ ຮ່ວມກັບນາງເຊີຣິລ. ໃນການເປັນຢ່າງນີ້ ເພື່ອຈະຊ່ວຍໃຫ້ຄອບຄົວຂອງລາວຄືນດີໄດ້ກໍແມ່ນລາວເລີ້ມຕົ້ນຫັນຫໜ້າເຂົ້າໂບດຮ່ວມກັນ ແລະລາວເອງກໍຮູ້ສຶກວ່າພຣະເຈົ້າເວົ້າກັບລາວທຸກໆອາທິດ. ປັດຈຸບັນນີ້ ຜູ້ທີ່ມີຄວາມເຊື່ອຢ່າງຄູບເປີ້ ກ້າສາມາດເວົ້າກັບເພື່ອນທີ່ເຄີຍຫລິ້ນດົນຕຣີມາດ້ວຍກັນວ່າຊີວິດຂອງລາວໄດ້ປ່ຽນແລ້ວ. ລາວກໍຍັງກ້າເວົ້າຕໍ່ໄປກັບພວກດາຣາທີ່ດັງໆ, ບາງຄົນກໍເຮັດທ່າທີບໍ່ຈິບບໍ່ງາມ, ພວກເຈົ້າຫາກຊິເຫັນດອກ. ລອງຄິດຫາຜູ້ທີ່ຫາຍໄປຈາກໂລກນີ້ໄປແຕ່ດົນນານແລ້ວ ນັ້ນລະຄືຜູ້ທີ່ພວກເຮົາຄວນຈະຟັງ.

ພວກນັກທັມໃນສມັຍນັ້ນບໍ່ຮູ້ວ່າພວກເຂົາເຫັນມັດທາຍເປັນຄົນຢ່າງໃດ: ຖ້າຈະເວົ້າເຣື່ອງພຣະເຈົ້າກ່ຽວກັບຄວາມຫວັງ ແລະການຊົງໄຖ່ນັ້ນຄືວ່າຍັງຢູ່ໄກແທ້. ຈາກນັ້ນມາພວກເຂົາກໍເຫັນຄົນເກັບພາສີທີ່ກຸງໂຣມໄດ້ແຕ່ງຕັ້ງຂຶ້ນ, ພວກເຂົາເຫັນລາວວ່າເປັນຄົນຂາຍຊາດ, ລາວໄປເຮັດວຽກນໍາສັດຕຣູ. ໃນຊີວິດຂອງມັດທາຍຕັ້ງແຕ່ເກີດມາລາວກໍບໍ່ໄດ້ຜິດໃຈກັບພວກຢິວຈັກເທື່ອ, ຄົນອິສຣາເອນທັງຫລາຍຈຶ່ງເຊື່ອແລະນັບຖືລາວ. ຖ້າຈະເວົ້າອີກແນວນຶ່ງຄົນເກັບພາສີກໍຄືຄົນບາບ ເພາະພວກເຂົາກໍມີການຕິດຕໍ່ກັບຄົນບາບແລະພວກແມ່ຈ້າງນາງເລງຕ່າງໆ. (ມທ. 2:15-16; ລກ.5:30)

ໃນເມື່ອພວກເຮົາມີຊື່ສຽງແລ້ວ ຈະດໍາເນີນຊີວິດຢ່າງໃດ ແລະຈະເອົາຊະນະໄດ້ຢ່າງໃດ?

### 1. ເບິ່ງຄືນຊີວິດເບື້ອງຫລັງ

ຖ້າຜູ້ໃດຫາກຍັງບໍ່ເຄີຍເຫັນຢູ່ໃນສັງຄົມດຽວນີ້, ຜູ້ໃດຫາກຍັງບໍ່ເຄີຍປະສົບການໃນຊີວິດແບບນີ້, ນີ້ລະຄືຊີວິດຂອງມັດທາຍ. ພຣະເຢຊູໄດ້ເລືອກເອົາລາວເຂົ້າມາຢູ່ໃນວົງຂອງພວກສາວົກ 12 ຄົນ ທີ່ໃກ້ຊິດທີ່ສຸດ, ແລ້ວພຣະອົງກໍປ່ຽນລາວໃຫ້ກາຍເປັນຄົນຮັ່ງມີ, ໃນທີ່ສຸດລາວກໍເສັຽຊີວິດຢູ່ທີ່ປະເທດເອທີໂອເປັຽໃນການໄປປ່າວປະກາດ. ກ່ອນຈະເປັນຢ່າງນັ້ນ ເພິ່ນກໍໄດ້ຂຽນປະວັດຂອງພຣະເຢຊູ ເພື່ອພວກຢິວທັງຫລາຍຈະໄດ້ອ່ານ. ເພິ່ນຢັ້ງຢືນວ່າພຣະເຢຊູແມ່ນພຣະເມຊີອາທີ່ຜູ້ທຳນວາຍໄດ້ສັນຍາໃວ້, ເພິ່ນຍັງໄດ້ອີງໃສ່ພຣະຄັມພີເດີມຫລາຍກວ່າ 40 ເທື່ອ ແລະກໍຍັງໄດ້ຊີ້ໃຫ້ເຫັນເຖິງການຄົບຖ້ວນຂອງຄຳສັນຍາຂອງຜູ້ທຳນວາຍເກືອບເຖິງ 20 ກວ່າຄົນ.

ສ່ວນຫລາຍແລ້ວມັດທາຍຈະມັກໃຊ້ພາສາຢິວຊຶ່ງແມ່ນຄຳວ່າ <u>ເມຊີອາ</u> ເລື້ອຍໆ. ເພິ່ນບໍ່ໄດ້ໃຊ້ພາສາກຣີກຫລາຍປານໃດ ຊຶ່ງພາສາກຣີກແມ່ນຄຳວ່າ <u>ຄຣິດ</u>. ເພິ່ນໃຊ້ຄຳວ່າ <u>ອານາຈັກຂອງພຣະເຈົ້າ</u> ເພື່ອຈະອະທິບາຍເຖິງພຣະບຸດຂອງພຣະເຈົ້າ. ພວກເຂົາບໍ່ເຂົ້າໃຈເຖິງການສະເດັດມາຂອງພຣະອົງ ພວກເຂົາເຂົ້າໃຈວ່າຈະເປັນຄົນທີ່ມາຈາກໂລກນີ້ ເພື່ອມາປົດປ່ອຍພວກເຂົາ. ທີ່ມັດທາຍຂຽນຢ່າງນີ້ກໍເພື່ອຢາກໃຫ້ຄົນຢິວທັງຫລາຍເຂົ້າໃຈ ເພື່ອຈະໄດ້ແກ້ໄຂຄວາມຂ້ອງໃຈຂອງພວກເຂົາ. ຄົນຢິວເຂົ້າໃຈວ່າພຣະເຢຊູກໍບໍ່ມີຫຍັງແຕກຕ່າງກັບຄົນທັງຫລາຍ ພຽງແຕ່ເປັນຜູ້ພິເສດແດ່ໜ້ອຍນຶ່ງ.

## 2. <u>ການສະເດັດມາແບບອັສຈັນ:</u> (ມັດທາຍ 1:18-25)

ໃນສມັຍສັຕວັດທຳອິດ ການແຕ່ງງານຂອງຄົນຢິວມີຢູ່ 3 ຂັ້ນຕອນ. ຂັ້ນຕອນທີນຶ່ງ: ສ້າງຄວາມລຶ້ງເຄີຍກັນແຕ່ຢູ່ໃນສາຍຕາຂອງຜູ້ເຖົ້າຜູ້ແກ່. ຂັ້ນຕອນທີສອງ: ເມື່ອເຫັນພ້ອມກັນທັງສອງຄົນແລ້ວພໍ່ແມ່ທັງສອງຝ່າຍກໍເຫັນດີ ແລ້ວກໍຈະມີພິທີໝັ້ນກັນໄວ້. ຂັ້ນຕອນທີສາມ: ເມື່ອໝັ້ນກັນແລ້ວຕ້ອງລໍໄປອີກນຶ່ງປີເພື່ອໃຫ້ເວລາແກ່ຝ່າຍຍິງແລະຝ່າຍຊາຍມີຄວາມສນິດສນົມກັນຫລາຍຂຶ້ນ ແລ້ວພິທີແຕ່ງງານຈຶ່ງຈະເກີດຂຶ້ນໄດ້.

ເມື່ອມີການແຕ່ງງານແລ້ວ ປະເພນີຂອງຊາວຢິວແມ່ນບໍ່ໄດ້ຮ້າງກັນຖ້າບໍ່ຮ້າຍແຮງຫລາຍ. ນາງມາຣີອາ ຖືພາໃນເທື່ອນີ້ຖືວ່າຮ້າຍແຮງຫລາຍທີ່ສຸດ. ນາງຈະຕ້ອງຖືກຄວ່າງກ້ອນຫີນໃສ່ໃຫ້ຕາຍ (ພຣະບັນຍັດສອງ 22: 23-29) ຄອບຄົວແລະຍາດພີ່ນ້ອງຂອງລາວກໍຈະບໍ່ມີຜູ້ໃດເຊື່ອແລະໄວ້ວາງໃຈອີກຕໍ່ໄປ

ໂຢເຊບຊາຍຜູ້ທີ່ມີຄວາມເຊື່ອໃນກົດບັນຍັດຂອງໂມເຊ (1:19) ກຳລັງຕົກຢູ່ໃນຄວາມຫຍຸ້ງຍາກໃນການຕັດສິນໃຈ. ມາຣີອາຄົງຈະໄດ້ອະທິບາຍໃຫ້ແກ່ລາວແລ້ວວ່າເປັນດ້ວຍເຫດໃດລາວຈຶ່ງຖືພາ, ແຕ່ວ່າເມື່ອເວົ້າອອກໄປແລ້ວຈະມີໃຜເຊື່ອແດ່ເພາະບໍ່ມີໃຜເຫັນ. ໂຢເຊບຈຶ່ງພະຍາຍາມທີ່ຈະຊ່ວຍນາງແບບລັບໆ ແລະຮ້າງກັບນາງແບບງຽບໆ.

ແຜນການຂອງພຣະເຈົ້າແຕກຕ່າງກັບແຜນການຂອງມະນຸດ. ພຣະເຈົ້າໄດ້ສົ່ງເທວະດາຈາກສວັນລົງມາອະທິບາຍທຸກຢ່າງເພື່ອໃຫ້ໂຢເຊບເຂົ້າໃຈ. ໃນທີ່ສຸດໂຢເຊບກໍເຂົ້າໃຈ ໄດ້ໃສ່ຊື່ໃຫ້ເດັກ ແລະກໍໄດ້ນຳພາເຂົ້າພິທີຕັດ, ຫລັງຈາກນັ້ນສາມສິບສອງວັນເພິ່ນກໍໄດ້ພາພຣະກຸມມານເຢຊູໄປປາກົດຕົວທີ່ພຣະວິຫານ.

ການໃສ່ຊື່ວ່າເຢຊູກໍ່ມີຄວາມໝາຍ  ສມັຍກ່ອນການໃສ່ຊື່ແມ່ນສຳຄັນຫລາຍຄືໄດ້ບົ່ງບອກເຖີງການມີຊີວິດ, ການມີນິດສັຍ.  ພາສາເຮັບເຣີຄຳວ່າເຢຊູນີ້ ແມ່ນມາຈາກເຢໂຮຊູວາ ຫລືໂຢຊວຍ ມີຄວາມໝາຍວ່າຢາເວ ຫລືພຣະຜູ້ຊ່ວຍ. ພວກຢິວຫວັງຈະໄດ້ເຫັນພຣະເມຊີອາມາຊ່ວຍອິສຣາເອນໄດ້ພົ້ນຈາກການປົກຄອງຂອງອຳນາດໂຣມັນ ພວກເຂົາບໍ່ໄດ້ຄິດວ່າພຣະອົງຈະລົງມາໄຖ່ບາບ. ໂຢເຊບສະແດງຄວາມເຊື່ອຂອງເພິ່ນໂດຍການເຊື່ອຟັງທູດສວັນ(ມທ.1:24)

## 3. <u>ເດັກນ້ອຍຜູ້ດຽວເຮັດໃຫ້ສອງອານາຈັກສັ່ນສະເທືອນ:</u> (ມັດທາຍ 2:1-12)

ມັດທາຍຢັ້ງຢືນວ່າພຣະເຢຊູແມ່ນພຣະເມຊີອາ ຖ້າອີງໃສ່ຄຳທຳນວາຍຂອງພຣະຄັມພີເດີມ.  ເບັດເລເຮັມໃນຢູເດັຍ (2:1), ຜູ້ທີ່ມາຢ້ຽມຢາມແມ່ນມາຈາກທິດຕາວັນອອກ (2:2) ຜູ້ປົກຄອງເຢຣູຊາເລັມມີຄວາມວຸ້ນວາຍ, ສັ່ນສະເທືອນ (2:3) ບໍ່ແມ່ນແຕ່ຜູ້ປົກຄອງເທົ່ານັ້ນ ປະຊາຊົນກໍວຸ້ນວາຍໄປດ້ວຍ. ກະສັດເຮໂຣດຜູ້ມີອຳນາດກໍຍັງວຸ້ນວາຍດ້ວຍ. ຄອບຄົວເຮືອນຊານບໍ່ເປັນຕາຢູ່ຕາກິນ ເພາະຢ້ານເສັຽຣາຊບັນລັງ.

ເພື່ອຢາກຮູ້ໃຫ້ຄັກແນ່ ເຮໂຣດໄດ້ເອີ້ນປະຊຸມຜູ້ທຳນວາຍທັງໝົດມາປະຊຸມ (2:4) ເພື່ອຈະໄດ້ຮູ້ແຈ້ງວ່າເປັນຄວາມຈິງຫລາຍສ່ຳໃດ. ໃນຂໍ້ 5ແລະ 6 ມັດທາຍໄດ້ບອກວ່າພຣະເມຊີອາຈະປະສູດທີ່ເບັດເລເຮັມ ແຂວງຢູດາຍ ແລ້ວເຮໂຣດກໍສົ່ງພວກເຂົາໄປທີ່ເບັດເລເຮັມ ແລະສັ່ງວ່າ ຖ້າພົບແລ້ວໃຫ້ກັບມາບອກເຮົາ ເພື່ອເຮົາຈະໄດ້ໄປນະມັສການພຣະອົງເໝືອນກັນ. (2:7-8)

ເມື່ອອອກຈາກເຮໂຣດແລ້ວ ພວກເຂົາກໍໄດ້ຕິດຕາມດາວໄປຫາກຸມມານ. (2:9-10)  ກົ້ມຂາບນະມັສການພ້ອມດ້ວຍຂອງຂວັນ-ຊຶ່ງເໝາະສົມກັບກະສັດ. ຫລັງຈາກນັ້ນພວກໂຫຮາຈານກໍກັບບ້ານຂອງຕົນໂດຍທາງອື່ນ.

## <u>ຄວາມໝາຍແລະພາກປະຕິບັດ</u>

ຢາໂກໂບ 1:22 ໄດ້ທ້າທາຍຜູ້ທີ່ມີຄວາມເຊື່ອທັງຫລາຍ,  ຢ່າເປັນແຕ່ຜູ້ຟັງຢ່າງດຽວ ເຮົາຕ້ອງເປັນຜູ້ປະຕິບັດຕາມດ້ວຍ. ອາດຈະມີຄຣິສຕຽນບາງຄົນບອກເຮົາວ່າຟັງຊື່ໆກໍໄດ້ດອກ, ອັນນີ້ແມ່ນຜິດ.  ພວກໂຫຣາຈານຟັງຄຳຂອງພຣະເຈົ້າ ປະຕິບັດຕາມພຣະທັມຂອງພຣະເຈົ້າ.

ເມື່ອພຣະອົງຈະມາແລ້ວຈະບໍ່ມີຜູ້ໃດຈະຫ້າມພຣະອົງໄດ້. ຈົ່ງລໍຖ້າພຣະອົງ ພຣະອົງຈະມາຢ່າງອັສຈັນ.

## <u>ຄຳຖາມ:</u>

1. ທ່ານໄດ້ຮຽນອັນໃດໃໝ່ໆແດ່ ຈາກບົດຮຽນໃນວັນນີ້?

2. ເປັນຫຍັງຈຶ່ງວ່າມີຄວາມໝາຍຫລາຍສຳລັບທ່ານ ໃນເມື່ອພຣະເຢຊູເຮັດໃຫ້ຄຳທຳນວາຍສຳເຣັດ?

3. ເມື່ອພຣະເຢຊູເຮັດໃຫ້ຄຳທຳນວາຍສຳເຣັດແລ້ວ ຄວາມເຊື່ອຂອງທ່ານເພີ້ມຂຶ້ນບໍ່?

4. ແບ່ງປັນຄວາມຄິດຂອງທ່ານເບິ່ງດູ ວ່າໂຢເຊັບເປັນຄົນຢ່າງໃດ?

5. ລອງອະທິບາຍເຖິງພວກໂຫຣາຈານເບິ່ງດູ ວ່າພວກເຂົາເປັນຄົນແນວໃດ?

*ບ.ພ.*

# ບົດຮຽນທີ 2

## ການແນະນຳກະສັດ

---

**ຂໍ້ພຣະຄຳພີສຳລັບບົດຮຽນນີ້:** ມັດທາຍ ບົດທີ 3

**ພູມຫລັງຂອງພຣະຄຳພີ:** ມັດທາຍ ບົດທີ 3

**ຈຸດສຳຄັນສຳລັບບົດຮຽນນີ້:** ຜູ້ທຳນວາຍໂຢຮັນບັບຕິສໂຕເທສນາໃຫ້ຕຽມທາງເພື່ອພຣະເຢຊູ ໃນຂະນະທີ່ທ່ານກຳລັງໃຫ້ບັບຕິສະມາ ແລະຢັ້ງຢືນວ່າພຣະອົງແມ່ນພຣະບຸດຂອງພຣະເຈົ້າ

**ຄຳຖາມເພື່ອການຄົ້ນຄວ້າ:** ໂຢຮັນບັບຕິສໂຕກ່າວຢ່າງໃດ ໃນຄຳເທສນາຕອນໃຫ້ບັບຕິສະມາ ກ່ຽວກັບການສະເດັດມາຂອງກະສັດ

**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ພວກເຮົາທັງຫລາຍເຂົ້າໃຈ ໃນຈຸດປະສົງຂອງໂຢຮັນບັບຕິສໂຕໄດ້ເທສນາ ແລະໃຫ້ບັບຕິສະມາແກ່ພຣະເຢຊູ

### ຄຳນຳ

ເມືອງ ດາລັດ, ຣັຖເທັກຊັສ ເປັນເມືອງທີ່ບໍ່ມີສະໂນຫລາຍປານໃດ. ປີນີ້ເມື່ອສະໂນໄດ້ກະໜ່ຳລົງມາໃສ່ເທັກຊັສຢ່າງແຮງ. ຂ້າພະເຈົ້າກໍໄດ້ຄ້າງຄືນຢູ່ເທັກຊັສ, ບໍ່ສາມາດທີ່ຈະຂັບຣົດອອກມາໄດ້. ໂຮງແຮມທີ່ຢູໃກ້ໆນັ້ນກໍເຕັມໄປໝົດ ດັ່ງນັ້ນບັນຫາກໍໄດ້ເກີດຂຶ້ນແກ່ຂ້າພະເຈົ້າ ບໍ່ນານພໍທີ່ໃດກໍມີຄົນໂທມາບອກວ່າ ມີຄົນນຶ່ງທີ່ບໍ່ສາມາດມາເຖິງໂຮມແຮມໄດ້. ຂອບຄຸນພຣະເຈົ້າຂ້າພະເຈົ້າຈະໄດ້ມີທີ່ຢູ່ສຳລັບຄືນນີ້ ແຕ່ຂ້າພະເຈົ້າກໍຍັງຈຳໄດ້ຢູ່ວ່າຜູ້ຍິງທີ່ເຮັດວຽກໃຫ້ຂ້າພະເຈົ້ານັ້ນມັນຍາກຫລາຍປານໃດ. ລາວໄດ້ກະທຳເພື່ອຂ້າພະເຈົ້າເໝືອນກັບຜູ້ແປງທາງ ໂທໄປຊອກໄປຕຽມໄວ້ເພື່ອຂ້າພະເຈົ້າກ່ອນທີ່ຈະມາເຖິງ.

### 1. **ຜູ້ຈັດຕຽມທາງໃຫ້ກະສັດ:** (ມັດທາຍ 3:1-6)

ຫລັງຈາກ 400 ປີຊຶ່ງເປັນຍຸກມືດງຽບ ແປວ່າບໍ່ມີຂ່າວຄາວອັນໃດເລີຍຈາກສວັນ ແລະຈາກຜູ້ທຳນວາຍ ຫລືຈານິມິດໝາຍອັນໃດທັງສິ້ນກ່ຽວກັບພຣະເຈົ້າ. ເມື່ອໂຢຮັນກ່າວເຖິງພຣະເຈົ້າຄືນອິສຣາເອນກໍພາກັນຕະລຶງງຶງງັນ ຢູ່ໃນແຄວ້ນຢູດາ. (3:1) ໂຢຮັນເທສນາຢູ່ໃນປ່າກັນດານບ່ອນທີ່ແມ່ນ້ຳຈໍແດນໄຫລໄປຕົກໃສ່ທະເລຕາຍ. ທ່ານໄດ້ກະທຳການໃຫ້ບັບຕິສະມາຊຶ່ງແຕກຕ່າງຈາກຄຣູສອນຕ່າງໆ. ຈຸດປະສົງຂອງທ່ານກໍຄືເປັນຜູ້ແປງທາງກ່ອນການສະເດັດມາຂອງພຣະເມຊີອາ. ໃນການນີ້ເພິ່ນຍັງໄດ້ຮຽກເອີ້ນໃຫ້ປະຊາຊົນທັງຫລາຍສຳນຶກຄວາມຜິດບາບ. ການສຳນຶກບາບນີ້ໝາຍຄວາມວ່າ ສຳນຶກບາບແລ້ວຕ້ອງປ່ຽນໃຈ ປ່ຽນຊີວິດໃໝ່ຢ່າງແທ້ຈິງ ເພາະພຣະອົງໃກ້ຈະມາແລ້ວ. (3:2)

ນີ້ຄືການປ່າວປະກາດແບບແປກປລາດສຳລັບຄົນທີ່ລໍຄອຍມາເປັນເວລາດົນນານ. ຢ່າງໃດກໍຕາມຄົນຍິວທັງຫລາຍຍັງເຂົ້າໃຈວ່າ ພຣະເມຊີອາຈະມາຊ່ວຍພວກເຂົາໃຫ້ພົ້ນຈາກການຂົ່ມເຫັງຈາກອຳນາດຂອງໂຣມັນ. ພວກເຂົາກໍຍັງຫວັງອີກວ່າ ພຣະເຈົ້າຈະສ້າງແຜ່ນດິນໃຫມ່ແລະສວັນໃໝ່ ແລ້ວຈະຮວບຮວມຄົນອິສຣາເອນທັງໝົດ. ງານທີ່ຍິ່ງໃຫຍ່ດັ່ງນີ້ ຈະຕ້ອງເປັນຜູ້ທີ່ມີອຳນາດບາດໃຫຍ່ ເປັນຜູ້ທີ່ມີຄວາມຮູ້ ຄວາມສາມາດຢ່າງແທ້ຈິງ ບໍ່ແມ່ນລູກຊ່າງໄມ້ທັມມະດາຢ່າງນີ້.

ໃນຂໍ້ທີ 3 ມັດທາຍໄດ້ອີງໃສ່ພຣະຄັມພີເດີມ (ອຊຢ 40:3) ສຽງຜູ້ຮ້ອງໃນຖິ່ນທຸຣະກັນດານວ່າ ຈົ່ງຕຽມເສັ້ນທາງຂອງອົງພຣະຜູ້ເປັນເຈົ້າ ຈົ່ງເຮັດໃຫ້ຮາບພຽງເພື່ອຈະໄດ້ເດີນສະດວກດີ ຈົ່ງເຮັດໃຫ້ດວງໃຈຂອງພວກເຂົາພ້ອມໃນເວລາທີ່ພຣະອົງສະເດັດມາ. ເຊັ່ນດຽວກັນກັບຜູ້ປະກາດພຣະທັມເອລີຢາ (2 ກສດ 1:8) ໂຢຮັນເປັນຄົນທີ່ຫົ່ມດ້ວຍຂົນອູດ ແລະທ່ານຈະກິນຕັກແຕນແລະນ້ຳເຜິ້ງເປັນອາຫານ. (3:4-5)

ໃນຂະນະທີ່ທ່ານຢູ່ທີ່ນັ້ນຫລາຍຄົນກໍໄດ້ຮັບສາຣະພາບຄວາມຜິດບາບຂອງຕົນເອງ ແລະຮັບສິນບັບຕິສະມາດ້ວຍການຈຸ່ມນ້ຳໝົດຕົວທີ່ແມນ້ຳຈໍແດນນັ້ນ. (3:6) ໂດຍທົ່ວໄປແລ້ວການຮັບສິນບັບຕິສະມາ ແມ່ນສຳລັບຄົນຕ່າງຊາດທີ່ຢາກມີຄວາມເຊື່ອເໝືອນຄົນຍິວ.

## 2. <u>**ຄຳສອນໃຫ້ມີການກະທຳ:**</u> (ມັດທາຍ 3:7-12)

ຜູ້ທີ່ໄດ້ຮັບຄຳສອນຂອງໂຢຮັນໃນວັນນັ້ນກໍມີ: ພວກຟາຣີຊາຍແລະພວກຊາດູກາຍ (3:7) ພວກຟາຣີຊາຍແມ່ນພວກທີ່ມີຄວາມຮູ້ ເປັນທະນາຍຄວາມແລະກໍເປັນຜູ້ທີ່ເຊື່ອໃນກົດບັນຍັດຂອງໂມເຊ ແລະອີກປະມານພັນກວ່າຄົນແມ່ນພວກຊາດູກາຍ ພວກນີ້ເປັນພວກທີ່ຮັ່ງມີ, ມີອຳນາດຢູ່ໃນວິຫານ, ພວກເປັນເຖົ້າແກ່ໃນສະພາ ແຊນແຮດຣິນ. ອາດຈະມີພວກຜູ້ນຳສາສນາປະປົນຢູ່ດ້ວຍ. ພວກນີ້ ຖ້າມີຄົນມາຟັງໂຢຮັນຫລາຍໆພວກເຂົາກໍຢ້ານລື່ນ ບາງຄົນກໍຄຽດແລະຮ້າຍໃຫ້ໂຢຮັນກໍມີ. ພວກເຂົາບໍ່ໄດ້ໃຫ້ຄວາມໂຄຣົບນັບຖືແກ່ເພິ່ນເລີຍ, ມີແຕ່ເວົ້າຖາກຖາງແລະກໍດູໝິ່ນ. ໂຢຮັນຮ້ອງພວກເຂົາວ່າພວກງູຮ້າຍ-ໝາຍຄວາມວ່າສັດຕົວນ້ອຍໆແຕ່ມີພິດຮ້າຍແຮງ. ທ່ານຍັງໄດ້ທ້າທາຍພວກຜູ້ນຳເຫລົ່ານີ້ວ່າ ພວກທ່ານຈະລອດພົ້ນດ້ວຍການຮັບບັບຕິສະມານີ້ບໍ.

ໂຢຮັນໄດ້ຮຽກເອີ້ນໃຫ້ຄົນທັງຫລາຍກັບໃຈໃໝ່ຢ່າງຈິງໃຈ ຢ່າເຊື່ອໝັ້ນວ່າຕົນເອງເປັນເຊື້ອສາຍຂອງອັບຣາຮາມແລ້ວຈະລອດພົ້ນໄດ້. ທ່ານຍັງໄດ້ເຕືອນພວກເຂົາອີກວ່າ ຂວານວາງຢູ່ຂ້າງຕົ້ນໄມ້ແລ້ວ ແລະຕົ້ນໄມ້ທີ່ບໍ່ເກີດຜົນຈະຕ້ອງຖືກຕັດຖິ້ມແລະໂຍນເຂົ້າກອງໄຟ. ບັນດາຜູ້ທີ່ສຳນຶກຜິດແທ້ຈິງນັ້ນ ໂຢຮັນໄດ້ໃຫ້ພວກເຂົາຮັບບັບຕິສະມາ ແລະເຂົາກໍພ້ອມທີ່ຈະຕຽມຕົວຕຽມໃຈຕ້ອນຮັບພຣະເມຊີອາທີ່ຈະສະເດັດມາ.

ທ່ານຮູ້ດີວ່າທ່ານບໍ່ສາມາດຈະໃຫ້ຄວາມລອດພົ້ນໃຫ້ແກ່ຝູງຊົນໄດ້ ແຕ່ຜູ້ທີ່ສະເດັດມາຕາມຫລັງເພິ່ນເທົ່ານັ້ນທີ່ຈະສາມາດໃຫ້ຄວາມພົ້ນໄດ້. ພຣະອົງຊົງຍິ່ງໃຫຍ່ ແລະທ່ານຜູ້ນັ້ນແຫລະຈະໃຫ້ທ່ານຮັບບັບຕິສະມາດ້ວຍ

ພຣະວິນຍານແລະດ້ວຍໄຟ (3:11)ໃນພຣະຫັດຂອງພຣະອົງຈະຊົງຖືກະດົ້ງ ເພື່ອຈະຕຽມຝັດຮ່ອນເຂົ້າ ແລະ ເພິ່ນຈະເຮັດໃຫ້ລານເຂົ້າຂອງເພິ່ນຮາບພຽງດີ. (3:12)

## 3. <u>ການຮັບບັບຕິສະມາຂອງກະສັດ:</u> (ມັດທາຍ 3:13-17)

ທັນມາຫາພວກນັກຕໍ່ຕ້ານແລະນັກຈິ່ມທັງຫລາຍ ໂຢຮັນບໍ່ໄດ້ໃຫ້ຄວາມສົນໃຈຫຍັງກັບພວກເຂົາມີແຕ່ປ່າວປະກາດຕໍ່ໄປເລື້ອຍໆ. ເມື່ອມາເຖິງຈຸດນີ້, ມັດທາຍຈະຫັນໄປເລົ່າເຣື່ອງທັມມະຊາດຄື ເບິ່ງແມ ພຣະເຢຊູຈະອອກມາຈາກແຂວງຄາລີເລມາຫາໂຢຮັນທີ່ແມ່ນໍ້າຈໍແດນ ເພື່ອພຣະອົງຈະໄດ້ຮັບບັບຕິສະມາ (3:13).

30 ປີທີ່ຜ່ານມາ ໃນພີ່ນ້ອງຂອງລາວ ລາວກໍເຄີຍໄດ້ຍິນເຣື່ອງກ່ຽວກັບພຣະເຢຊູ (ລູກາ 1:39-45) ກ່ຽວກັບການເກີດຂອງພຣະອົງ. ເມື່ອໂຢຮັນເຫັນພຣະເຢຊູຈະມາຫາເພິ່ນໆກໍພະຍາຍາມທີ່ຈະຫ້າມພຣະເຢຊູ ເພາະທ່ານຄິດວ່າທ່ານບໍ່ເໝາະສົມທີ່ຈະໃຫ້ບັບຕິສະມາເພິ່ນ.

ພຣະເຢຊູໄດ້ອະທິບາຍໃຫ້ແກ່ໂຢຮັນ (3:15) ຈົ່ງຍອມເຖີດເພາະສົມຄວນແກ່ເວລາແລ້ວທີ່ພວກເຮົາທັງຫລາຍຈະຕ້ອງກະທຳຕາມສິ່ງຊອບທັມ ແລ້ວໂຢຮັນກໍຍອມ. ພຣະເຢຊູເປັນຜູ້ທີ່ເຊື່ອຟັງພຣະບິດາ ພວກເຮົາກໍໄດ້ເຫັນການສຳແດງຄວາມພໍໃຈໃຫ້ພວກເຮົາເຫັນ ຫລັງຈາກທີ່ພຣະເຢຊູອອກມາຈາກນໍ້າ ຟ້າສວັນກໍເປີດອອກ ແລະພຣະວິນຍານບໍຣິສຸດຊຶ່ງເປັນນົກເຂົາກໍລົງມາປະທັບຢູ່ເທິງພຣະອົງ ແລະມີພຣະສຸຣະສຽງດັ່ງອອກມາຈາກສວັນວ່າ: ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ, ເຮົາພໍໃຈທ່ານຫລາຍ (3:16-17)

ປຶ້ມຂ່າວປະເສີດທຸກເຫລັ້ມບໍ່ວ່າຈະເປັນມັດທາຍ, ມາຣະໂກ, ລູກາແລະໂຢຮັນກໍຕາມ ແລະເຖິງຈະໃຊ້ຄຳເວົ້າແຕກຕ່າງກັນແດ່ແຕ່ທັງໝົດກໍແມ່ນກ່ຽວກັບພຣະເມຊີອາຜູ້ທີ່ທຳນວາຍໄດ້ກ່າວໄວ້. ເຖິງແມ່ນຍັງມີຫລາຍຄົນທີ່ຍັງບໍ່ທັນຮູ້ຈັກກັບພຣະອົງກໍຕາມ, ພຣະທັມຕອນນີ້ກໍຄົງຈະເຮັດໃຫ້ພວກເຮົາຫລາຍຄົນຫມົດຄວາມສົງສັຍໄດ້.

## <u>ຄວາມໝາຍແລະພາກປະຕິບັດ</u>

ກະສັດໃນສມັຍເດີມເມື່ອຈະເດີນທາງໄປໃສກໍຕາມ ຈະມີຄົນໄປແປງທາງກ່ອນແລະກໍໄດ້ປະກາດໃຫ້ຄົນທົ່ວໄປຮູ້ຈັກ. ໂຢຮັນຄົນນີ້ໄດ້ມາເພື່ອແປງທາງໃຫ້ພຣະເມຊີອາ, ແລະທ່ານໄດ້ຂໍຮ້ອງໃຫ້ພວກເຮົາຕຽມຕົວຕຽມໃຈເພື່ອຈະໄດ້ຮັບເອົາພຣະເຢຊູ ເພື່ອພຣະອົງຈະໄດ້ກ້າວເຂົ້າສູ່ຫົວໃຈຂອງພວກເຮົາທຸກຄົນ.

ທ່ານແລະຂ້າພະເຈົ້າຜູ້ທີ່ໄດ້ຮັບພຣະວິນຍານບໍຣິສຸດອົງດຽວກັນ. ເມື່ອພວກເຮົາຫາກເຊື່ອວ່າພຣະເຢຊູໄດ້ທົນທຸກທໍຣະມານ ຕາຍແທນພວກເຮົາ. ພຣະອົງໄດ້ປະທັບຕາຮັບເອົາພວກເຮົາໃຫ້ເປັນລູກຂອງພຣະອົງ. (ອຟຊ. 4:30; ຣມ. 8:6) ພວກເຮົາເປັນສົມບັດຂອງກະສັດ (1ປຕ 2:9). ໂດຍຜ່ານການຮັບສິນບັບຕິສະມາແລ້ວ ພວກເຮົາແມ່ນໄດ້ຖືກໄຖ່ແລ້ວ ແລະໄດ້ຮັບເອົາພຣະວິນຍານບໍຣິສຸດແລ້ວ. ພວກເຮົາເຊື່ອໃນການປະຕິບັດໃນຊີວິດຂອງພຣະອົງໃນການເປັນຕົວຢ່າງໃນການຮັບບັບຕິສະມາ.

**<u>ຄຳຖາມ:</u>**

1. ເປັນຫຍັງຜູ້ທີ່ເຊື່ອທັງຫລາຍຈຶ່ງຕ້ອງຮັບສິນບັບຕິສະມາ? ແມ່ນຫຍັງທີ່ເຮັດໃຫ້ທ່ານມີຄວາມແຕກຕ່າງໃນຊີວິດ? ບັບຕິສະມາມີຄວາມສຳຄັນຢ່າງໃດ?

2. ໃນຄຣິສຕະຈັກຂອງທ່ານ ຖືວ່າການບັບຕິສະມາສຳຄັນບໍ່? (ມີຫ້ອງສອນສຳລັບຜູ້ທີ່ເຊື່ອໃໝ່ ກ່ອນທີ່ຈະຮັບບັບຕິສະມາບໍ່? ໄດ້ຈຳກັດຂອບເຂດອາຍຸບໍ່?)

3. ຖ້າທ່ານຢູ່ໃນສະພາບຂອງໂຢຮັນ ທ່ານຈະເວົ້າຢ່າງໃດກັບພວກຟາຣີຊາຍ ແລະພວກຊາດູກາຍ?

4. ເມື່ອທ່ານໄດ້ເຫັນພາບການຮັບບັບຕິສະມາຂອງພຣະເຢຊູແລ້ວ ທ່ານຄິດຢ່າງໃດ? ພວກເຮົາເດຈຳເປັນຕ້ອງເຮັດບໍ່?

5. ພວກເຮົາຈະມີຄວາມຮັບຜິດຊອບຢ່າງໃດຕໍ່ຜູ້ທີ່ມີຄວາມເຊື່ອແຕກຕ່າງກັນ? (ບັບຕິສະມາແບບພົມນ້ຳ, ບັບຕິສະມາໃຫ້ເດັກອ່ອນ)

*ບ.ພ.*

# ບົດຮຽນທີ 3

## <u>ການທົດລອງກະສັດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມັດທາຍ 4: 1-11

**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 4:1-11

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຢຊູເອົາຊະນະການທົດລອງດ້ວຍຂໍ້ພຣະທັມ ເພື່ອຜູກມັດຊາຕານ.

**<u>ຄຳຖາມ ເພື່ອການຄົ້ນຄວ້າ:</u>** ພວກເຮົາຈະຮຽນບົດຮຽນຈາກພຣະເຢຊູຢ່າງໃດໃນການເອົາຊະນະຊາຕານ

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະແນະນຳໃຫ້ໃຊ້ເປັນກຸນແຈທີ່ຈະເອົາຊະນະມານ ແລະເປັນການເຊື່ອຟັງພຣະເຈົ້າ

### <u>ຄຳນຳ</u>

ຖ້າຄວາມບາບທາກບໍ່ດີໃຈມັນຈະບໍ່ທົດລອງພວກເຮົາເດັດຂາດ. ຖ້າຄວາມບາບມັນບໍ່ຢາກທ້າທາຍຕໍ່ຄວາມປາຖນາຂອງພວກເຮົາ ພວກເຮົາຈະບໍ່ມີເຣື່ອງທີ່ຈະສົນທະນາກັນກ່ຽວກັບມານຊາຕານ. ມະນຸດພວກເຮົາຈະພົບກັບການເຢົ້າຍວນຢູ່ຕລອດເວລາ. ບໍ່ເວລາໃດກໍເວລານຶ່ງ, ຫລາຍຄົນກໍຕົກຢູ່ໃນບ້ວງແຮ້ວຂອງມັນ, ບາງຄົນກໍດີ້ນລົນອອກມາໄດ້ຢ່າງລອດຕາຍ. ທ່ານຄົງຈະເຄີຍເຫັນຊີວິດຂອງຄົນທີ່ລອດຕາຍມາໄດ້, ບາງຄົນກໍກາຍເປັນບ້າ, ບາງຄົນກໍກາຍເປັນຈິດພິການ ຊີວິດຂອງເຂົາແລະຄອບຄົວບໍ່ມີອະນາຄົດ ແລະໃນທີ່ສຸດກໍທຳລາຍຕົນເອງໄປ.

ການທົດລອງນີ້ເປັນຈິງ. ການທົດລອງນີ້ມີອຳນາດ ເມື່ອພວກເຮົາຍອມແພ້ພວກເຮົາກໍເດີນທາງເຂົ້າສູ່ຄວາມຫາຍະນະ. ຊາຕານມີເຄື່ອງມືທີ່ຄົບຖ້ວນທີ່ຈະຫ້າງບ້ວງແຮ້ວໃສ່ພວກເຮົາ ຈະເປັນດ້ານສມອງ, ດ້ານຮ່າງກາຍ, ດ້ານຊີວິດຈິດໃຈ ແລະດ້ານຈິດວິນຍານກໍຕາມ. ມັດທາຍບົດທີ 4 ບອກພວກເຮົາວ່າເຖິງແມ່ນພຣະເຈົ້າມັນກໍຍັງມາທົດລອງ.

## 1. <u>ພວກເຮົາຢາກໄດ້ຫຍັງ-ສຳລັບຮ່າງກາຍ:</u> (ມັດທາຍ 4:1-4)

ຫລັງຈາກທີ່ໄດ້ຮັບສິນບັບຕິສະມາແລ້ວ ພຣະວິນຍານບໍຣິສຸດກໍໄດ້ເຈີມພຣະອົງແລ້ວ ແລະພຣະອົງກໍໄດ້ຖືກປະກາດວ່າພຣະອົງເປັນບຸດທີ່ຮັກຂອງເຮົາແລ້ວ ພຣະວິນຍານບໍຣິສຸດກໍໄດ້ນຳພາພຣະອົງເຂົ້າໄປໃນປ່າກັນດານເພື່ອທົດລອງ (4:1) ພຣະເຈົ້າບໍ່ໄດ້ທົດລອງພຣະເຢຊູ (ຢກບ.1:13) ແຕ່ມານເປັນຜູ້ທົດລອງ. 40 ວັນພຣະເຢຊູບໍ່ໄດ້ຮັປທານອາຫານ (4:2) ການອົດອາຫານໃນສມັຍເກົ່າໄດ້ປະຕິບັດກັນຫລາຍ ແຕ່ໃນສມັຍນີ້ກໍຍັງມີຢູ່. ບາງຄົນກໍອົດແບບອອກໜ້າອອກຕາ ບາງຄົນກໍອົດແບບງຽບໆໂດຍສ່ວນຕົວ.

ໃນການອົດນີ້ ແນ່ນອນກໍຕ້ອງມີຄວາມຫິວ, ອົງພຣະເຢຊູກໍຫິວເໝືອນກັນ. ຊາຕານກໍເຂົ້າໂຈມຕີທັນທີ ພວກເຮົາກໍເຊັ່ນດຽວກັນ ຊາຕານມັກຈະໂຈມຕີຈຸດອ່ອນຂອງພວກເຮົາ. ເວລານີ້ຊາຕານເຫັນຈຸດອ່ອນຂອງພຣະເຢ

ຊູແລ້ວມັນກໍໂຈມຕີທັນທີ. ຖ້າທ່ານເປັນບຸດຂອງພຣະເຈົ້າ ຈົ່ງສັ່ງກ້ອນຫີນເລົ່ານີ້ໃຫ້ກາຍເປັນອາຫານ (4:3) ພຣະເຢຊູຖືກທົດລອງທຸກຮູບການ, ນີ້ເປັນພຽງຄັ້ງທໍາອິດເທົ່ານັ້ນ, ຖ້າພວກເຮົາຫາກຕົກຢູ່ໃນສະພາບການຢ່າງນີ້ ພວກເຮົາຈະເຮັດຢ່າງໃດ. ພວກເຮົາຄວນຈະຢູ່ໃນຂອບເຂດຂອງພຣະເຈົ້າ ຫລືພວກເຮົາຈະອອກຈາກຂອບເຂດຂອງພຣະເຈົ້າ.

ອາຫານເປັນສິ່ງສໍາຄັນສໍາລັບຊີວິດ ເປັນສິ່ງເຮັດໃຫ້ຮ່າງກາຍຂອງພວກເຮົາມີເຫື່ອແຮງແລະຈະເຣີນເຕີບໂຕ. ຊາຕານໄດ້ທ້າທາຍໃຫ້ລູກຂອງພຣະເຈົ້າປ່ຽນກ້ອນຫີນໃຫ້ກາຍເປັນອາຫານ. ພຣະອົງເຮັດໄດ້ບໍ່? ແນ່ນອນພຣະອົງເຮັດໄດ້ ພຣະອົງເຮັດໃຫ້ເຂົ້າຈີ່ຫ້າກ້ອນແລະປານ້ອຍສອງຕົວລ້ຽງຄົນ 5000 ຄົນໄດ້ ແຕ່ພຣະອົງຈະບໍ່ເຮັດສິ່ງໃດສິ່ງນຶ່ງເພື່ອຄວາມພໍໃຈຂອງຕົນເອງເທົ່ານັ້ນ. ພຣະອົງມີອໍານາດພຽງພໍຈາກພຣະເຈົ້າ ທີ່ຈະເຮັດອັນໃດກໍໄດ້. ພຣະອົງຍັງກ່າວໃນຂໍ້ 4 ວ່າ ມະນຸດຈະບໍາລຸງຊີວິດດ້ວຍອາຫານຢ່າງດຽວກໍບໍ່ໄດ້ ແຕ່ບໍາລຸງດ້ວຍພຣະຄໍາຂອງພຣະເຈົ້າທຸກຄໍາທີ່ອອກມາຈາກພຣະໂອດຂອງພຣະເຈົ້າ.

## 2. <u>ພວກເຮົາຊອກຫາຫຍັງ-ຕໍາແໜ່ງໜ້າທີ່ແລະສິດອໍານາດ:</u> (ມັດທາຍ 4:5-7)

ຊາຕານຢາກທົດລອງພຣະເຢຊູເຖິງການຢາກເປັນໃຫຍ່ ຢາກໃຫ້ເທວະດາມາຮັບໃຊ້ພຣະອົງ. ແລ້ວພຍາມານກໍນໍາພຣະອົງຂຶ້ນໄປທີ່ສູງສຸດ, ໃຫ້ພຣະອົງປະທັບຢູ່ຍອດຫລັງຄາພຣະວິຫານ (4:5-6) ແລ້ວມັນກໍໃຊ້ພຣະຄັມພີທົດລອງພຣະອົງວ່າ ຖ້າທ່ານເປັນລູກຂອງພຣະເຈົ້າ ຈົ່ງໂຕນລົງໄປເຖີດ ເພາະມີຄໍາທີ່ຂຽນໄວ້ແລ້ວວ່າພຣະອົງຈະຮັບສັ່ງໃຫ້ເທວະດາມາຮັບເອົາທ່ານໄວ້. ພຣະເຢຊູກໍໄດ້ຕອບມານຕໍ່ໄປວ່າ ຢ່າທົດລອງອົງພຣະຜູ້ເປັນເຈົ້າຂອງທ່ານ. ຊາຕານໄດ້ຟັງຄໍາຕອບຂອງພຣະເຢຊູໃນການທົດລອງຄັ້ງແລກ, ພຣະອົງໃຊ້ພຣະຄໍາຂອງພຣະເຈົ້າ ມັນຈຶ່ງໃຊ້ຂໍ້ພຣະຄັມພີເໝືອນກັນ.

ການທົດລອງນີ້ ແມ່ນເພື່ອຢາດທົດລອງວ່າເຮົາຢາກມີອໍານາດບາດໃຫຍ່ບໍ່ ມະນຸດສ່ວນຫລາຍມັກຢາກເປັນຄົນທີ່ມີຄຸນຄ່າ, ຢາກມີອໍານາດ ຢາກໃຫ້ມີຄົນນັບໜ້າຖືຕາ ແລະຢາກມີກໍາລັງວັງຊາ, ຄວາມຢາກຕ່າງໆທີ່ກ່າວມານີ້. ຖ້າພວກເຮົາຫາກໄຝ່ຝັນນໍາສິ່ງເຫລົ່ານີ້ກໍເປັນການຜິດພາດທີ່ຍິ່ງໃຫຍ່ໃນຊີວິດ. ພຣະເຢຊູຮູ້ດີເພາະພຣະອົງເປັນບຸດຂອງພຣະເຈົ້າ ແຕ່ພຣະອົງກໍຍອມສະລະແລ້ວລົງມາຮັບທຸກທໍຣະມານເພື່ອໄຖ່ຄວາມບາບໃຫ້ມະນຸດ. ພຣະເຢຊູບໍ່ຕ້ອງໃຫ້ໃຜເຫັນດີນໍາ ເພາະພຣະອົງເປັນບຸດຂອງພຣະເຈົ້າແລະເປັນພຣະເຈົ້າຢູ່ແລ້ວ

## 3. <u>ພວກເຮົາປາຖນາຫຍັງ-ອໍານາດແລະການຄຸ້ມຄອງ:</u> (ມັດທາຍ 4:8-11)

ອີກຄັ້ງນຶ່ງ ພຍາມານໄດ້ນໍາພຣະອົງຂຶ້ນໄປເທິງຍອດພູເຂົາອັນສູງ ແລ້ວກໍທູນພຣະອົງວ່າ ຖ້າທ່ານຈະຂາບລົງນະມັສການເຮົາ ເຮົາຈະເອົາສິ່ງທັງໝົດນີ້ໃຫ້ແກ່ເຈົ້າ. ພຣະເຢຊູຈຶ່ງຕອບມັນວ່າ ອ້າຍຊາຕານຈົ່ງໄປໃຫ້ພົ້ນເພາະພຣະຄັມພີຂຽນໄວ້ວ່າ ຈົ່ງນະມັສການອົງພຣະຜູ້ເປັນເຈົ້າ ແລະປະຕິບັດພຣະອົງແຕ່ພຽງອົງດຽວ. ແລ້ວມານກໍໜີໄປ. ພຣະເຢຊູເປັນພຣະເຈົ້າ ແຜ່ນດິນໂລກແລະສວັນເປັນຂອງພຣະອົງຢູ່ແລ້ວ, ຊາຕານຍັງມາບອກວ່າຖ້າທ່ານຈະຂາບເຮົາ ເຮົາຈະມອບສິ່ງເຫລົ່ານີ້ໃຫ້ແກ່ທ່ານ. ພຣະເຢຊູຮູ້ສິ່ງເຫລົ່ານີ້ດີວ່າເປັນຂອງ

ຊົ່ວຄາວ.  ຊາຕານຢາກຈະເອົາສິ່ງຊົ່ວຄາວມາແລກກັບສິ່ງຕລອດໄປເປັນນິດຄືງຈະເປັນໄປບໍ່ໄດ້, ຜົນສຸດທ້າຍພຣະເຢຊູກໍໄດ້ອອກຄໍາສັ່ງໃຫ້ມານຊາຕານໜີໄປຈາກພຣະອົງ,   ເມື່ອມານຈາກໄປແລ້ວເທວະດາກໍໄດ້ມາບົວລະບັດພຣະອົງ (ມທ. 4:11) ຕອນນີ້ເປັນຄັ້ງແຣກທີ່ພຣະເຢຊູໃຊ້ເວລາຢູ່ກັບມານຊາຕານດົນນານ.

## <u>ຄວາມໝາຍແລະພາກປະຕິບັດ</u>

ພວກເຮົາກໍເປັນມະນຸດຊຶ່ງປະເຊີນກັບການທົດລອງເຊັ່ນດຽວກັບພຣະເຢຊູ. ໃນທຸກກໍຣະນີທຸກເວລາທຸກໂອກາດ ຊາຕານຈະທົດລອງພວກເຮົາ. ຖ້າຈະເວົ້າແລ້ວ ການທົດລອງກໍໄດ້ມີມາຕັ້ງແຕ່ປະຖົມມະການ (ປຖກ. 3)ຈົນເຖິງປັດຈຸບັນນີ້.  ການທົດລອງມີມາຊ້ານານແລ້ວ ແມ່ນຄໍາຖາມທີ່ວ່າພຣະເຈົ້າຮູຈັກທຸກສິ່ງທຸກຢ່າງອີ່ຫລືບໍ່? ພຣະເຈົ້າດີອີ່ຫລືບໍ່? ພຣະເຈົ້າຮັກສາຄໍາສັນຍາໄດ້ອີ່ຫລືບໍ່?

ພຣະເຢຊູຕີທົ່ວມານຊາຕານດ້ວຍຂໍ້ພຣະຄັມພີ ພວກເຮົາກໍສາມາດເຮັດເໝືອນພຣະເຢຊູໄດ້ແມ່ນບໍ່? ທ່ານແລະຂ້າພະເຈົ້າບໍ່ສາມາດຫລີກຈາກມານຊາຕານໄດ້  ສິ່ງດຽວທີ່ເຮັດໄດ້ກໍຄືພວກເຮົາຈະສູ້ຢ່າງໃດ? (ຢກບ. 4:7) ການທົດລອງແມ່ນໂອກາດດີທີ່ຈະເຮັດໃຫ້ພວກເຮົາມີໂອກາດສໍາແດງອໍານາດຂອງພຣະເຈົ້າ

## <u>ຄໍາຖາມ:</u>

1. ເວລາໃດທີ່ທ່ານຮູ້ສຶກວ່າ ທ່ານຖືກທົດລອງ?

2. ເມື່ອທ່ານຮູ້ສຶກວ່າທ່ານຖືກທົດລອງແລ້ວ ຈົ່ງຂໍເວລາຈັກໜ້ອຍນຶ່ງ ແລ້ວໃຫ້ໃຊ້ຂໍ້ພຣຄັມພີ. ແລະກໍໃຫ້ໃຊ້ຂໍ້ທີ່ຖືກຕ້ອງ.

3. ການທົດລອງທີ່ຮ້າຍແຮງທີ່ສຸດ ສໍາຫລັບຮ່າງກາຍຄືອັນໃດ?

4. ມີບາດກ້າວໃດແດ່ ເພື່ອຈະໃຫ້ຄົນທັງຫລາຍຮັບຮູ້ໃນຄວາມເປັນໃຫຍ່?

5. ເຮົາຈະຕາມບາດກ້າວຂອງຊາຕານ ຫລືບາດກ້າວຂອງພຣະເຈົ້າ?

6. ມີຫຍັງເປັນສິ່ງນໍາພາພຣະເຢຊູ,  ແລະນໍາພາທ່ານເວລາທ່ານຖືກການທົດລອງ?

7. ເວລາທ່ານຖືກການທົດລອງທ່ານຄວນຈະເພິ່ງພາອັນໃດ?

*ບ.ພ.*

# ບົດຮຽນທີ 4
## ເຄັດລັບທີ່ຈະໃຫ້ພໍໃຈ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມັດທາຍ 5:1-12

**ພູມຫລັງຂອງພຣະຄັມພີ:** ມັດທາຍ 5:1-12

**ຈຸດສໍາຄັນຂອງບົດຮຽນນີ້:** ໂຄງຮ່າງບົດເທສນາທີ່ຈ້າຍພູເປັນຫົນທາງນໍາໄປເຖິງຄວາມພໍໃຈໃນອົງພຣະເຢຊູຄຣິດ.

**ຄໍາຖາມເພື່ອການຄົ້ນຄວ້າ:** ເຮັດຢ່າງໃດເພື່ອຈະເຮັດໃຫ້ມີຄວາມພໍໃຈໃນອົງພຣະຄຣິດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະສະແດງອອກເຖິງຄໍາສອນໃນບົດເທສນາທີ່ຈ້າຍພູນັ້ນເປັນທາງນໍາໄປເຖິງຄວາມພໍໃຈໃນອົງພຣະເຢຊູຄຣິດ.

## ບົດນໍາ

ອົງພຣະເຢຊູໄດ້ໜູນໃຈໃຫ້ຜູ້ໄດ້ຮັບຄວາມທຸກທໍຣະມານເບິ່ງຂ້າມສະພາບການແຕ່ລະວັນດ້ວຍການປັກຕາຕໍ່ພຣະເຈົ້າຜູ້ເປັນຫ່ວງແລະຮູ້ຈັກເຖິງບັນຫານັ້ນດີ ພຣະອົງຈະອວຍພຣະພອນຕໍ່ຄວາມທຸກຂອງພວກເຂົາ.

ບົດເທສນາຂອງອົງພຣະເຢຊູທີ່ຈ້າຍພູນັ້ນໃນບົດ 5-7 ບົດດັ່ງກ່າວນີ້ຍັງໄດ້ມີຄໍາສອນເພື່ອໃຫ້ດໍາລົງຊີວິດດ້ວຍຄວາມເຊື່ອຖ້າມກາງໂລກອັນສັບສົນນີ້. ຄໍາສອນໄດ້ເລີ້ມຕົ້ນດ້ວຍຄວາມສຸກ ແລະຈົບລົງດ້ວຍຄໍາເຕືອນຕ່າງໆທີ່ມີຢູ່ໃນປື້ມພຣະບັນຍັດທີ 2. ທີ່ກ່າວວ່າໂມເຊແລະອົງພຣະເຢຊູເປັນຜູ້ກາງໃນກົດບັດຍັດ.

ໃນບົດ 5 ເປັນບົດເທສນທີ່ຈ້າຍພູນີ້ ແມ່ນເຣື່ອງຄວາມສຸກຂອງຄົນທີ່ເຮັດຕາມກົດບັດຍັດຂອງພຣະເຈົ້າ. ໃນປື້ມເພງສັຣເສີນແລະສຸພາສິດໄດ້ກ່າວເຖິງເຣື່ອງນີ້ຫລາຍທີ່ສຸດ. ຄໍາເວົ້າວ່າຄວາມສຸກນີ້ສາມາດແປໄດ້ວ່າ “ພໍໃຈຢ່າງເຕັມລົ້ນ” ຄໍາສອນຢ່າງນີ້ອາດຜິດກັບກົດຂອງຫົວໜ້າສາສນາຢິວເພາະພວກເຂົາໄດ້ສອນວ່າ ຜູ້ມີການສຶກສາດີເປັນຜູ້ຕົ້ນໃນການເຂົ້າໄປເຖິງຣາຊອານາຈັກຂອງພຣະເຈົ້າ ແລະຄົນທຸກຍາກຈະເປັນຄົນສຸດທ້າຍ. ອົງພຣະເຢຊູໄດ້ສອນຢ່າງແຈ່ມແຈ້ງວ່າຜູ້ທີ່ເຂົ້າມາຫາພຣະອົງດ້ວຍມືເປົ່າຈະໄດ້ເຂົ້າໄປໃນສວັນ ບໍ່ແມ່ນຜູ້ຖືວ່າຕົນເອງດີເຮັດໃຫ້ພຣະເຈົ້າຊອບພຣະທັຍ.

### 1. ຄວາມສຸກເປັນຂອງຄົນຜູ້ຍາກຈົນ: (ມັດທາຍ 5:3-6)

ອົງພຣະເຢຊູໄດ້ເລີ້ມບົດເທສນາໂດຍບໍ່ໄດ້ປະນາມຄົນບາບ ແຕ່ໄດ້ປະກາດເຖິງຄວາມສຸກຂອງຜູ້ທີ່ເປັນທຸກຕ່າງໆນາໆ ໂດຍສະເພາະແລ້ວແມ່ນ “ຜູ້ຍາກຈົນດ້ານຈິດວິນຍານ.”(5:3). ໃຫ້ເຂົ້າໃຈວ່າຄົນມາຟັງເທສນາໃນວັນນັ້ນສ່ວນຫລາຍເປັນຄົນທຸກຍາກດ້ານເສຖກິດ. ຄົນທີ່ບໍ່ມີວຽກເຮັດຍອມມັກຂໍທານໂດຍບໍ່ມີທາງອອກເພື່ອຫາລ້ຽງຊີບ ຈຶ່ງເຮັດໃຫ້ພວກເຮົາກາຍເປັນຄົນທຸກທັງຮ່າງກາຍແລະຈິດວິນຍານ.

ໃນສມັຍອົງພຣະເຢຊູນັ້ນຄົນທັງຫລາຍບໍ່ໄດ້ຖືວ່າຄົນທຸກເປັນຄົນມີຄວາມສຸກແຕ່ຢ່າງໃດ. ຄົນທຸກດ້ານຈິດວິນຍານທີ່ບໍ່ຂາດຄວາມເຊື່ອ ແຕ່ຍອມຮັບຮູ້ວ່າຕົນມີຄວາມຕ້ອງການດ້ານວິນຍານຈິດ. ເປັນການຍາກທີ່ຈະມອງເຫັນຄວາມຕ້ອງການດ້ານຈິດວິນຍານເມື່ອຕົນເອງມີທຸກຢ່າງ. ຄົນທີ່ເປັນທຸກດ້ານຈິດວິນຍານນັ້ນແຕກຕ່າງເພາະເພິ່ງຕົນເອງບໍ່ໄດ້ ເຫັນວ່າຕົນເອງຂາດເຂີນຈຶ່ງມີຄວາມຕ້ອງການພຣະເຈົ້າ.

ການທີ່ເປັນຄົນທຸກຍາກດ້ານຈິດວິນຍານນີ້ຕ້ອງຮູ້ວ່າຕົນເອງບໍ່ມີອັນໃດເລີຍ ແລະມີຄວາມຕ້ອງການທຸກຢ່າງ. ຄົນຢ່າງນີ້ຍອມຮັບວ່າຕົນເອງຊ່ອຍຕົນເອງບໍ່ໄດ້. ອົງພຣະເຢຊູໄດ້ປະກາດວ່າຜູ້ທີ່ຍອມຮັບວ່າຕົນເອງບໍ່ສາມາດຊ່ອຍຕົນເອງໄດ້ ໃນທີ່ສຸດພວກເຂົາຈະໄດ້ຮັບຣາຊແຜນດິນຂອງພຣະເຈົ້າ. ຄຳສອນໃນບົດເທສນາທີ່ຈ້າຍພູເວົ້າເຖິງໄດ້ຮັບຄວາມສຸກທັນທີໃນຂໍ້ຕົ້ນແລະຕອນປາຍ, ແຕ່ຂໍ້ອື່ນໆໄດ້ກ່າວເຖິງໄດ້ຮັບຄວາມສຸກເມື່ອຄົນມີຄວາມເຂົ້າໃຈໃນເວລາຕໍ່ໄປ.

ຄວາມສຸກອັນທີສອງນັ້ນພຣະເຢຊູໄດ້ປະກາດວ່າເປັນຂອງ<u>ຄົນໂສກເສົ້າ.</u> ການທີ່ໃຊ້ຄຳເວົ້າວ່າໂສກເສົ້ານັ້ນໝາຍເຖິງ “ຮ້ອງໄຫ້ສຽງດັງ” ໃນພາສາກຣີກແລ້ວແມ່ນຄວາມໂສກເສົ້າໃນສ່ວນເລິກ. ມີຫລາຍຢ່າງເຮັດໃຫ້ໂສກເສົ້າ-ຄວາມຜິດບາບສ່ວນຕົວ, ສູນເສັຽ, ຖືກຂົ່ມເຫງ, ຫລືເປັນຫ່ວງເປັນໃຍໃນສມັຍນັ້ນເຂົ້າໃຈດີເຖິງການເປັນທຸກ ເພາະການຕາຍນັ້ນເກີດຂຶ້ນເລື້ອຍໆ ຕໍ່ຄົນທີ່ມີອາຍຸບໍ່ເກີນ 25 ປີ ພວກອິສຣາເອນຍັງຢູ່ໃນການປົກຄອງຂອງໂຣມ ແລະພວກເຂົາລໍຖ້າຢາກມີອິສລະເປັນຊາດຂອງຕົນເອງ. ຄ□າສອນຂອງອົງພຣະເຢ ຊູໄດ້ສັນຍາວ່າຈະປະທານຄວາມສຸກໃຫ້ແກ່ຜູ້ມີຄວາມໂສກເສົ້າ.

ພຣະເຈົ້າສັນຍາວ່າຈະໃຫ້ກຳລັງໃຈແກ່ຜູ້ທີ່ທຸກໂສກ ໃນໂລກນີ້ຄົນເຮົາຈະໄດ້ຮັບເລົ້າໂລມຈິດໃຈ ແຕ່ໃນທີ່ສຸດພວກເຮົາຈະໄດ້ຢູ່ໃນຣາຊອານາຈັກຂອງພຣະເຈົ້າຊຶ່ງເປັນບ່ອນບໍ່ມີຄວາມທຸກໂສກ. ອົງພຣະເຢຊູກໍໄດ້ກ່າວວ່າພຣະເຈົ້າໄດ້ສະຖິດຢູ່ກັບຄົນທຸກໂສກ; ວັນນຶ່ງພຣະອົງຈະໄດ້ເຊັດນ້ຳຕາໃຫ້ຕລອດໄປ.

ກຸ່ມທີສາມທີ່ອົງພຣະເຢຊູໄດ້ສອນນັ້ນແມ່ນ<u>ຜູ້ມີໃຈອ່ອນຫວານ.</u> ຄຳແປຂອງຄຳອ່ອນຫວານແມ່ນ “ອ່ອນໂຍນ ຫລືສຸພາບດີ.” ຕາມບົດເພງສັຣເສີນ 37:11, ອ່ອນແອໝາຍຄວາມວ່າ “ບໍ່ມີພລັງ ບໍ່ສາມາດຊ່ອຍຕົນເອງໃຫ້ມີຊີວິດມຸ້ງໜ້າໄປໄດ້.” ອົງພຣະເຢຊູກ່າວເຖິງຄຳວ່າອ່ອນໂຍນເພື່ອອະທິບາຍເຖິງຄົນທຸກໂສກ ຜູ້ຖືກກົດຂີ່ ບໍ່ແມ່ນຄົນຮັ່ງມີ ເປັນເຈົ້ານາຍ ຄົນທຸກໂສກຈະໄດ້ຮັບໂລກເປັນມໍຣະດົກ. ແມ່ນແທ້ຄົນທຸກບໍ່ສາມາດຊື້ດິນໄດ້ ແຕ່ວັນນຶ່ງພຣະເຈົ້າຈະປະທານດິນໃຫ້ຕາມພຣະສັນຍາເໝືອນກັບພວກອິສຣາເອນໄດ້ຮັບແຜ່ນດິນພຣະສັນຍາເປັນມໍຣະດົກ.

ຄຳສອນຕໍ່ມາເວົ້າເຖິງຄວາມສຸກຕໍ່ “<u>ຄົນຜູ້ອຶດຫິວຄວາມຊອບທັມ</u>” ເພາະວ່າພຣະເຈົ້າຈະໃຫ້ອີ່ມບໍຣິບູນ (ມທ 5:6). ພຣະເຢຊູໄດ້ເອົາຄຳເວົ້າວ່າຫິວເຂົ້າແລະນ້ຳປະສົບກັນ ເພື່ອເນັ້ນໃຫ້ເຂົ້າໃຈດີເພາະຄົນທີ່ມາຟັງນັ້ນໄດ້ປະສົບມາກ່ອນໃນຊີວິດ. ຄົນຈີນໃຊ້ເວລາພົບກັນຄັ້ງທຳອິດພວກເຂົາຖາມກັນເຖິງເຣື່ອງນີ້ເພາະພວກເຂົາຖືວ່າການກິນແລະດື່ມນັ້ນສຳຄັນ. ເໝືອນຄົນຊອກຫາສິນທັມຖ້າຄົນໃດຫິວກໍຈະໄດ້ພົບ. ໂລກນີ້ເຕັມໄປດ້ວຍຄວາມບໍ່ທ່ຽງທັມແລະອົງພຣະເຢຊູສັນຍາວ່າຈະປະທານໃຫ້ຜູ້ຊອກຫາ. ສິ່ງທີ່ຄົນອື່ນເຮັດຜິດນັ້ນຈະໄດ້ຖືກຍົກເລີກ ແລະພຣະເຈົ້າເອງຈະເປັນຜູ້ຊ່ອຍປະທານສິ່ງຕ້ອງການໃຫ້ແກ່ຜູ້ຫິວໂຫຍຢ່າງທ່ຽງທັມ.

## 2. <u>**ຄວາມສຸກເປັນຂອງຄົນຜູ້ເຮັດດີຕໍ່ຄົນອື່ນ:**</u> (ມັດທາຍ 5:7-9)

ອົງພຣະເຢຊູໄດ້ເວົ້າກັບຄົນອື່ນໆຜູ້ບໍ່ສາມາດປ່ຽນແປງສະພາບຄວາມທຸກຍາກໄດ້. ພຣະອົງຈຶ່ງກ່າວວ່າຜູ້ໃດທີ່ມີຄວາມຮັກແລະເມດຕາອອກມາຕໍ່ຄົນອື່ນຈະໄດ້ຮັບສິ່ງນັ້ນຕອບແທນ. ພຣະເຢຊູໄດ້ໃຊ້ຄຳເວົ້າເມດຕາຈາກພຣະຄັມພີເດີມ ເຮເຊັດ ຊຶ່ງພາສາອັງກິດບໍ່ມີຄວາມໝາຍຄົບຖ້ວນ ເພາະເປັນຄຳເວົ້າທີ່ພຣະເຈົ້າໄດ້ສັນຍາດ້ວຍຄວາມຮັກຕໍ່ພວກອິສຣາເອນ. ພຣະເມດຕາຂອງພຣະເຈົ້ານັ້ນຫາບໍ່ໄດ້ດ້ວຍການເຮັດດີທຳດີ; ແຕ່ພຣະເຈົ້າປະທານໃຫ້ດ້ວຍພຣະເມດຕາກະຣຸນາຂອງພຣະອົງເອງ. ພຣະເຈົ້າປະທານໃຫ້ແກ່ຄົນທີ່ຕ້ອງການ ເຖິງແມ່ນພວກເຂົາບໍ່ໄດ້ທູນຂໍຕໍ່ພຣະອົງ ຫລືບໍ່ສົມຄວນໄດ້ຮັບ. ການມີຄວາມເມດຕາຕໍ່ຄົນອື່ນນີ້ອາດບໍ່ໄດ້ຮັບຜົນຕອບແທນ ແຕ່ພຣະເຈົ້າຈະປະທານໃຫ້ເຂົາເຂົ້າໃຈເຖິງຄວາມເມດຕາຈາກພຣະອົງ. ພຣະຄຸນແລະຄວາມເມດຕາຢ່າງນີ້ມີຄຸນຄ່າສູງກວ່າສິ່ງມະນຸດໄດ້ໃຫ້ແກ່ກັນແລະກັນ.

ຕໍ່ມາອົງພຣະເຢຊູສັນຍາຕໍ່ "ຄົນຜູ້ມີໃຈບໍຣິສຸດຈະໄດ້ເຫັນພຣະເຈົ້າ" (5:8). ຜູ້ນຳທາງສາສນາໃນສມັຍນັ້ນໄດ້ເວົ້າເຖິງເປັນຄົນບໍຣິສຸດແຕ່ຂ້າງນອກຊຶ່ງພຣະເຈົ້າບໍ່ຖືວ່າຖືກຕ້ອງ. ບໍຣິສຸດນັ້ນເລີ້ມມາຈາກທາງໃນຈິດໃຈແລະສະແດງອອກມາດ້ວຍການກະທຳ. ຈິດໃຈເປັນສູນກາງຂອງມະນຸດ ເປັນບ່ອນຄົນມີຄວາມຮູ້ສຶກ, ມີຄວາມຄິດ, ແລະເປັນບ່ອນຕັດສິນວ່າຈະເອົາອັນໃດ. ຜູ້ທີ່ມີຊີວິດບໍຣິສຸດທາງໃນຢ່າງນີ້ຈະໄດ້ເຫັນພຣະເຈົ້າບໍ່ແມ່ນຜູ້ນຳທາງສາສນາທີ່ບໍຣິສຸດຈາກໃຈ. ຈິດໃຈສະອາດນັ້ນມີການຖວາຍຕົວເອງຕໍ່ພຣະເຈົ້າດ້ວຍໃຈ ຈຶ່ງກາຍເປັນຜູ້ສະອາດ. ຄົນຢ່າງນີ້ແນ່ນອນຈະໄດ້ເຫັນພຣະເຈົ້າ ໃນເພງສັຣເສີນ 11:7, 17:15 ແລະໂຢບ 19: 26-27 ກໍໄດ້ກ່າວເຖິງຈິດໃຈບໍຣິສຸດດ້ວຍອົງພຣະວິນຍານບໍຣິສຸດ.

ອົງພຣະເຢຊູໄດ້ອວຍພຣະພອນແກ່ຜູ້ສ້າງສັນຕິສຸກ. ພຣະອົງໄດ້ທ້າທາຍໃຫ້ຜູ້ມາຟັງສ້າງສັນຕິສຸກ ແລະພະຍາຍາມນຳສັນຕິສຸກນັ້ນໄປຍັງບ່ອນບໍ່ເຄີຍມີສັນຕິສຸກເລີຍ. ອົງພຣະເຢຊູເປັນຈອມສັນຕິສຸກແລະຜູ້ຕິດຕາມພຣະອົງໄປນັ້ນຕ້ອງເອົາແບບຢ່າງຂອງພຣະອົງ. ລູກຂອງພຣະເຈົ້າຕ້ອງເປັນຜູ້ເວົ້າເຖິງສັນຕິສຸກແລະສິນທັມ ປົກປ້ອງຊ່ອຍເຫລືອຜູ້ຖືກຂົ່ມເຫງ.

## 3. ຄວາມສຸກເປັນຂອງຄົນຜູ້ເຈັບປວດເພາະເຮັດສິ່ງດີ: (ມັດທາຍ 5:10-12)

ຕອນນີ້ສຳນຽງສອນໄດ້ປ່ຽນໄປເພາະພຣະເຢຊູໄດ້ເຕືອນວ່າຜູ້ຕິດຕາມພຣະອົງໄປຈະໄດ້ຖືກຄົນອື່ນຕຳໜິແລະຂົ່ມເຫງນາໆປະການ ເພາະໂລກນີ້ບໍ່ໃຫ້ກຽດຜູ້ທີ່ຕິດຕາມອົງພຣະເຢຊູ ແຕ່ພຣະເຈົ້າຈະເປັນຜູ້ຖືວ່າຜູ້ຕິດຕາມພຣະເຢຊູເປັນຄົນສິນທັມ. ຄົນເປັນທຸກໃນໂລກນີ້ດ້ວຍຂາດເງິນ, ຖືກທຳຮ້າຍຮ່າງກາຍ, ເປັນພະຍາດ ແລະອື່ນໆ. ແຕ່ອົງພຣະເຢຊູໄດ້ອວຍພຣະພອນແດ່ຜູ້ເປັນທຸກ ເພາະພວກເຂົາໄດ້ມອບໃຈຖວາຍຕົວຕໍ່ພຣະອົງ ແລະເຮັດສິ່ງຊອບທັມ. ຄຳສອນອັນນີ້ໄດ້ແນໃສ່ຜູ້ຊອກສແວງຫາຄວາມຊອບທັມ ແຕ່ໄດ້ຖືກຄົນອື່ນຂົ່ມເຫງ.

ອົງພຣະເຢຊູໄດ້ກ່າວວ່າການຕິດພັນກັບພຣະອົງນັ້ນເປັນສິ່ງຈຳເປັນເພື່ອຢາກເຫັນຣາຊອານາຈັກຂອງພຣະເຈົ້າ. ພຣະອົງໄດ້ກ່າວເພີ້ມອີກວ່າ ບໍ່ໃຫ້ຜູ້ທີ່ຕິດຕາມພຣະອົງໄປນັ້ນຕົກໃຈ ເມື່ອຄົນອື່ນປະນາມແລະທຳຮ້າຍ, ແຕ່ໃຫ້ຜູ້ທີ່ຕິດຕາມຍິນດີໃນຄວາມທຸກນັ້ນ ເພາະໃນທີ່ສຸດພຣະເຈົ້າຈະປະທານສິ່ງທີ່ດີເລີດໃຫ້.

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ອົງພຣະເຢຊູເຮັດໃຫ້ຄົນໃນສະໄໝຂອງພຣະອົງເຄືອງໃຈ ເໝືອນກັບຄົນໃນສະໄໝນີ້. ການທີ່ພຣະອົງໄດ້ເຕືອນຜູ້ຕິດຕາມໃນສະໄໝກ່ອນແລະດຽວນີ້ ຄືບໍ່ໃຫ້ແປກໃຈໃນເມື່ອໄດ້ພົບກັບການຂົ່ມເຫງເພາະໄດ້ເຊື່ອໃນພຣະເຢຊູ. ໃຫ້ເຂົ້າໃຈວ່າພວກເຮົາເປັນທຸກເພາະໄດ້ເຊື່ອໃນອົງພຣະເຢຊູນັ້ນ ຈົ່ງໃຫ້ພວກເຮົາຍິນດີເທີ້ນ ເພາະຮູ້ວ່າວັນນຶ່ງພຣະອົງຈະປະທານລາງວັນໃຫ້ໃນເມືອງຟ້າສວັນ.

ພວກເຮົາຜູ້ທີ່ເຊື່ອໃຫ້ສິ່ງຜົນສະທ້ອນຕໍ່ສັງຄົມ ແລະຄົນອື່ນຢູ່ໃກ້ຄຽງ ຄົນອື່ນອາດບໍ່ເຫັນຄຸນຄ່າທີ່ພວກເຮົາພະຍາມເຮັດດີຕໍ່ພວກເຂົາ ແຕ່ຢ່ານ້ອຍໃຈ ໃຫ້ຮູ້ວ່າພຣະເຈົ້າເຫັນດີນຳພວກເຮົາ ແລະພຣະອົງຈະປະທານລາງວັນໃຫ້ເພາະພວກເຮົາເປັນທຸກເພາະໄດ້ເຮັດສິ່ງທີ່ຊອບທັມ.

## **ຄຳຖາມ**

1. ອົງພຣະເຢຊູຕັ້ງພຣະທັຍວ່າຄຳສອນຂອງພຣະອົງທີ່ຈ້າຍພູນີ້ຈະເປັນທີ່ເຂົ້າໃຈດີຈາກພວກສາວົກ ເພື່ອພວກເຂົາຈະເອົາມາປະກອບໃຊ້ໃນຊີວິດປະຈຳວັນ.
2. ຄວາມເປັນທຸກນັ້ນໄດ້ປຸ່ງນສະພາບການໃຫ້ທ່ານມີຄວາມສຳພັນກັບອົງພຣະເຢຊູບໍ່?
3. ການອຶດເຂົ້າຢາກນ້ຳນັ້ນອາດເປັນສິ່ງລຳບາກຫລາຍ ທ່ານມີຄວາມປາຖນາຢາກມີຊີວິດຊອບທັມເໝືອນທ່ານອຶດເຂົ້າຫິວນ້ຳນັ້ນບໍ່?
4. ທ່ານຈະມີຄວາມອ່ອນຫວານໃນຊີວິດແຕ່ລະວັນແນວໃດ?
5. ທ່ານຈະເຮັດແນວໃດເພື່ອສ້າງສັນຕິສຸກຂຶ້ນໃນກຸ່ມໝູ່ບ້ານຂອງທ່ານໄດ້?
6. ທ່ານເຄີຍຖືກຂົ່ມເຫງເພາະທ່ານໄດ້ຕິດຕາມອົງພຣະເຢຊູໄປບໍ່?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 5
# ເຮັດໃຫ້ກົດບັນຍັດຂອງຣາຊອານາຈັກສຳເຣັດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 5:17-48

**ພູມຫລັງຂອງພຣະຄັມພີ:** ມັດທາຍ 5:17-48

**ຈຸດສຳຄັນຂອງບົດຮຽນນີ້:** ອົງພຣະເຢຊູບໍ່ໄດ້ສະເດັດມາເພື່ອທຳລາຍກົດບັນຍັດຫລືຜູ້ປະກາດພຣະທັມ, ແຕ່ມາເພື່ອເຮັດໃຫ້ໃຫ້ສິ່ງເຫລົ່ານັ້ນສຳເຣັດ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດຢ່າງໃດເພື່ອພວກເຮົາຈະມີຄວາມເຂົ້າໃຈກົດບັດຍັດໃນພຣະຄັມພີເດີມ ແລະຜູ້ປະກາດພຣະທັມໃນການສະເດັດມາໃນໂລກຂອງພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຂົ້າໃຈວິທີທີ່ອົງພຣະເຢຊູເຮັດໃຫ້ພຣະບັດຍັດໃນພຣະຄັມພີເດີມ ແລະຜູ້ປະກາດພຣະທັມສຳເຣັດ ສິ່ງເຫລົ່ານີ້ມີຄວາມໝາຍຕໍ່ຊີວິດປະຈຳວັນຂອງເຮົາແນວໃດແດ່.

## ບົດນຳ

ອົງພຣະເຢຊູໄດ້ກ່າວກັບຄົນທີ່ມາຟັງນັ້ນວ່າ ພຣະອົງສະເດັດມາບໍ່ແມ່ນຈະມາທຳລາຍກົດບັນຍັດ ແຕ່ມາເພື່ອເຮັດໃຫ້ພຣະບັນຍັດສຳເຣັດ. ພຣະອົງໄດ້ອະທິບາຍເຖິງຄວາມໝາຍອັນເລິກເຊິ່ງຂອງກົດບັດຍັດໃຫ້ຜູ້ຟັງປະຕິບັດຕາມເພື່ອຈະມີຊີວິດດີຂຶ້ນ.

ໃນສມັຍຂອງອົງພຣະເຢຊູພວກຜູ້ນຳທາງສາສນາໄດ້ເອົາໃຈໃສ່ໃນກົດໝາຍນີ້ຢ່າງເຄັ່ງຄັດ. ແຕ່ພວກເຂົາໄດ້ຕິດຕາມກົດບັນຍັດໃນຂໍ້ທີ່ຖືກໃຈພວກເຂົາ ແລະບໍ່ເອົາຫົວຊາໃນຂໍ້ຕ່າງໆທີ່ຕິສອນພວກເຂົາ. ໃນບົດຮຽນວັນນີ້ອົງພຣະເຢຊູໄດ້ເນັ້ນເຖິງກົດບັດຍັດທີ່ຫລາຍຄົນເອົາມາໃຊ້ໃນສມັຍນັ້ນ ແຕ່ເຫັນວ່າພຣະອົງໄດ້ເອີ້ນໃຫ້ຜູ້ຟັງປະຕິບັດຕາມຈິດວິນຍານຂອງກົດບັນຍັດ ບໍ່ແມ່ນເຮັດຕາມໂຕໜັງສືເທົ່ານັ້ນ. ພຣະອົງໄດ້ແປກົດບັດຍັດໃນການສະເດັດມາຂອງພຣະເມຊີອາແລະກະສັດ ບ່ອນວ່າພຣະອົງບໍ່ໄດ້ສະເດັດມາທຳລາຍກົດບັນຍັດ ແຕ່ມາເພື່ອໃຫ້ກົດບັນຍັດສຳເຣັດຕາມພຣະຄັມພີໄດ້ກ່າວເອົາໄວ້.

## 1. ອ່ານພຣະຄັມພີຢ່າງເຂັ້ມງວດ: (ມັດທາຍ 5:17-20)

ອົງຕາມພຣະຄັມພີຂອງພວກເຮັບເຮີແລ້ວກ່າວວ່າອົງພຣະເຢຊູສະເດັດມາບໍ່ແມ່ນມາທຳລາຍພຣະບັນຍັດຫລືຜູ້ປະກາດພຣະທັມ ແຕ່ມາເພື່ອໃຫ້ທຸກສິ່ງທີ່ກ່າວໃນພຣະບັນຍັດນັ້ນສຳເຣັດລົງ. ເຫັນວ່າຜູ້ອ່ານກົດບັນຍັດນີ້ອາດບໍ່ເຂົ້າໃຈດີ ພວກເຂົາຈຶ່ງເຫັນວ່າອົງພຣະເຢຊູສະເດັດມາເພື່ອເຮັດໃຫ້ກົດບັນຍັດສຳເຣັດສາກ່ອນໃນຂໍ້ 17 ຊຶ່ງໝາຍຄວາມວ່າ, "ສຳເຣັດ ຫລືແຍກຄວາມອອກ." ຖ້າຈະເວົ້າອີກທາງນຶ່ງກໍແມ່ນວ່າເຂົ້າໃຈ

ເຖິງຊີວິດຂອງອົງພຣະເຢຊູເຮັດໃຫ້ເຫັນແຈ້ງເຖິງກົດບັນຍັດຂອງພຣະເຈົ້າ. ກົດບັນຍັດທຸກຂໍ້ຕ້ອງແປຕາມຊີວິດ, ຈຸດປະສົງ ແລະການຮັບໃຊ້ຂອງອົງພຣະເຢຊູ. ອົງພຣະເຢຊູເປັນພຣະຜູ້ສ້າງ ກົດບັນຍັດສາມາດສິດສອນມະນຸດໃຫ້ເຂົ້າໃຈເຖິງຄວາມໝາຍອັນແທ້ຈິງຂອງກົດບັນຍັດ.

ຂໍ້ 18 ບອກວ່າອົງພຣະເຢຊູໄດ້ຮັບຮອງເຖິງອຳນາດຂອງພຣະຄັມພີວ່າທຸກຂໍ້ຄວາມນັ້ນສັກສິດ. ປະໂຍກທີ່ກ່າວວ່າ "ແທ້ຈິງ" ສາມາດແປໄດ້ວ່າ "ອາແມນ." ທ່ານອາດໄດ້ຍິນຄົນໃນຄຣິສຕະຈັກກ່າວອາແມນ ແຕ່ອົງພຣະເຢຊູໄດ້ເວົ້າຄວາມຈິງອັນສຳຄັນກ່ອນຈະມີຄຳເວົ້າຢ່າງນີ້ເພື່ອໃຫ້ເນັ້ນນ້ຳໜັກໃນຂໍ້ຕໍ່ໄປ.

ມະນຸດເຂົ້າໃຈວ່າສວັນເປັນພາກສ່ວນຂອງຈັກກະວານ ເມື່ອຄຳເວົ້າສວັນແລະໂລກໃນຂໍ້ 18 ກໍເປັນສິ່ງຄົບບໍຣິບູນໃນການຊົງສ້າງຂອງພຣະເຈົ້າ. ອົງພຣະເຢຊູໄດ້ເນັ້ນເຖິງການເຊື່ອຟັງກົດບັນຍັດເປັນສິ່ງສຳຄັນ ແລະບອກເຖິງຜົນຂອງການບໍ່ເຊື່ອຟັງວ່າຈະໄດ້ຮັບສິ່ງໃດຕອບແທນ. ທຸກຄົນຕ້ອງເຊື່ອຟັງ ບໍ່ແມ່ນພຽງນັບຖືສາສນາເທົ່ານັ້ນ ຄົນຂອງພຣະເຈົ້າຕ້ອງຍອມເຮັດຕາມນ້ຳພຣະທັຍຂອງພຣະອົງແລະມີຊີວິດຕາມພຣະບັນຍັດທັງໝົດ.

ໃນປຶ້ມມັດທາຍມີຄົນສອງກຸ່ມຄືພວກຟາຣີຊາຍແລະພວກນັກທັມ ອົງພຣະເຢຊູມັກຕ້ອງຕິໃນຂໍ້ 19. ພຣະເຢຊູໄດ້ກ່າວຢ່າງກ້າຫານວ່າຜູ້ທີ່ເຊື່ອໃນພຣະອົງຢ່າງແທ້ຈິງນັ້ນ ຕ້ອງເປັນຄົນສິນທັມລື່ນທັງສອງພວກນີ້. ພວກຟາຣີຊາຍໄດ້ມີຊີວິດແລະຕີຄວາມໝາຍພຣະຄຳຜິດແລະບໍ່ຄົບຖ້ວນ. ຕໍ່ຊີວິດຂອງພວກຢິວແລ້ວຖືວ່າບໍ່ມີຜູ້ໃດເປັນຄົນສິນທັມລື່ນກວ່າພວກຟາຣີຊາຍ ແລະພວກຄຣູສອນຄືພວກນັກທັມ ແຕ່ພຣະເຈົ້າຖືວ່າສິ່ງທີ່ຖືກຕ້ອງແທ້ຕ້ອງບໍ່ແມ່ນນັບຖືພຣະບັດຍັດທຸກຂໍ້ຢ່າງເຄັ່ງຄັດ ແຕ່ຕ້ອງຕິດຕາມອົງພຣະເຢຊູ ໝາຍເຖິງການຖິ້ມໃຈເກົ່າແລະເອົາໃຈໃໝ່ ແລະໄວ້ວາງໃຈໃນພຣະອົງ.

## 2. <u>ຄວາມໂກດຮ້າຍແລະການຂ້າຄົນ</u>: (ມັດທາຍ 5:21-26)

ໃນຂໍ້ 21-22 ອົງພຣະເຢຊູໄດ້ອ້າງເຖິງພຣະບັນຍັດຂໍ້ຫົກ "ຢ່າຂ້າຄົນ." ອົງພຣະເຢຊູບໍ່ໄດ້ປ່ຽນຄວາມໝາຍໃນຂໍ້ນີ້ ແຕ່ພຣະອົງໄດ້ເຊື່ອມຄວາມໂກດຮ້າຍເຂົ້າກັບການຂ້າຄົນເພື່ອໃຫ້ເຫັນຄວາມສຳຄັນເຖິງຄວາມຮັກແທນທີ່ຈະມີຄວາມໂກດຮ້າຍໃນຈິດໃຈ. ອົງພຣະເຢຊູບໍ່ໄດ້ກ່າວວ່າຄວາມໂກດຮ້າຍກັບການຂ້າກັນມີຄວາມຜິດເທົ່າກັນ ພຣະເຢຊູໝາຍຄວາມວ່າເມື່ອເຫັນຄວາມບໍ່ເປັນທັມແລະຄວາມບາບ ຄວາມໂກດຮ້າຍຕໍ່ສິ່ງເຫຼົ່ານີ້ກໍຖືກຕ້ອງ ແຕ່ຄວາມໂກດຮ້າຍທີ່ຜິດນັ້ນນຳໄປເຖິງການຂ້າຄົນ. ການກຽດຊັງຄົນອື່ນກໍເປັນເໝືອນການຂ້າຄົນ ເພາະສິ່ງນັ້ນເກີດມາຈາກຈິດໃຈ.

ອົງພຣະເຢຊູໄດ້ໃຫ້ຕົວຢ່າງສອງປະການ. <u>ປະການທີນຶ່ງ</u>ເມື່ອຄົນໃດໄດ້ຖວາຍສັດໃນແທນບູຊາໃນກຸງເຢຣູຊາເລັມ ແຕ່ຄົນນັ້ນຮູ້ດີວ່າຕົນເອງໄດ້ເຮັດຜິດຕໍ່ຄົນອື່ນ ອົງພຣະເຢຊູສອນວ່າໃຫ້ປະຂອງຖວາຍນັ້ນໄວ້ເທິງແທນບູຊາ ນັ້ນກ່ອນ ແລະກັບໄປຄືນດີກັບຄົນທີ່ຕົນເອງເຮັດຜິດແລ້ວຈຶ່ງກັບຖວາຍຕໍ່ ຖ້າບໍ່ດັ່ງນັ້ນຂອງຖວາຍກໍບໍ່ມີຄ່າປະການໃດ. <u>ປະການທີສອງ</u>ແມ່ນເລື່ອງຕົກລົງກັນກ່ອນໄປຂຶ້ນສານ ຖ້າເລື່ອງໄປຮອດສານແລ້ວກໍແມ່ນວ່າມັນຊ້າເກີນໄປແລະຈະມີຜົນຮ້າຍຕິດຕາມມາ. ໝາຍຄວາມວ່າໃຫ້ຄືນດີກັນກ່ອນນຳເລື່ອງໄປຟ້ອງໃນສານຕັດສິນ.

ສອງເລື່ອງທີ່ກ່າວມາຂ້າງເທິງນີ້ສອນເຖິງຜົນຂອງການໂກດຮ້າຍເປັນພັຍຕໍ່ຄວາມສັມພັນກັນ ແລະກັບ

ພຣະເຈົ້າອີກດ້ວຍ. ດັ່ງນັ້ນ, ອົງພຣະເຢຊູຈຶ່ງໃຫ້ຄືນດີກັນໄວເທົ່າໃດຍິ່ງດີ ເພາະມັນເປັນຜົນດີທີ່ສຸດ ຄືໃຫ້ຕົກລົງກັນ ແລະສາຣະພາບຄວາມຜິດນັ້ນຕໍ່ພຣະເຈົ້າ ເພື່ອຈະເຂົ້າຮ່ວມນະມັສການນຳກັນດ້ວຍຄວາມຈິງໃຈ.

## 3. <u>ຕັນຫາແລະຫລິ້ນຊູ້</u>: (ມັດທາຍ 5:27-30)

ອົງພຣະເຢຊູໄດ້ກ່າວເຖິງກົດຂອງການມີເພດສັມພັນອັນບໍຣິສຸດ. ພຣະເຈົ້າໄດ້ສ້າງເພດເພື່ອໃຫ້ເປັນພຣະພອນລະຫວ່າງຜູ້ຊາຍກັບຜູ້ຍິງໃນການແຕ່ງງານ. ການຫລິ້ນຊູ້ທຳລາຍຕໍ່ການແຕ່ງງານຍ້ອນເປັນຄົນເຫັນແກ່ຕົວ ອົງພຣະເຢຊູໄດ້ກ່າວວ່າການຫລິ້ນຊູ້ເລີ້ມມາຈາກຕັນຫາຂອງໃຈ. ແຕ່ຕ້ອງເຂົ້າໃຈວ່າຕັນຫາທາງຕາແລະການລົງມືຫລິ້ນຊູ້ນັ້ນບໍ່ຄືກັນ ແຕ່ມັນສາມາດທຳລາຍເໝືອນກັນກັບທາງດ້ານຈິດໃຈ. ພຣະເຢຊູກ່າວວ່າຖ້າເບິ່ງເກີນຄວາມງາມໄປແລ້ວກໍເປັນຄວາມຄຶດທີ່ບໍ່ສະອາດ. ດັ່ງນັ້ນ, ພຣະອົງຈຶ່ງກ່າວເຖິງຜົນຮ້າຍຂອງຕັນຫາທາງເພດສັມພັນວ່າ ຖ້າຕາພາໃຫ້ຜິດສົມຄວນຈະຄວັກມັນອອກໄປກໍດີກວ່າ. ໃຫ້ເຂົ້າໃຈວ່າຕາແລະມືມີພາກສ່ວນໃນການຫລິ້ນຊູ ເພາະມັນເລີ້ມດ້ວຍຕາເບິ່ງ ຖ້າບໍ່ບັງຄັບມັນອາດລາມໄປເຖິງມືໄປຈັບແລະກໍສຸດລົງດ້ວຍການຫລິ້ນຊູ້ສູ່ຜົວເມັຽຂອງຄົນອື່ນ. ການທີ່ຈະເອົາຊະນະຕັນຫານີ້ຈຳເປັນຕ້ອງມີການຜ່າຕັດທາງໃຈ(ປ່ຽນແປງຈິດໃຈ).

## 4. <u>ການແຕ່ງງານ ແລະການຢ່າຮ້າງ</u>: (ມັດທາຍ 5:31-32)

ການຫລິ້ນຊູ້ຫລາຍເທື່ອເປັນເຫດໃຫ້ມີການຢ່າຮ້າງກັນ. ພຣະເຢຊູໄດ້ຍົກເອົາພຣະຄັມພີເດີມຊຶ່ງເປັນກົດເຣື່ອງຢ່າຮ້າງ (ພບຍ 2 24:1-4). ອົງພຣະເຢຊູໄດ້ເວົ້າເລິກໄປອີກ ໃນສມັຍກ່ອນບາງຄົນອະນຸຍາດໃຫ້ຢ່າຮ້າງໄດ້ ບາງຄົນໃຫ້ຢ່າຮ້າງໃນຖານມີການຫລິ້ນຊູ້ ພວກຢິວກໍອະນຸຍາດໃຫ້ຢ່າຮ້າງໄດ້ຖ້າມີການຫລິ້ນຊູ້. ຜູ້ຊາຍຄວນເອົາໜັງສືຢ່າຮ້າງໃຫ້ພັຣຍາເພື່ອປົດປ່ອຍໃຫ້ມີສິດແລະເປັນການຖືກຕ້ອງ.

ອົງພຣະເຢຊູບອກໃຫ້ມີການນັບຖືການແຕ່ງງານໄວ້ສູງ ພຣະອົງຕໍ່ຕ້ານຄົນຄຶດຢາກທຳລາຍການແຕ່ງງານ ພຣະອົງບອກໃຫ້ເບິ່ງນິສັຍບໍ່ແມ່ນຂຶ້ນກັບກົດບັດຍັດ. ໂມເຊບໍ່ໄດ້ສັ່ງໃຫ້ຄົນຢ່າຮ້າງ ແຕ່ອະນຸຍາດ. ພຣະເຈົ້າບໍ່ໄດ້ສ້າງການແຕ່ງງານໃຫ້ເປັນຂໍ້ສັນຍາຜູ້ມັດທີ່ທຳລາຍໄດ້ງ່າຍໆເມື່ອມີບັນຫາເກີດຂຶ້ນ. ການແຕ່ງງານເປັນສັນຍາລັກໃຫ້ມີຄວາມສັມພັນຕໍ່ກັນແລະກັນດ້ວຍຄວາມສັດຊື່ລະຫວ່າງສາມີພັຣຍາ. ການແຕ່ງງານນີ້ ບໍ່ໃຫ້ມີສິ່ງໃດມາຂັດຂວາງນອກຈາກຄວາມຕາຍ ຫລືຄວາມຜິດບາບດ້ານເພດສັມພັນເທົ່ານັ້ນ.

## 5. <u>ສາບານແລະສັນຍາ</u>: (ມັດທາຍ 5:33-37)

ການສັນຍາໃນພຣະຄັມພີເດີມຖືວ່າສຳຄັນຕໍ່ພຣະເຈົ້າ. ແຕ່ເຫັນວ່າອົງພຣະເຢຊູສອນບໍ່ໃຫ້ສາບານ ໃຜກໍຕາມທີ່ສັນຍາໄວ້ແລ້ວຄວນຮັກສາມັນໄວ້. ພວກຟາຣີຊາຍມັກຫລີກເວັ້ນບໍ່ຢາກສັນຍາໃນນາມຂອງພຣະເຈົ້າແຕ່ໃຊ້ສັນຍາໃນນາມກຸງເຢຣູຊາເລັມ, ຕໍ່ສວັນ, ຕໍ່ແຜ່ນດິນ ຫລືສິ່ງອື່ນໆ. ແຕ່ເຫັນວ່າສັນຍານັ້ນຈະໃຊ້ໃນນາມອັນໃດກໍຕາມ ມັນເປັນຂອງພຣະເຈົ້າທັງນັ້ນ. ອົງພຣະເຢຊູສອນວ່າຈິ່ງເຮັດໃຫ້ຄຳເວົ້າຂອງເຮົາມີຄ່າ ຜູ້ສັດຊື່ບໍ່ຈຳເປັນຕ້ອງສາບານ ການໄວ້ໃຈໄດ້ນີ້ມາຈາກບຸກຄະລິກລັກສະນະອັນດີ.

## 6. <u>ການແກ້ແຄ້ນແລະການໃຫ້ອະພັຍ</u>: (ມັດທາຍ 5:38-42)

ຕອນນີ້ອົງພຣະເຢຊູໄດ້ຫັນຄໍາສອນໄປໃສ່ບຸກຄົນທີ່ເຮັດຜິດຕໍ່ກັນ ບໍ່ແມ່ນລະຫວ່າງຊາດມີບັນຫາກັນ. ເປົ້າໝາຍຂອງກົດບັນຍັດໃນປຶ້ມອົບພະຍົບ 21:23-25 ສອນບໍ່ໃຫ້ຄົນແກ້ແຄ້ນກັນ ອົງພຣະເຢຊູໄດ້ເອົາອຸປະນິສັຍເຂົ້າມາແທນຕົວໜັງສືຂອງກົດບັດຍັດ. ຜູ້ທີ່ເຊື່ອຈໍາເປັນຕ້ອງຍອມສູນເສັຽ ແທນທີ່ຈະໃຫ້ຄົນອື່ນເສັຽ ນີ້ເວົ້າເຖິງຮ່າງກາຍແລະຊັບສິນຄືກັນ ຖ້າຄົນອື່ນຕົບໜ້າ ພວກເຮົາຄວນຈະຍ່າງໜີອອກໄປແທນທີ່ຈະແກ້ຄືນ. ໝາຍຄວາມວ່າຄຣິສຕຽນຕ້ອງເຮັດດີລື່ນກວ່າຄົນທີ່ບໍ່ຮູ້ຈັກພຣະເຈົ້າ.

## 7. <u>ເພື່ອນບ້ານແລະສັດຕຣູ</u>: (ມັດທາຍ 5:43-48)

ອົງພຣະເຢຊູໄດ້ສອນໃຫ້ພວກສາວົກຮັກສັດຕຣູ ຖ້າພວກເຂົາຮັກແຕ່ເພື່ອນບ້ານພວກເຮົາກໍບໍ່ຕ່າງກັບພວກເກັບພາສີ. ຄົນສ່ວນຫລາຍຊັງຄົນເກັບພາສີເພາະພວກເຂົາມັກໃຊ້ອໍານາດຂູ່ປະຊາຊົນ. ສິ່ງນຶ່ງທີ່ເປັນສັນຍາລັກວ່າພວກເຮົາເປັນຄົນຕິດຕາມອົງພຣະເຢຊູຄືໃຫ້ມີຄວາມຮັກສັດຕຣູ ຫລືຜູ້ທີ່ຂົ່ມເຫງຕົນ. ຄໍາສອນໃນຕອນນີ້ແມ່ນອ້າງເຖິງການເສັຽສະລະເພື່ອຜົນປໂຍດຂອງຄົນອື່ນ. ຜູ້ທີ່ສາມາດຮັກສັດຕຣູນັ້ນກໍຈະເຣີນຂຶ້ນເປັນເໝືອພຣະບິດາຜູ້ຊົງສະຖິດໃນຟ້າສວັນ. ພຣະເຢຊູສອນພວກສາວົກໃຫ້ເປັນຄົນ "ປະເສີດ" ແປວ່າ "ເປັນຜູ້ໃຫຍ່ ແລະຄົບຖ້ວນ."

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ກົດບັດຍັດບໍ່ສາມາດຊ່ອຍພວກເຮົາ ແຕ່ໄດ້ບອກໃຫ້ຮູ້ຈັກຄວາມຜິດພາດ. ອົງພຣະເຢຊູໄດ້ສະແດງກົດບັນຍັດໃຫ້ພວກເຮົາເຂົ້າໃຈດີທີ່ສຸດ ຄືບໍ່ດີພໍຖ້າເຊື່ອໃນຕົວໜັງສືຂອງກົດບັດຍັດເທົ່ານັ້ນ; ຄຣິສຕຽນຕ້ອງເຂົ້າໃຈແລະເຊື່ອຟັງຈຸດປະສົງຂອງກົດນັ້ນ ຕົວຢ່າງ: ເມື່ອຜູ້ຊາຍໄດ້ເບິ່ງຜູ້ຍິງດ້ວຍໃຈກໍານັດຖືວ່າເປັນການຫລິ້ນຊູ້ຫລືບໍ່? ແມ່ນແທ້ອົງພຣະເຢຊູໄດ້ປະນາມການເບິ່ງຢ່າງນັ້ນ ພວກເຮົາຜູ້ທີ່ເຊື່ອຄວນເອົາຫລັກຄໍາສອນອັນສູງຂອງພຣະເຢຊູມາໃຊ້ໃນຊີວິດ. ພວກເຮົາຕ້ອງເພິ່ງອາສັຍອົງພຣະວິນຍານບໍຣິສຸດເປັນຜູ້ຊ່ອຍເພື່ອໃຫ້ຕົວເອງມີຊີວິດຖືກຕ້ອງກັບພຣະເຈົ້າ.

## <u>ຄໍາຖາມ</u>

1. ຫລັງຈາກໄດ້ອ່ານຄໍາສອນຂອງອົງພຣະເຢຊູທີ່ກ່ຽວກັບພຣະບັດຍັດ ທ່ານຮູ້ສຶກວ່າທ່ານໄດ້ເຊື່ອຟັງພຣະເຈົ້າບໍ່?
2. ໃຜເປັນສັດຕຣູຂອງທ່ານເພື່ອທ່ານຈະສະແດງຄວາມຮັກຕໍ່ພວກເຂົາ?
3. ເມື່ອທ່ານກ່າວອັນໃດແລ້ວຄົນອື່ນເຊື່ອຖືໄດ້ບໍ?
4. ຫລັງຈາກໄດ້ອ່ານຄໍາສອນຂອງອົງພຣະເຢຊູກ່ຽວເຣື່ອງຂ້າກັນ, ທ່ານຕ້ອງການສາຣະພາບເພາະທ່ານເປັນຄົນມີໃຈໂມໂຫບໍ່?
5. ມີຄວາມໝາຍແນວໃດເມື່ອອົງພຣະເຢຊູສອນໃຫ້ພວກເຮົາເປັນຜູ້ບໍຣິສຸດເໝືອນກັບພຣະບິດາຜູ້ສະຖິດໃນຟ້າສວັນ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 6
## <u>ຣາຊອານາຈັກເຣື່ອງຊັບສິນແລະຄວາມກະວົນກະວາຍ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມັດທາຍ 6:19-34

**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 6:19-34

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ປະຊາກອນແຫ່ງເມືອງຟ້າສວັນຄວນເອົາໃຈໃສ່ໃນການສະສົມຊັບສິນຊຶ່ງເປັນຢູ່ຕລອດໄປ ເຊື່ອໝັ້ນໃນພຣະເຈົ້າວ່າພຣະອົງຈະຊ່ອຍ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮັດຢ່າງໃດເພື່ອພວກເຮົາຈະສະສົມຊັບສິນຊຶ່ງເປັນຢູ່ຕລອດໄປ ເຊື່ອວ່າພຣະເຈົ້າຈະປະທານສິ່ງຕ້ອງການໃຫ້?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຍອມໃຫ້ພຣະເຈົ້າເປັນຜູ້ປະທານສິ່ງຕ້ອງການໃຫ້ ເມື່ອຕົນເອງໄດ້ເຊື່ອວ່າພຣະອົງຈະຊ່ອຍແທ້.

## ບົດນຳ

ອົງພຣະເຢຊູໄດ້ສອນເຖິງຄວາມສຳຄັນໃຫ້ເອົາໃຈໃສ່ກັບສິ່ງເປັນຢູ່ຕລອດໄປ ເພາະການທີ່ເຮັດຢ່າງນັ້ນຈະຊ່ອຍໃຫ້ເອົາຄວາມກະວົນກະວາຍອອກໄປຈາກຊີວິດໄດ້.

ຂ້າງລຸ່ມຕໍ່ໄປນີ້ເປັນຄວາມເວົ້າຂອງຄົນທີ່ຮູ້ຈັກດີເຖິງຄວາມກະວົນກະວາຍ:

- ຄວາມກະວົນກະວາຍເປັນເໝືອນຈັກປັ່ນນ້ຳ ມັນຊ່ອຍເອົານ້ຳມາໃຫ້ໃຊ້ ແຕ່ບໍ່ສາມາດພາໄປທາງໃດໄດ້.
- ການເປັນຫ່ວງກະວົນກະວາຍບໍ່ສາມາດເຮັດຊ່ອຍອັນໃດໃນຊີວິດໄດ້.
- ການເປັນຫ່ວງກະວົນກະວາຍເຮັດໃຫ້ເສັຽເວລາວັນນີ້ ແລະກັ້ນທາງບໍ່ໃຫ້ມີໂອກາດດີໃນມື້ອື່ນ ດ້ວຍວ່າເອົາບັນຫາມື້ວານນີ້ເຂົ້າມາຄຶດໃຫ້ໜັກຫົວ.
- ການເປັນຫ່ວງວັນນຶ່ງກໍເຮັດໃຫ້ເມື່ອຍເປັນທຸກຫລາຍກວ່າຈະຮັບໄດ້.
- ຢ່າກະວົນກະວາຍ: ຈົ່ງມີຄວາມສຸກເທີ້ນ.

ທຸກວັນນີ້ໃນບ້ານເມືອງທີ່ຈະເຣີນຄຶດວ່າຊີວິດຈະໝົດຄວາມເປັນຫ່ວງແລະກະວົນກະວາຍ ແຕ່ກົງກັນຂ້າມຊີວິດຍິ່ງສັບສົນ ເປັນຫ່ວງນຳສັງຄົມ, ເສຖກິດ, ຄວາມປອດພັຍຂອງເດັກນ້ອຍໃນໂຮງງານແລະອື່ນໆ. ການມີຄວາມກະວົນກະວາຍນີ້ບໍ່ແມ່ນຂອງໃໝ່ ອົງພຣະເຢຊູໄດ້ກ່າວເຖິງເຣື່ອງນີ້ໃນບົດເທສນາທີ່ຈ້າຍພູ ຊຶ່ງເປັນຈຸດສຳຄັນໃນບົດຮຽນວັນນີ້.

### 1. **<u>ທ້ອນຊັບສົມບັດໄວ້ໃນສວັນ:</u>** (ມັດທາຍ 6:19-21)

ເປັນການຍາກທີ່ຈະແຍກຊີວິດແຕ່ລະວັນຈາກຊີວິດດ້ານຄວາມເຊື່ອ ອົງພຣະເຢຊູໄດ້ສະແດງໃຫ້ເຫັນວ່າຊີວິດສອງຢ່າງນີ້ມັນຝັ້ນກັນຢູ່. ພວກຟາຣີຊາຍໃຊ້ສາສນາຫາເງິນ ພຣະເຢຊູໄດ້ສອນໃຫ້ຜູ້ຕິດຕາມໃຫ້ລະວັງໃນສິ່ງຂອງ ເພາະສິ່ງຂອງສາມາດເຮັດໃຫ້ຄົນເຮົາກາຍເປັນທາດ ແຕ່ຜູ້ທີ່ມີອົງພຣະວິນຍານນຳພາໄດ້ໃຊ້ຊັບສິນເພື່ອພຣະເຈົ້າຈະໄດ້ກຽດ. ອົງພຣະເຢຊູໄດ້ສອນໃຫ້ຜູ້ຕິດຕາມປັກຕາເບິ່ງສິ່ງຂອງໃນສວັນ ເພາະສິ່ງຂອງໃນໂລກນີ້ເປັນຂອງຊົ່ວຄາວເທົ່ານັ້ນ ແຕ່ໃຫ້ທ້ອນຊັບສິນໃນສວັນ ບໍ່ເອົາມາໃຊ້ສຳລັບຕົວເອງເທົ່ານັ້ນ ໃຊ້ເພື່ອຣາຊອານາຈັກຂອງພຣະເຈົ້າແລະເພື່ອຄົນອື່ນ.

ໃນສມັຍບູຮານຊັບສິນເງິນຄຳແລະເສື້ອຜ້າມີຄ່າ ໃນປະເທດຕາເວັນອອກາງມອດແລະຂີ້ໝ້ຽງເປັນໂຕການທຳລາຍເຄື່ອງໃຊ້ ແລະໂຈນມັກລັກເງິນຄຳ. ເຮືອນໃນສມັຍນັ້ນເຮັດດ້ວຍດິນຈຶ່ງເປັນການງ່າຍທີ່ຈະມ້າງເຂົ້າໄປລັກເຄື່ອງຂອງໄດ້ງ່າຍ. ອົງພຣະເຢຊູສອນວ່າຄົນຮັ່ງມີກາຍເປັນຄຣິສຕຽນໄດ້ຍາກເພາະສິ່ງຂອງອາດເປັນກຳແພງກັ້ນລາວໄວ້.

ຄຳເວົ້າວ່າຊັບສິນໃນສວັນນັ້ນບໍ່ສາມາດເກັບໄວ້ໃນໄຫຫລືສາງເກັບເຄື່ອງ ແຕ່ຈຳເປັນຕ້ອງສະສົມໄວ້ກ່ອນໄປເຖິງເຊັ່ນ: ໄວ້ໃຈໄດ້, ເຊື່ອຟັງພຣະເຈົ້າ, ເປັນພະຍານເຣື່ອງພຣະເຢຊູຕໍ່ຄົນອື່ນ, ແລະຄວາມເຊື່ອ. ຄຣິສຕຽນໃຊ້ຊັບສິນຂອງຕົນເອງຊ່ອຍເຫລືອຄົນອື່ນ. ການມີຈິດໃຈເອື້ອເຟື້ອອາຣີແລະເມດຕານີ້ເປັນສິ່ງທີ່ມີຄ່າສູງສຳລັບຜູ້ທີ່ເຊື່ອໃນອົງພຣະເຢຊູ.

## 2. <u>ເບິ່ງໃຫ້ຄັກ:</u> (ມັດທາຍ 6:22-23)

ອົງພຣະເຢຊູໃຊ້ຕາເປັນຕົວແທນຂອງຈິດໃຈ ຖ້າວ່າຄົນນັ້ນໄດ້ເຫັນຮຸ່ງດີຮ່າງກາຍທັງໝົດຂອງຕົນເອງເຮັດວຽກໄດ້ດີ ແຕ່ຖ້າຕາບອດ ກໍເໝືອນວ່າທຸກພາກສ່ວນຂອງຮ່າງກາຍໄດ້ຮັບຄວາມເປັນທຸກ. ດັ່ງນັ້ນ, ເຫັນວ່າຕາຫລືຈິດໃຈສາມາດຈ້ອງມອງເຫັນສິ່ງທີ່ພຣະເຈົ້າປະທານໃຫ້, ຖ້າວ່າຕາມອງເຫັນແຕ່ສິ່ງຂອງໃນໂລກນີ້ເຣື່ອງພຣະເຈົ້າກໍມັກຈະດັບສູນໄປ.

.

## 3. <u>ເລືອກທາງ:</u> (ມັດທາຍ 6:24)

ອົງພຣະເຢຊູໄດ້ໃຊ້ຄຳເວົ້າເຖິງຂ້ອຍຂ້າເພື່ອເອົາມາສອນໃຫ້ຄົນເຂົ້າໃຈ. ຄົນໃຊ້ບໍ່ສາມາດເປັນຂ້ອຍສອງນາຍໄດ້ ເພາະເຂົາຈະຮັກຫລັງຊັງບ່ຽງຂຶ້ນກັບນາຍຈ້າງ. ຖ້ານາຍຈ້າງໃຫ້ເງິນດີແລະເມດຕາພວກເຂົາຮັກຜູ້ນັ້ນແລະເອົາໃຈໃສ່ເຮັດວຽກດີຂຶ້ນ. ເຊັ່ນດຽວກັນຜູ້ເປັນຂ້າທາດຂອງເງິນຄຳກໍເຮັດເໝືອນວ່າຕົນເອງຮັກພຣະເຈົ້າແຕ່ເອົາຈິດໃຈໃສ່ເຣື່ອງເງິນຄຳຫລາຍກວ່າ. ໃຜກໍຕາມມັກປັກຕາແຕ່ສິ່ງຂອງໃນໂລກນີ້ຈະໄດ້ຮັບຜົນຕອບແທນຢ່າງຜິດຫວັງ ແຕ່ຖ້າເປັນນ້ຳພຣະທັຍຂອງພຣະເຈົ້າໃຫ້ເຮົາຮັ່ງມີເພື່ອນຳພຣະກຽດໄປເຖິງພຣະອົງ ພວກເຮົາກໍໄດ້ຮັບພຣະພອນຫລາຍ ແທນທີ່ຈະເປັນພາຣະໜັກທີ່ຕ້ອງແບກຫາບ.

## 4. <u>ທ່ານໄດ້ສແວງຫາອານາຈັກອັນໃດ?:</u> (ມັດທາຍ 6:25-34)

ອົງພຣະເຢຊູໄດ້ເວົ້າເຖິງຜົນຈາກການສແວງຫາຊັບສິນຄືມີຄວາມກະວົນກະວາຍໃນຊີວິດເພີ້ມຂຶ້ນ. ໃນຂໍ້ພຣະຄັມຕອນນີ້ມີຄຳເວົ້າເຖິງຄວາມກະວົນກະວາຍຢູ່ຫົກເທື່ອທີ່ກ່ຽວກັບການໃຊ້ຕາເບິ່ງຜິດ. ສິ່ງຂອງບໍ່ເຮັດໃຫ້ຄົນມີຄວາມສຸກຕລອດໄປ ເຖິງແມ່ນໂລກນີ້ໂຄສະນາວ່າຖ້າມີຊັບສິນບັດຫລາຍມີອະນາຄົດດີ ເພາະຄົນ

ເຮົາມີຫລາຍເທົ່າໃດຍິ່ງຢາກມີເພີ້ມ. ຄວາມຮັ່ງມີອາດນຳບັນຫາມາສູ່ຊີວິດໄດ້. ການສແວງຫາສິ່ງຜິດອາດນຳຄວາມຮູ້ສຶກອ້າງວ້າງ ເປັນຫ່ວງກັງວົນ ເປັນຄົນມັກໂລບແລະໃນທີ່ສຸດກໍພົບເຫດຮ້າຍໃນຊີວິດ.

ອົງພຣະເຢຊູບໍ່ໄດ້ຫ້າມບໍ່ໃຫ້ມີການວາງແຜນການຕໍ່ອະນາຄົດ ແຕ່ພຣະອົງເຕືອນບໍ່ໃຫ້ມີຄວາມກະວົນກະວາຍວ່າມື້ອື່ນຈະເປັນຢ່າງໃດ. ອົງພຣະເຢຊູໄດ້ໃຊ້ຄວາມຕ້ອງການປະຈຳວັນເຊັ່ນອາຫານແລະເຄື່ອງນຸ່ງເພື່ອເອົາມາສັ່ງສອນເພາະພຣະອົງກຳລັງສອນຄົນຜູ້ຂັດສົນ ພຣະອົງກ່າວວ່າຖ້າຜູ້ໃດຖວາຍຕົນຕໍ່ພຣະເຈົ້າແລ້ວ ແທນທີ່ຈະເອົາແຕ່ໃຈໃສ່ກັບເງິນຄຳ ພຣະເຈົ້າສັນຍາວ່າຈະປະທານສິ່ງຈຳເປັນຕໍ່ຄົນນັ້ນ.

ອົງພຣະເຢຊູສອນບໍ່ໃຫ້ກະວົນກະວາຍແຕ່ບໍ່ໄດ້ໝາຍຄວາມວ່າໃຫ້ຢູ່ລ້າໆລໍຖ້າ. ຄຣິສຕຽນຄວນເອົາໃຈໃສ່ເຮັດວຽກໃນເວລາລໍຖ້າການຊ່ອຍເຫລືອຈາກພຣະເຈົ້າ. ພຣະເຢຊູໄດ້ຍົກເອົາຕົວຢ່າງຂອງນົກເພາະມັນບໍ່ໄດ້ທ້ອນໂຮມອາຫານໄວ້ ຄົນເຮົາສົມຄວນເຮັດດີກວ່ານົກ.

ອົງພຣະເຢຊູບອກໃຫ້ເບິ່ງດອກໄມ້ໃນປ່າວ່າພຣະເຈົ້າໄດ້ຮັກສາເບິ່ງແຍງມັນປານໃດ. ຄຳເວົ້າ “ໃຫ້ເບິ່ງ” ສາມາດແປໄດ້ວ່າ “ໃຫ້ຮຽນນຳ” ພຣະເຢຊູໄດ້ສອນວ່າມະນຸດກໍມີຄ່າກວ່ານົກ ແລະດອກໄມ້ ພຣະເຈົ້າຍິ່ງຈະສົນພຣະທັຍຫລາຍຕໍ່ຄວາມຢູ່ດີກິນແຊບຂອງພວກເຮົາ. ມະນຸດໄດ້ຖືກສ້າງຂຶ້ນມາຕາມພຣະລັກສະນະຂອງພຣະເຈົ້າຈຶ່ງຖືວ່າພິເສດສຸດ. ການເປັນຫ່ວງກະວົນກະວາຍໝາຍເຖິງການບໍ່ໄດ້ວາງໃຈໃນພຣະເຈົ້າເວົ້າໄດ້ອີກວ່າ ຄວາມກະວົນກະວາຍເປັນເໝືອນຄົນທີ່ບໍ່ເຊື່ອໃນພຣະເຈົ້າ.

ໃນພາສາກຣີກຄຳວ່າກະວົນກະວາຍແມ່ນ “ດຶງໄປຄົນລະທາງ” ທັມມະຊາດຍັງເພິ່ງພຣະເຈົ້າເປັນຜູ້ຈັດຫາໃຫ້ ແຕ່ເຫັນວ່າມະນຸດຜູ້ພຣະເຈົ້າຊົງສ້າງມາຕາມລັກສະນະຂອງພຣະອົງຊ້ຳພັດຖືກດຶງໄປທົ່ວທິບ ແລະມັກເພິ່ງຕົນເອງເພື່ອມີຊີວິດຢູ່ລອດ. ໃນຂໍ້ 31 ພຣະເຢຊູໄດ້ຕັ້ງຄຳຖາມສາມຄຳຕໍ່ຜູ້ຢາກຖາມທີ່ຊາວໂລກມັກຖາມ ແຕ່ບໍ່ເປັນການດີທີ່ຜູ້ເຊື່ອໃນພຣະອົງຄວນຖາມ ເພາະພຣະເຈົ້າຮັກເປັນຫ່ວງແລະຮູ້ຈັກສິ່ງທີ່ພວກເຮົາຕ້ອງການ. ດັ່ງນັ້ນ, ບໍ່ໃຫ້ເປັນຫ່ວງ ແຕ່ໃຫ້ເພິ່ງພຣະເຈົ້າທຸກຢ່າງ. ຂໍ້ 33 ເປັນຂໍ້ທີ່ທຸກຄົນຮູ້ຈັກດີ ແລະບາງຄົນກໍເອົາມາຮ້ອງເປັນເພງ. ກ່ອນຄົນຈະກາຍເປັນຄົນສິນທັມກໍຕ້ອງເຊື່ອຟັງພຣະເຈົ້າ ບໍ່ແມ່ນເຮັດໄດ້ດ້ວຍຕົນເອງ. ການເປັນຫ່ວງກະວົນກະວາຍກັບສິ່ງຂອງໃນໂລກນີ້ກົງກັນຂ້າມກັບການຊອກສແວງຫາຣາຊອານາຈັກຂອງພຣະເຈົ້າ.

ຄົນທີ່ເຊື່ອຟັງພຣະເຈົ້າຈະບໍ່ກະວົນກະວາຍໃນຊີວິດ ເຖິງວັນນີ້ຫລືມື້ອື່ນຈະເປັນຢ່າງໃດກໍຕາມ. ຖ້າພວກເຮົາຜູ້ເປັນຄຣິສຕຽນພົບກັບບັນຫາກໍໃຫ້ພົບກັບມັນດ້ວຍຄວາມເຊື່ອ ແຕ່ພວກທີ່ບໍ່ເຊື່ອກໍຈະພົບບັນຫາດ້ວຍຄວາມກະວົນກະວາຍ.

## ເລື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ການວາງແຜນທ້ອນຊັບສົມບັດບໍ່ໄດ້ຜິດອັນໃດ ອົງພຣະເຢຊູໄດ້ສອນໃຫ້ໃຊ້ສິ່ງຂອງເປັນຢ່າງດີ ແຕ່ພຣະອົງໄດ້ປະນາມເຖິງການໂລບມາກໂລພາແລະເຫັນແກ່ຕົວເອງ. ທ່ານໄດ້ເຄີຍອ້ອນວອນໃຫ້ພຣະເຈົ້າຊ່ອຍໃນການໃຊ້ເງິນຄຳເພື່ອຊ່ອຍເຫລືອຄົນອື່ນບໍ່? ມີຫລາຍຄົນຮັ່ງມີໄດ້ໃຊ້ເງິນຄຳໃຫ້ເປັນປໂຍດຕໍ່ຣາຊອານາຈັກຂອງພຣະເຈົ້າເພື່ອພວກເຂົາຈະມີຄວາມຊົມຊື່ນຍິນດີແທ້.

ພວກເຮົາທຸກຄົນອາດບໍ່ມີເງິນທ້ອນໂຮມໄວ້ຢ່າງຫລວງຫລາຍ ແຕ່ທຸກຄົນມີໂອກາດທີ່ຈະສະສົມຊັບໃນເມືອງຟ້າສວັນບ່ອນເປັນຢູ່ຕລອດໄປ. ເປັນພະຍານ, ແບ່ງປັນຊ່ອຍຄົນອື່ນ, ໃຫ້ກຽດຄົນອື່ນແມ່ນວິທີໃນການ

ສະສົມຊັບໄວ້ໃນສວັນ. ຂໍ້ສໍາຄັນແມ່ນອຸປະນິສັຍ ຖ້າພວກເຮົາໃຫ້ຄົນອື່ນເພາະພຣະເຈົ້າໄດ້ໃຫ້ແກ່ເຮົາ ແລະ ຖ້າພວກເຮົາຖ່າຍທອດສິ່ງເຫລົ່ານີ້ແກ່ຜູ້ອື່ນ ພຣະເຈົ້າກໍຈະປະທານພຣະພອນອັນຫລວງຫລາຍໃຫ້.

**<u>ຄໍາຖາມ</u>**

1 ທ່ານໄດ້ທ້ອນໂຮມຊັບສິນອັນໃດໃນເມືອງຟ້າສວັນບໍ່?

2 ແມ່ນໃຜເປັນຄົນຊ່ອຍທ່ານໃນຊີວິດນີ້? ດ້ວຍວິທີໃດ?

3 ສິ່ງທີ່ຜ່ານມາມີອັນໃດເຮັດໃຫ້ທ່ານເປັນຂ້ອຍຂ້າຂອງຊັບສິນບໍ່?

4 ຈົ່ງອອກໄປຂ້າງນອກເບິ່ງດອກໄມ້ ແລະນົກ. ມັນເຮັດໃຫ້ທ່ານຄຶດເຖິງພຣະເຈົ້າແນວໃດ?

5 ມີທາງໃດແດ່ທີ່ຊ່ອຍທ່ານໃຫ້ມີທາງອອກຈາກຄວາມກະວົນກະວາຍ?

6 ຄວາມກະວົນກະວາຍເຮັດໃຫ້ຊີວິດຂອງທ່ານລໍາບາກແນວໃດ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 7
# <u>ມອງເຫັນເຖິງອະນາຄົດໃນຣາຊອານາຈັກຂອງພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມັດທາຍ 7:1-27

**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 7:1-27

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊີວິດໃນຣາຊແຜ່ນດິນຂອງພຣະເຈົ້າຕ້ອງສາມາດມອງເຫັນໂດຍຈິດວິນຍານ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮັດຢ່າງໃດພວກເຮົາຈຶ່ງສາມາດຕັດສິນໃຈຖືກດ້ານຈິດວິນຍານ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອສຳຣວດເບິ່ງການຕັດສິນໃຈດ້ານຈິດວິນຍານ.

## ບົດນຳ

ອົງພຣະເຢຊູໄດ້ສອນໃຫ້ຄົນມາຟັງນັ້ນຮູ້ເຖິງຄວາມສຳຄັນຂອງການກວດເບິ່ງໃນຊີວິດຂອງຄຣິສຕຽນເພື່ອບໍ່ໃຫ້ມີອັນໃດຂັດຂວາງໃນການຕິດຕາມພຣະອົງໄປ ຄືໃຫ້ໃຊ້ຄວາມສາມາດມອງເຫັນດ້ານຈິດວິນຍານນັ້ນ. ບາງຄັ້ງການມອງເຫັນດ້ານຈິດວິນຍານເປັນເໝືອນຍ່າງໄປໃນຍາມມືດ ແຕ່ສິ່ງນັ້ນເປັນສິ່ງທີ່ພວກເຮົາໄດ້ເຮັດແຕ່ລະວັນ. ຫລາຍໆເທື່ອພວກເຮົາຕັດສິນໃຈຂຶ້ນກັບສິ່ງເຮົາເຫັນ ຫລືຮູ້ຈັກເພາະມັນເປັນການງ່າຍ. ແຕ່ການຕັດສິນໃຈເຖິງຄວາມຈິງດ້ານຈິດວິນຍານກໍງ່າຍ ເພາະພຣະເຈົ້າສັນຍາວ່າຈະນຳພາຊ່ອຍເຫລືອ ແຕ່ພວກເຮົາຕ້ອງຕິດຕາມແລະເຊື່ອຟັງພຣະອົງ. ການມອງເຫັນດ້ານຈິດວິນຍານຕ້ອງມີສາຍຕາສະຫວ່າງແລະມີໃຈທີ່ເຕັມລົ້ນໃນພຣະເຈົ້າ.

## 1. <u>ພວກເຮົາຕັດສິນຄົນອື່ນໄດ້ບໍ່?</u>: (ມັດທາຍ 7:1-6)

ເວລາອົງພຣະເຢຊູໃຊ້ຄຳເວົ້າ “ຕັດສິນ” ຄວາມໝາຍນັ້ນອາດແມ່ນ: ສຳຣວດກວດກາ ຫລື ລົງໂທດປະນາມ. ຄຣິສຕຽນເຮົາຕ້ອງມອງເຫັນສິ່ງຖືກແລະຜິດ ຄືໃຫ້ສຳຣວດກວດກາ ແຕ່ບໍ່ແມ່ນປະນາມ ເພາະພຣະເຈົ້າເທົ່ານັ້ນສາມາດຕັດສິນໄດ້. ຄຣິສຕຽນພຽງກວດເບິ່ງສິ່ງທີ່ເກີດຂຶ້ນແລະໃຫ້ກຳລັງໃຈເພື່ອໃຫ້ມີຄວາມເຊື່ອດີຂຶ້ນດ້ວຍຄວາມຮັກ. ເມື່ອເຫັນຄຣິສຕຽນຄົນອື່ນໆໄດ້ເຮັດຜິດບາບ ພວກເຮົາກໍຄວນຊ່ອຍເຫລືອໃຫ້ຄົນນັ້ນຄືນດີກັບພຣະເຈົ້າ ບໍ່ແມ່ນປະນາມຫລືລົງໂທດປະການໃດ. ໃຫ້ຈຳໄວ້ວ່າສິ່ງໃດທີ່ພວກເຮົາໄດ້ໃຊ້ກັບຄົນອື່ນ ສິ່ງນັ້ນມັນຈະຫວນກັບມາຫາພວກເຮົາໃນວັນໃດວັນນຶ່ງ ອາດແມ່ນພຣະເຈົ້າ ຫລືທາງຄົນອື່ນ.

ອົງພຣະເຢຊູໄດ້ໃຊ້ຄຳສົມທຽບຂີ້ເຫຍື້ອແລະທ່ອນໄມ້ໃນຕາເພື່ອປະກອບສອນວ່າພວກເຮົາບໍ່ຄວນຕັດສິນຄົນອື່ນ ທັງໆທີ່ມີໄມ້ທັງທ່ອນໃນຕາແລະໄປຕິຕຽນຄົນມີຂີ້ເຫຍື້ອນ້ອຍໆຕິດຕາ. ໂດຍສະເພາະຄົນທີ່ພຣະເຈົ້າອະພັຍໃຫ້ແລ້ວພວກເຮົາຍັງໄປເອົາເຣື່ອງຕັດສິນພວກເຂົາ ແຕ່ຕ້ອງເຂົ້າໃຈວ່າອົງພຣະເຢຊູຍັງຕ້ອງການໃຫ້ພວກເຮົາຮັບຜິດຊອບຊ່ອຍກັນບໍ່ໃຫ້ເຮັດບາບ. ນີ້ໝາຍຄວາມວ່າພຣະເຢຊູຢາກໃຫ້ພວກເຮົາພາກັນເອົາ

ໃຈໃສ່<u>ສາຣະພາບບາບຂອງຕົນເອງກ່ອນ</u> ເພື່ອພວກເຮົາຈະໄດ້ເຫັນແຈ້ງກ່ອນຈະເຫັນຄວາມຜິດຂອງຄົນອື່ນ. ຈຸດປະສົງແມ່ນການຢຽວຢາແລະໃຫ້ຄືນດີກັນ.

ອົງພຣະເຢຊູເອົາຄວາມສັກສິດໄວ້ກັບຜູ້ທີ່ເຊື່ອ ຜູ້ທີ່ປະຕິເສດແລະຕໍ່ຕ້ານທຽບໃສ່ກັບສັດປ່າ ຫລືໝູ. ຂ່າວປະເສີດຈຳເປັນຕ້ອງປະກາດໃຫ້ທຸກຄົນໄດ້ຍິນ ແຕ່ຈະມີຄົນມັກປະຕິເສດແລະຕໍ່ຕ້ານຄວາມຈິງ. ພຣະອົງຍັງເຕືອນບໍ່ໃຫ້ເສັຽເວລາຫລາຍກັບຄົນຕໍ່ຕ້ານໃຈແຂງຕໍ່ຂ່າວປະເສີດ. ຕົວຢ່າງ: ພຣະເຢຊູປະຕິເສດບໍ່ສົນທະນາກັບກະສັດເຮໂຣດວ່າພຣະອົງແມ່ນໃຜ ອາຈານໂປໂລປະຕິເສດບໍ່ໂຕ້ຕອບຜູ້ທີ່ບໍ່ຮັບເອົາຂ່າວປະເສີດ ເພາະວ່າຖ້າໃຊ້ເວລາຫລາຍກັບຄົນຢ່າງນີ້ຈະໄຮ້ປໂຍດ.

## 2. <u>ຈົ່ງຖາມ ຈົ່ງຊອກ ແລະ ຈົ່ງເຄາະ</u>: (ມັດທາຍ 7:7-12)

ເປັນໜ້າສົນໃຈທີ່ອົງພຣະເຢຊູໄດ້ຫັນມາກ່າວເຖິງການອ້ອນວອນຊຶ່ງເສີມເຂົ້າກັບການມອງເຫັນເຖິງອະນາຄົດ. ພຣະເຈົ້າເທົ່ານັ້ນສາມາດຕັດສິນໄດ້ ແຕ່ສ່ວນຜູ້ທີ່ເຊື່ອໃນພຣະອົງຄວນຖາມແລະຂໍສະຕິປັນຍາຈາກພຣະອົງໃນເຣື່ອງນີ້ ພຣະເຢຊູໄດ້ບອກໃຫ້ຜູ້ທີ່ຕິດຕາມພຣະອົງໃຫ້ອ້ອນວອນຂໍ, ຊອກຫາແລະເຄາະປະຕູ ເພາະຄຳເວົ້າສາມຄຳນີ້ໄດ້ເນັ້ນເຖິງຄວາມສຳຄັນຂອງການອ້ອນວອນ. ຜູ້ທີ່ຂໍຈະໄດ້ຮັບ ຜູ້ທີ່ຊອກຫາຈະໄດ້ພົບ ແລະຜູ້ທີ່ເຄາະປະຕູກໍຈະເປີດໃຫ້.

ບົດຮຽນຕອນນີ້ໄດ້ເນັ້ນເຖິງຄວາມສັດຊື່ຂອງພຣະບິດາຜູ້ປະທານຄຳຕອບແກ່ລູກຜູ້ທີ່ທູນຂໍຈາກພຣະອົງ, ບໍ່ແມ່ນລູກເປັນຄົນເກ່ງເພື່ອໃຫ້ພຣະບິດາຊອບໃຈ. ພຣະເຢຊູໄດ້ຍົກເອົາເຣື່ອງພຣະບິດາໃນສວັນແລະຜູ້ເປັນພໍ່ໃນໂລກຂຶ້ນມາກ່າວເພື່ອຜູ້ຟັງຈະເຂົ້າໃຈວ່າ ພຣະບິດາໃນສວັນບໍ່ແມ່ນຫົວໜ້າສານຜູ້ໂຫດຮ້າຍ ແຕ່ແມ່ນພຣະບິດາຜູ້ເຕັມໄປດ້ວຍຄວາມຮັກ. ພໍ່ໃນໂລກນີ້ຜູ້ເປັນຄົນທັມມະດາກໍຍັງຮູ້ເອົາຂອງດີໃຫ້ລູກ ພຣະເຈົ້າຜູ້ເປັນພຣະບິດາຜູ້ບໍຣິສຸດຍິ່ງໄດ້ເອົາຂອງປະເສີດທີ່ສຸດໃຫ້ລູກ.

ອົງພຣະເຢຊູໄດ້ນຳພາເພື່ອໃຫ້ຄວາມຄິດແລະການກະທຳຂອງຜູ້ຕິດຕາມພຣະອົງໄປໃຫ້ເຂົາເຮັດດີ ຫລັກການນີ້ຄົນເຮົາມັກເອີ້ນວ່າກົດ “ທອງຄຳ” ຄືຊິ້ນໄປປາມາ. ໃຫ້ເຮັດຕໍ່ຄົນອື່ນເມື່ອເຮົາຢາກໃຫ້ຄົນອື່ນເຮັດຕໍ່ເຮົາ. ອົງພຣະເຢຊູໄດ້ເນັ້ນເຖິງຄວາມສຳຄັນໃນການຮັບໃຊ້ຄົນອື່ນ.

## 3. <u>ປະຕູແຄບ ແລະທາງກວ້າງ</u>: (ມັດທາຍ 7:13-14)

ໃນສມັຍອົງພຣະເຢຊູແລະທຸກວັນນີ້ມີຄຣູສອນປອມ ພວກເຂົາເປັນນັກຫລອກລວງຄົນອື່ນແລະຕົນເອງ. ອົງພຣະເຢຊູໄດ້ໃຫ້ພາບພົດສອງຢ່າງເພື່ອຈະຮູ້ວ່າຕົນເອງເປັນຄົນແນວໃດ: ພາບຂອງປະຕູແຄບແລະຫົນທາງກວ້າງ. ປະຕູແຄບນັ້ນເປັນພາບຂອງຜູ້ຕິດຕາມອົງພຣະເຢຊູ ແລະພາບຂອງທາງກວ້າງແມ່ນຜູ້ເຮັດຕາມຢ່າງໂລກນີ້ແລະກຽດຊັງພຣະເຈົ້າ. ການຕິດຕາມອົງພຣະເຢຊູນັ້ນເບິ່ງໂດຍຕາມັກຜິດແລະບໍ່ເຂົ້າໃຈໄດ້ງ່າຍ ເພາະເປັນທາງກົງກັນຂ້າມກັບຄວາມເຂົ້າໃຈຂອງຕົນແລະຂອງຄົນສ່ວນຫລາຍໃນໂລກ. ຂໍ້ 14 ພຣະຄັມພີຕອນນີ້ໄດ້ເວົ້າເຖິງອົງພຣະເຢຊູຜູ້ເປັນປະຕູແຄບ ການຮູ້ຈັກກັບພຣະເຈົ້ານັ້ນແຄບແລະຕ້ອງອາສັຍພາຣະກິດຂອງອົງພຣະເຢຊູ. ຜູ້ທີ່ຕິດຕາມອົງພຣະເຢຊູໄປນັ້ນຍ່າງນຳປະຕູແຄບ ພວກເຂົາຕ້ອງປະຖິ້ມສິ່ງຂອງທີ່ຖ່ວງດຶງຫລືເປັນກຳແພງກັ້ນບໍ່ໃຫ້ຕິດຕາມອົງພຣະເຢຊູໄປ. ພຣະເຢຊູເຄີຍສອນມາກ່ອນແລ້ວວ່າຂ້າໃຊ້ບໍ່ສາມາດ

ເປັນຜູ້ຮັບໃຊ້ສອງນາຍໄດ້ ເໝືອນກັບຕິດຕາມອົງພຣະເຢຊູໄປຈະເອົາສິ່ງຂອງໃນໂລກ ຫລືຈະເອົາພຣະອົງ ຕ້ອງຕັດສິນໃຈໃຫ້ດີກ່ອນ.

## 4. ຄຣູສອນແທ້ ຄຣູສອນປອມ ແລະສາວົກ: (ມັດທາຍ 7:15-23)

ອົງພຣະເຢຊູໄດ້ທຽບຄຣູສອນປອມໃສ່ໝາໄນແລະຕົ້ນໄມ້ບໍ່ເກີດຜົນ. ຜູ້ປະກາດພຣະທັມແທ້ກ່າວສິ່ງທີ່ມາຈາກພຣະເຈົ້າ. ໃນສມັຍທຳອິດປະຊາຊົນໃຫ້ກຽດແກ່ຜູ້ປະກາດພຣະທັມ ມີຫລາຍຄົນເປັນຜູ້ປະກາດຫລືຄຣູສອນປອມ ເພາະພວກເຂົາຊັກຊວນໃຫ້ຄົນຟັງຄຳສອນຂອງພວກເຂົາເອງ ແທນທີ່ຈະຟັງສຽງຈາກພຣະເຈົ້າພວກເຂົານຳຄົນເດີນໄປທາງກວ້າງເພື່ອຜົນປໂຍດຂອງຕົນເອງ ຖ້າຈະເບິ່ງທາງນອກແລ້ວພວກເຂົາເປັນເໝືອນແກະທີ່ສັດຊື່ໄຮ້ດຽງສາ ແຕ່ທາງໃນເປັນໝາໄນ.

ດັ່ງນັ້ນ, ຄຣິສຕຽນຕ້ອງມີແສງຕາສາມາດມອງເຫັນຜູ້ປະກາດປອມ ຄືໃຫ້ເບິ່ງຜົນງານແລະການປະພຶດໃນຊີວິດຂອງພວກເຂົາ. ອົງພຣະເຢຊູກ່າວວ່າຕົ້ນໄມ້ບໍ່ດີກໍບໍ່ມີໝາກ ເໝືອນກັບຜູ້ປະກາດຫລືຄຣູສອນປອມບໍ່ສາມາດສອນເຖິງຄວາມຈິງໄດ້. ພຣະເຢຊູຍັງກ່າວເພີ້ມອີກວ່າເຄາະກັມຂອງຜູ້ສອນປອມຈະເປັນເໝືອນຕົ້ນໄມ້ທີ່ບໍ່ຜະລິດຜົນ ຈະໄດ້ຕັດຖິ້ມເພື່ອເອົາຕົ້ນດີມາປູກແທນ. ເຈົ້າຂອງສວນຈະເຜົາຕົ້ນໄມ້ທີ່ເປັນພະຍາດເພື່ອບໍ່ໃຫ້ມັນລາມໄປເຖິງຕົ້ນດີ.

ອົງພຣະເຢຊູໄດ້ກ່າວເຖິງຜູ້ທີ່ຕິດຕາມພຣະອົງໄປເພື່ອຢາກເປັນພວກສາວົກ ຄົນພວກນີ້ກໍເໝືອນກັນ ຊີວິດຂອງພວກເຂົາຈະບອກເຖິງວ່າພວກເຂົາເປັນສາວົກແທ້ຫລື ແຕ່ພຣະເຢຊູກ່າວເພີ້ມວ່າການທີ່ຮ້ອງວ່າ "ພຣະອົງເຈົ້າ ພຣະອົງເຈົ້າ" ບໍ່ເປັນການພຽງພໍເພື່ອຈະເຂົ້າໄປໃນຣາຊແຜນດິນຂອງພຣະເຈົ້າໄດ້. ຄ□າເວົ້າແລະການນັບຖືສາສນາບໍ່ສາມາດທຽບກັບການເຊື່ອຟັງໄດ້.

ອົງພຣະເຢຊູບໍ່ໄດ້ກ່າວວ່າຄົນເຄີຍເປັນຄຣິສຕຽນແລ້ວສູນເສັຽຄວາມພົ້ນ ເພາະຄວາມພົ້ນນັ້ນຂຶ້ນກັບການກະທຳຂອງອົງພຣະເຢຊູ ແຕ່ຫລາຍຄົນເຮັດເປັນຄືຄຣິສຕຽນ ແຕ່ຍັງບໍ່ເຊື່ອ. ການໄດ້ຍິນພຣະທັມຂອງພຣະເຈົ້າຕ້ອງຍອມເຮັດຕາມຄຳສອນ. ການເທສນາ ການຂັບໄລ່ຜີອອກ, ແລະການກະທຳອັສຈັນນັ້ນແມ່ນຄວາມສັກສິດ, ແຕ່ບໍ່ສາມາດເອົາມາແທນການຖິ້ມໃຈເກົ່າແລະເອົາໃຈໃໝ່ແລະມອບຈິດໃຈຖວາຍຕົວຕໍ່ອົງພຣະເຢຊູໄດ້. ການເຊື່ອຟັງແມ່ນສັນຍາລັກຂອງຄວາມເຊື່ອແທ້.

## 5. ຜູ້ກໍ່ສ້າງທີ່ສລາດ ແລະຜູ້ກໍ່ສ້າງທີ່ໂງ່: (ມັດທາຍ 7:24-27)

ອົງພຣະເຢຊູກ່າວວ່າພຣະອົງມີສິດເໝືອນກັບອົງພຣະບິດາ. ພຣະອົງໄດ້ສອນເຖິງຄົນເຊື່ອຟັງເທົ່ານັ້ນກາຍເປັນຄົນສິນທັມໄດ້. ມີນາຍຊ່າງສ້າງຕຶກສອງຄົນ ພວກເຂົາສ້າງຕຶກນັ້ນເບິ່ງທາງນອກແລ້ວມີຮູບລັກສະນະເໝືອນກັນ ແຕ່ໃນທີ່ສຸດເມື່ອລົມພະຍຸພັດມາ ເຫັນວ່າຕຶກທີ່ສ້າງເທິງພື້ນຖານແຂງນັ້ນເຫລືອຢູ່ ເໝືອນກັບຄົນທີ່ມີຄວາມເຊື່ອໃນອົງພຣະເຢຊູຈະຄົງຢູ່ໃນເວລາພິພາກສາຕັດສິນ. ຄົນເຮົາທຸກຄົນເບິ່ງທາງນອກກໍເປັນຄົນຄືກັນ ແຕ່ໃນວັນສຸດທ້າຍຈະມີແຕ່ຜູ້ໄວ້ວາງໃຈໃນອົງພຣະເຢຊູຈະເຫລືອຢູ່ ເພາະພຣະອົງເປັນຫີນດານແຂນແລະເພິ່ງໄດ້. ໃນທີ່ສຸດພຣະອົງໃຫ້ໂອກາດພວກເຮົາຕັດສິນໃຈວ່າຈະຮັບຫລືປະຕິເສດພຣະອົງ.

## ເລື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ຊີວິດທີ່ປະສົບກັບການຜ່ານອຸປະສັກນາໆປະການໄດ້ບອກວ່າຄົນນັ້ນເປັນຜູ້ຕິດຕາມອົງພຣະເຢຊູແທ້ຫລືບໍ່? ອົງພຣະເຢຊູໄດ້ສອນບໍ່ໃຫ້ພວກເຮົາຕັດສິນຄົນອື່ນວ່າເຮົາໄດ້ຮັບຄວາມພົ້ນຫລືບໍ່? ແຕ່ພຣະອົງໃຫ້ເບິ່ງຜູ້ເຊື່ອແທ້ນັ້ນຕ້ອງມີການປະຕິບັດບໍ່ແມ່ນແຕ່ເວົ້າລ້າໆໆ ອົງພຣະວິນຍານບໍຣິສຸດຈະເປັນອົງປະທານໃຫ້ພວກເຮົາຮູ້ຈັກເຖິງຄວາມຈິງ. ການຈະເຣີນແລະມີຄວາມຮູ້ໃນພຣະຄັມພີຈະບອກພວກເຮົາຮູ້ຈັກສິ່ງທີ່ຂັດຈາກພຣະຄັມພີຂອງພຣະເຈົ້າ.

**<u>ຄໍາຖາມ</u>**

1. ທ່ານຄິດວ່າຄົນອື່ນຈະເວົ້າວ່າທ່ານມີຄວາມເຊື່ອໃນພຣະຄຣິດແບບໃດ? ທ່ານຄິດວ່າຄົນອື່ນຈະມອງເຫັນອົງພຣະຄຣິດໃນຊີວິດຂອງທ່ານບໍ່?
2. ເມື່ອທ່ານຈໍາເປັນຕ້ອງຕັດສິນໃຈໃນເຣື່ອງຍາກທ່ານເຮັດແນວໃດເພື່ອຈະເຮັດສິ່ງທີ່ຖືກຕ້ອງ?
3. ທ່ານເຄີຍເຫັນຄຣູສອນປອມຫລອກລວງສອນເຖິງຄວາມໝາຍຜິດເຣື່ອງຕິດຕາມອົງພຣະເຢຊູບໍ?
4. ທ່ານເຮັດແນວໃດເຣື່ອງການຮັບຜິດຊອບໃນຊີວິດ?
5. ເມື່ອຖືກຕັດສິນຈາກຄົນອື່ນ ທ່ານມີຄວາມຮູ້ສຶກຢ່າງໃດ? ແລະທ່ານເຮັດແນວໃດ?
6. ທ່ານເຮັດແນວໃດໃນຄໍາວ່າ "ຢ່າເອົາຂອງດີໃຫ້ໝາ" ແລະຍັງຊອກໂອກາດຂໍ ຊອກຫາ ແລະເຄາະເພື່ອຢາກປະກາດຂ່າວປະເສີດມີບໍ່? ເວລາໃດທ່ານຄວນຢຸດເວົ້າເຣື່ອງຂ່າວປະເສີດແກ່ຄົນອື່ນ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 8

## ການຫວ່ານພືດແລະຄວາມເລິກລັບ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້**: ມັດທາຍ 13: 1-23

**ພູມຫລັງຂອງພຣະຄັມພີ**: ມັດທາຍ 13: 1-23

**ຈຸດສໍາຄັນສໍາລັບບົດຮຽນນີ້:** ສະພາບຂອງຈິດໃຈບົ່ງເຖິງການຕອບຮັບພຣະເຢຊູແລະພຣະຄໍາ.

**ຄໍາຖາມເພື່ອຄົ້ນຄວ້າ**: ຈິດໃຈຂອງທ່ານໃນປັດຈຸບັນຢູ່ໃນສະພາບໃດ?

**ຈຸດປະສົງຂອງການສຶກສານີ້:** ເພື່ອສໍາຣວດເບິ່ງສະພາບຈິດໃຈຂອງຂ້ອຍແລະການພ້ອມທີ່ຈະຕ້ອນຮັບພຣະຄໍາຂອງພຣະເຈົ້າ.

**ອ່ານລວບ:** ພຣະເຢຊູຊົງອະທິບາຍວິທີທາງຕ່າງໆຊຶ່ງຄົນທັງຫລາຍຈະຕອບຮັບຂ່າວປະເສີດ, ເຕືອນພວກເຮົາວ່າຫລາຍຄົນຈະປະຕິເສດ ແລະຫລາຍຄົນຈະຕ້ອນຮັບດ້ວຍຄວາມຍິນດີ.

### ຄໍານໍາ

ຄອບຄົວຂອງຂ້ອຍກໍາຫາກັບມາຈາກເປັນຊາໂກລາ ຊຶ່ງພວກເຮົາເຄີຍຢູ່ສມັຍຂ້ອຍເປັນສິດຍາພິບານຢູ່ເມືອງນັ້ນ ພັລຍາແລະຂ້ອຍດີໃຈທີ່ໄດ້ເຫັນໝູ່ຄູ່ ທັງໄດ້ເຫັນລູກມີຄວາມສຸກເພາະໄດ້ຫລິ້ນກັບໝູ່ເກົ່າຂອງເຂົາເຈົ້າ. ນາງຄາຣາຜູ້ເປັນລູກສາວຢາກຢູ່ກັບໝູ່ໃກ້ຊິດຂອງລາວອີກໜ້ອຍນຶ່ງ, ສະນັ້ນພວກເຮົາຈຶ່ງປະລາວໄວ້ກັບໝູ່ແລະມາຮັບເອົາລາວກ່ອນຈະໄປທະເລ.

ໝູ່ຂອງຄາຣາເປັນຄົນຊ້າທີ່ຈະເຂົ້າໃຈ ແລະລາວຍັງຄືເກົ່າຫລັງຈາກທີ່ພວກເຮົາໄດ້ຍົກຍ້າຍຈາກເປັນຊາໂກລາ. ໃນເວລາທີ່ພວກເຮົາຂັບຣົດກັບ, ຄາຣາໄດ້ອ່ານປຶ້ມຊວນຫົວ ແຕ່ປາກົດວ່າໝູ່ຂອງລາວບໍ່ຮູ້ສຶກຫວັ່ນໄຫວເລີຍໃນຂະນະທີ່ຄົນອື່ນໆພາກັນຫົວ; ຄາຣາຕ້ອງໄດ້ອະທິບາຍໃຫ້ໝູ່ຟັງທຸກເຣື່ອງທີ່ອ່ານ ແລະໃນທີ່ສຸດໝູ່ລາວກໍຫົວເໝືອນກັບຄົນອື່ນໆ. ບາງຄັ້ງພວກເຮົາກໍຊ້າໃນຄວາມເຂົ້າໃຈເຊັ່ນນັ້ນເໝືອນກັນ.

ພຣະເຢຊູເມື່ອເບິ່ງພວກສາວົກ, ພຣະອົງກໍອາດຈະຮູ້ສຶກເຊັ່ນນັ້ນ; ພຣະເຢຊູຊົງຮູ້ວ່າສັດຕຣູຂອງພຣະອົງທີ່ຢູ່ຖ້າມກາງປະຊາຊົນກໍບໍ່ເຂົ້າໃຈຄໍາອຸປມາ ເພາະຈິດໃຈຂອງພວກເຂົານັ້ນແຂງກະດ້າງ. ແຕ່ວ່າ ເມື່ອຊົງເຫັນພວກສາວົກຂາດຄວາມເຂົ້າໃຈ ພຣະເຢຊູຊົງເກີດຄວາມທາງດຫງິດ. ນັ້ນຄືສິ່ງທີ່ພວກເຮົາຈະເຫັນໃນພຣະຄໍາຕໍ່ໄປນີ້; ພຣະເຢຊູກ່າວຄໍາອຸປມາກັບພວກສາວົກແລະຄົນທັງຫລາຍ ແລະໃນເວລາຕໍ່ມາພຣະອົງຈໍາຕ້ອງໄດ້ອະທິບາຍໃຫ້ພວກສາວົກຟັງອີກ.

## 1. <u>ຄຳອຸປມາເຣື່ອງຜູ້ຫວ່ານ:</u> (ມັດທາຍ 13: 1-9)

ພຣະເຢຊູຊົງປະທັບຢູ່ແຄມທະເລ (13:1) ແລະຄົນຫລວງຫລາຍໄດ້ເຂົ້າມາຫຸ້ມຟັງພຣະອົງ. ພຣະຄຳພີກ່າວວ່າ "ພຣະອົງຊົງກ່າວກັບເຂົາຫລາຍປະການເປັນຄຳອຸປມາ" (13:3). ຄຳອຸປມາມີຫລາຍປະເພດ ເຊັ່ນເຣື່ອງທີ່ເປັນຄວາມຈິງ, ເປັນທັມມະຈະຣິຍາ, ເປັນຄຳສອນສຳລັບຊີວິດ, ຫລືເປັນເຣື່ອງກົງກັນຂ້າມ. ແຕ່ພຣະເຢຊູຊົງໃຊ້ຄຳອຸປມາເພື່ອອະທິບາຍຣາຊອານາຈັກຂອງພຣະເຈົ້າ.

ພຣະເຢຊູກ່າວວ່າມີຄົນນຶ່ງອອກໄປຫວ່ານພືດ; ພຣະອົງບໍ່ໄດ້ຊົງບອກວ່າເປັນຊາຍຫລືຍິງ, ເປັນຜູ້ເຖົ້າຫລືຄົນໜຸ່ມ; ແຕ່ພຣະອົງໄດ້ຊົງເນັ້ນເຣື່ອງດິນທີ່ເມັດພືດຕົກໃສ່. ພຣະອົງຊົງກ່າວເຖິງດິນສີ່ປະເພດ: 1. ຫົນທາງ; ເມັດບໍ່ທັນໄດ້ແຕກ ເພາະນົກມາກິນກ່ອນ (13: 4), 2. ບ່ອນຫີນຫລາຍດິນໜ້ອຍ; ເມັດ "ຈຶ່ງງອກຂຶ້ນໂລດ ແຕ່ດິນບໍ່ເລິກ" ເມື່ອແດດອອກກໍຮ່ຽວແຫ້ງເພາະຮາກບໍ່ມີ (13: 5-6), 3. ພຸ່ມໜາມ; ເມື່ອເມັດປົ່ງຂຶ້ນກໍຖືກໜາມຫຸ້ມຮັດ (13: 7), ແລະ 4. ດິນດີ; ເມັດເກີດຜົນ "ເມັດນຶ່ງຮ້ອຍຕໍ່, ເມັດນຶ່ງຫົກສິບຕໍ່, ເມັດນຶ່ງສາມສິບຕໍ່" (13: 8).

ພຣະເຢຊູໄດ້ປິດຄຳອຸປມາວ່າ "ຜູ້ໃດມີຫູ ຈົ່ງຟັງເອົາ" (13: 9). ພຣະຄຳນີ້ບອກໃຫ້ຮູ້ວ່າຄວາມຮັບຜິດຊອບເປັນຂອງຜູ້ຟັງ; ທຸກຄົນທີ່ໄດ້ຟັງຂ່າວປະເສີດມີໜ້າທີ່ໃນການຕັດສິນໃຈວ່າຈະຮັບເອົາ ຫລືປະຕິເສດ.

## 2. <u>ວິທີສັ່ງສອນ:</u> (ມັດທາຍ 13: 10-17)

ສາວົກໄດ້ຂໍພຣະເຢຊູໃຫ້ອະທິບາຍວ່າເປັນຫຍັງພຣະອົງຈຶ່ງສອນດ້ວຍຄຳອຸປມາ(13: 10). ພຣະອົງຊົງອະທິບາຍວ່າຄຳອຸປມາສາມາດໃຫ້ຄວາມແຈ່ມແຈ້ງ ແລະເຮັດໃຫ້ເກີດສັບສົນໄປພ້ອມກັນ; ສຳລັບບາງຄົນ, ຄຳອຸປະມາເປີດເຜີຍຄວາມເລິກລັບເຣື່ອງຣາຊອານາຈັກພຣະເຈົ້າ (13: 11); ຄວາມເລິກລັບຄືສິ່ງທີ່ບຸກຄົນບໍ່ສາມາດເຂົ້າໃຈຖ້າພຣະເຈົ້າບໍ່ຊົງເປີດເຜີຍ. ຫລາຍຄົນຈະເຫັນຄວາມຈິງຈາກຄຳອຸປມາ, ແຕ່ອີກຫລາຍຄົນຈະບໍ່ເຂົ້າໃຈສິ່ງໃດເລີຍ. ສຳລັບພວກທີສອງຄຳອຸປມາໄດ້ເຮັດໃຫ້ພວກເຂົາສັບສົນຫລາຍຂຶ້ນ. ພຣະເຢຊູໄດ້ຊົງໃຊ້ພຣະຄຳ ເອຊາຢາ 9: 6 ເພື່ອຕອບຄຳຂ້ອງໃຈຂອງສາວົກ. “ເຈົ້າທັງຫລາຍຈະໄດ້ຍິນແທ້ແຕ່ຈະບໍ່ເຂົ້າໃຈຈັກເທື່ອ ຈະໄດ້ເຫັນແທ້ແຕ່ຈະບໍ່ໄດ້ສັງເກດຈັກເທື່ອ…" ສລຸບແບບສັ້ນໆກໍຄືວ່າ ພຣະເຈົ້າຈະເພີ້ມເຕີມໃຫ້ຜູ້ທີ່ມີເພື່ອຈະມີບໍຣິບູນ ແຕ່ຜູ້ທີ່ບໍ່ມີພຣະອົງຈະຊົງຍົກເອົາໄປຈາກຜູ້ນັ້ນ (13: 12). ພຣະເຈົ້າຊົງສາມາດເຕີມແກ້ວທີ່ເຕັມແລ້ວ; ເວົ້າອີກແບບນຶ່ງກໍຄືວ່າ, ສາວົກເຂົ້າໃຈຄວາມໝາຍຂອງຄຳອຸປມາ ເພາະເປັນສິ່ງທີ່ພວກເຂົາເຈົ້າມີແລ້ວ; ແຕ່ພວກຄົນທັງຫລາຍບໍ່ເຂົ້າໃຈຄວາມໝາຍຂອງຄຳອຸປມາ ເພາະເປັນສິ່ງທີ່ພວກເຂົາເຈົ້າບໍ່ມີ. ສິ່ງທີ່ເວົ້າເຖິງນັ້ນຄືຄວາມເຊື່ອໃນພຣະຄຣິດ. ຄົນທັງຫລາຍບໍ່ເຂົ້າໃຈຄຳສອນເພາະພວກເຂົາບໍ່ມີຫູທີ່ຈະຟັງ.

ມັນອາດຈະເປັນເຫດຜົນອັນນຶ່ງທີ່ພຣະເຢຊູຊົງໃຊ້ຄຳອຸປມາໃນການສັ່ງສອນຂອງພຣະອົງ. ຄົນທັງຫລາຍມາຫາພຣະອົງ, ພວກເຂົາເຂົ້າໃຈໃນສິ່ງທີ່ພຣະເຢຊູຊົງຖາມພວກເຂົາບໍ່? ແຕ່ພວກເຂົາພ້ອມທີ່ຈະເສັຽສະລະບໍ່? ບາງທີພຣະອົງອາດຈະໃຊ້ຄຳອຸປມາໃນການສອນເພື່ອແຍກຜູ້ທີ່ເຊື່ອແທ້ຈາກຜູ້ທີ່ຕິດຕາມເພື່ອໃຫ້ເຫັນສິ່ງທີ່ພຣະອົງຊົງກະທຳ.

## 3. **<u>ຄຳອະທິບາຍ:</u>** (ມັດທາຍ 13: 18-23)

ເລີ້ມຈາກຂໍ້ 18, ພຣະເຢຊູຊົງອະທິບາຍຄວາມໝາຍຂອງຄຳອຸປມາໃຫ້ພວກສາວົກຟັງ. ເມັດພືດຄືພຣະທັມເຣື່ອງຣາຊອານາຈັກ; ພຣະອົງຊົງອະທິບາຍເຖິງດິນສີ່ປະເພດ: 1.) ຫົນທາງຄືຜູ້ທີ່ຟັງພຣະທັມແຕ່ບໍ່ເຂົ້າໃຈ (13:19), 2.) ບ່ອນຫີນຫລາຍດິນນ້ອຍແມ່ນຜູ້ທີ່ຮັບພຣະທັມດ້ວຍຄວາມຍິນດີ ແຕ່ທົນຢູ່ບໍ່ໄດ້ດົນແຕ່ທໍ້ຖອຍເພາະຄວາມຍາກລຳບາກ ຫລືການຂົ່ມເຫງພຣະທັມນັ້ນ (13: 20-21), 3.) ພຸ່ມໜາມບອກເຖິງຜູ້ທີ່ຢາກຮັບພຣະທັມ ແຕ່ "ຄວາມກັງວົນຕາມທັມມະດາໂລກ ແລະຄວາມຫລອກລວງແຫ່ງຊັບສິນບັດ" ໄດ້ຫຸ້ມຮັດພຣະທັມໄວ້ຈຶ່ງບໍ່ເກີດຜົນ (13: 22), ແລະ 4.) ດິນດີ "ໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມ ແລະເຂົ້າໃຈ ຜູ້ນັ້ນກໍເກີດຜົນໄດ້ຮ້ອຍຕໍ່ແດ່, ຫົກສິບຕໍ່ແດ່, ແລະສາມສິບຕໍ່ແດ່" (13: 23).

ແມ່ນຫຍັງຄືສິ່ງທີ່ພວກເຮົາຄວນເຂົ້າໃຈຈາກຄຳອຸປມາເຣື່ອງຜູ້ຫວ່ານເມັດພືດ? ສຳລັບຜູ້ທີ່ຕິດຕາມພຣະອົງ: ການໄດ້ຍິນພຣະທັມນັ້ນບໍ່ພຽງພໍເທື່ອ; ພວກເຂົາຈະຕ້ອງໃຫ້ພຣະທັມເກີດຮາກໃນຈິດໃຈຂອງຕົນໂດຍທາງຄວາມເຊື່ອ ເພື່ອເມັດນັ້ນຈະເກີດຜົນຝ່າຍຄວາມຊອບທັມໃນຊີວິດ. ສຳລັບພວກສາວົກແລະຜູ້ຍິງທີ່ຕິດຕາມພຣະອົງ: ພຣະອົງໄດ້ອະທິບາຍສິ່ງອັສຈັນທີ່ພວກເຂົາກຳລັງເຫັນ. ຫລາຍຄົນໄດ້ຮັບພຣະຄຳຂອງພຣະຄຣິດ ແລະຕິດຕາມພຣະອົງດ້ວຍຄວາມຍິນດີ ໃນຂະນະທີ່ອີກຫລາຍຄົນໄດ້ປະຕິເສດພຣະຄຳ ແລະໄດ້ພາກັນຕໍ່ສູ້ພຣະອົງ. ເປັນຫຍັງຈຶ່ງຕ້ອງເປັນເຊັ່ນນັ້ນ? ສະພາບຈິດໃຈຂອງພວກເຂົາບົ່ງເຖິງການຕອບຮັບພຣະຄຳ.

## <u>ນຳໄປປະຕິບັດ</u>

ຄຳອຸປມາຂອງພຣະເຢຊູເປັນຄຳເຕືອນສຳລັບຄຣິສຕະຈັກໃນປັດຈຸບັນ. ໃນຂະນະທີ່ພວກເຮົາກຳລັງຫວ່ານຂ່າວປະເສີດອອກໄປໃນໂລກ, ການຕອບຮັບຈະບໍ່ຢູ່ໃນທາງບວກສເມີ. ແທນທີ່ຈະທໍ້ຖອຍເພາະການຖືກປະຕິເສດ ໃຫ້ພວກເຮົາຍອມຮັບຄຳຕອບທຸກປະເພດ; ແທນທີ່ຈະຍົກເລີກເພາະການຕອບຮັບໃນທາງລົບ ໃຫ້ພວກເຮົາຖືເປັນກຳລັງໃຈ.

ຄຳອຸປມາຂອງພຣະເຢຊູເປັນຄວາມຫວັງສຳລັບຄຣິສຕະຈັກ ເພາະບໍ່ແມ່ນທຸກຄົນທີ່ໄດ້ຍິນພຣະຄຳຈະປະຕິເສດ, ແຕ່ຍັງມີຄົນທີ່ລໍຄອຍຕອບຮັບເອົາພຣະຄຳຢູ່; ນັ້ນລະຄືດິນປະເພດທີສີ່ໃນຄຳອຸປມາຂອງພຣະເຢຊູ. ເມື່ອພຣະທັມໄດ້ຖືກຫວ່ານໄປຖືກດິນດີ ຜົນອັນບໍຣິບູນກໍຈະປາກົດສຳລັບຣາຊອານາຈັກພຣະເຈົ້າ. ໃຫ້ພວກເຮົາໃສ່ໃຈໃນສິ່ງນີ້.

## <u>ຄຳຖາມ:</u>

1. ແມ່ນຫຍັງເຮັດໃຫ້ຈິດໃຈບາງດວງເປີດຮັບຂ່າວປະເສີດ ແລະເຮັດໃຫ້ບາງດວງປິດໄວ້?

2. ຄຣິສຕະຈັກສາມາດເຮັດຫຍັງໄດ້ແດ່ເພື່ອໃຫ້ດິນກາຍເປັນດິນດີ ກ່ອນການປະກາດ ແລະຫລັງຈາກການປະກາດຂ່າວປະເສີດ?

3. ຄຳອຸປມາຂອງພຣະເຢຊູໄດ້ໃຫ້ກຳລັງໃຈພວກເຮົາວິທີໃດແດ່ໃນການຫວ່ານເມັດພືດຂອງຂ່າວປະເສີດ? ຄຳອຸປມາໄດ້ເຕືອນພວກເຮົາແນວໃດ?

4. ການໃຊ້ຄຳອຸປມາຂອງພຣະເຢຊູຄຣິດ ແລະການສັ່ງສອນແລະເທສນາໃນຄຣິສຕະຈັກຂອງທ່ານແຕກຕ່າງກັນຢ່າງໃດ?

5. ທ່ານຈະອະທິບາຍດິນໃນຈິດໃຈຂອງທ່ານວ່າເປັນດິນປະເພດໃດ? ເປັນຫຍັງ?

*ສ.ຄ.*

# ບົດຮຽນທີ 9

## <u>ການອະພັຍໂທດໃນຣາຊອານາຈັກ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້</u>**: ມັດທາຍ 18: 21-35

**<u>ພູມຫລັງຂອງພຣະຄັມພີ</u>**: ມັດທາຍ 18: 15-35

**<u>ຈຸດສໍາຄັນສໍາລັບບົດຮຽນນີ້:</u>** ພົລເມືອງຂອງຣາຊອານາຈັກອະພັຍໂທດຄົນອື່ນ ແທນທີ່ຈະຈົດຈໍາໄວ້.

**<u>ຄໍາຖາມເພື່ອຄົ້ນຄວ້າ</u>**: ພວກເຮົາຈົດຈໍາໄວ້ ຫລືໃຫ້ອະພັຍຄົນອື່ນໆ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອຍອມຮັບຄວາມທ້າທາຍເຣື່ອງການອະພັຍໂທດຄົນອື່ນໆ ແທນທີ່ຈະຈົດຈໍາໄວ້.

**<u>ອ່ານລວບ:</u>** ພຣະເຢຊູຊົງໃຊ້ຄໍາອຸປມາເພື່ອໃຫ້ຕົວຢ່າງເຖິງຄວາມເສັຽຫາຍເວລາພວກຜູ້ເຊື່ອບໍ່ຍອມອະພັຍໂທດໃຫ້ກັນແລະກັນໃນເມື່ອພຣະເຈົ້າໄດ້ຊົງໃຫ້ອະພັຍໂທດພວກເຂົາແລ້ວ.

### <u>ຄໍານໍາ</u>

ໃນຕອນທີ່ຈັກພັດໂຣມເລີ້ມໝົດອໍານາດ, ຄົນຊາວເຜົ່າເຊນຕິກໄດ້ລັກຈັບເອົາຊາວໜຸ່ມຄົນນຶ່ງອາຍຸສິບຫົກປີໄປຂາຍໃຫ້ເປັນຂ້າທາດທີ່ປະເທດໄອແລນ. ຊາວໜຸ່ມຜູ້ນີ້ຕ້ອງໄດ້ເຮັດວຽກຢ່າງລໍາບາກ; ແຕ່ຫລັງຈາກຫ້າປີຜ່ານໄປ, ລາວສາມາດໂດດໜີຈາກເຈົ້ານາຍ. ຫລັງຈາກຍ່າງຕາມຊາຍທະເລໄດ້ປະມານສອງຮ້ອຍໄມ ລາວກໍໄດ້ພົບເຮືອກໍາປັ່ນ ແລະເຮືອນັ້ນໄດ້ນໍາລາວມາເຖິງບ້ານເກີດ; ເວລາມາຢູ່ບ້ານ ແທນທີ່ຈະມີຄວາມສຸກລາວໄດ້ເກີດຄວາມທຸກລໍາບາກເພາະຄວາມຝັນແບບຕໍ່ເນື່ອງວ່າ ພວກຜູ້ທີ່ເຄີຍຈັບລາວຂາຍເປັນທາດໄດ້ອ້ອນວອນໃຫ້ລາວກັບໄປໄອແລນເພື່ອແບ່ງປັນຂ່າວປະເສີດໃຫ້ກັບພວກເຂົາ.

ຊາຍໜຸ່ມຄົນນີ້ສາມາດເອົາຊະນະຄວາມຢ້ານກົວ ແລະຕັດສິນໃຈທີ່ຈະໄປປະເທດໄອແລນເມື່ອໄປຫາພວກທີ່ລາວຝັນເຫັນເປັນປະຈໍາ. ລາວໜີຈາກບ້ານທີ່ປອດພັຍ ແລ້ວກັບໄປຫາດິນແດນທີ່ເຄີຍເປັນທາດ. ລາວໄດ້ປ່ຽນຊື່ຈາກປາຕຣິຊິອັດ ເປັນປາຕຣິກ; ເພາະລາວພ້ອມທີ່ຈະອະພັຍໂທດຄົນທີ່ເຄີຍຈັບກຸມລາວ ແລະນໍາຂ່າວປະເສີດໄປໃຫ້ພວກເຂົາ, ຊາຍໜຸ່ມຄົນນີ້ໄດ້ຖືກສະຖາປະນາໃຫ້ເປັນນັກບຸນທີ່ປະເທດໄອແລນ ໃນຄາວຕໍ່ມາ. ນັກບຸນປາຕຣິກໄດ້ສະແດງເຖິງການຍອມໃຫ້ອະພັຍ ຊຶ່ງພຣະເຢຊູໄດ້ຊົງເອີ້ນໃຫ້ເຮັດໃນບົດຮຽນນີ້.

### 1. <u>ຄໍາຖາມຂອງເປໂຕ:</u> (ມັດທາຍ 18: 21-22)

ເປໂຕໄດ້ຖາມພຣະເຢຊູເຣື່ອງການໃຫ້ອະພັຍໂທດເມື່ອລາວໄດ້ຍິນພຣະອົງອະທິບາຍເຣື່ອງການເຮັດກັບພີ່

ນ້ອງທີ່ເຮັດຜິດບາບຕໍ່ພວກເຮົາ (ມທ 18: 15-17). ເປໂຕກ່າວໃນທຳນອງນີ້ວ່າ, "ຂ້ານ້ອຍຕ້ອງຍົກຜິດໃຫ້ພີ່ນ້ອງຂອງຂ້ານ້ອຍຈັກເທື່ອ?" (18: 21). ເພາະລາວຢາກເປັນຄົນໃຈໃຫຍ່ແດ່, ເປໂຕຈຶ່ງຕື່ມວ່າ "ເຖິງເຈັດເທື່ອຫລື" ເພາະຕາມປົກກະຕິແລ້ວພວກຄູສອນຂອງຊາວຢິວຈະກຳໜົດໄວ້ສາມເທື່ອ. ພຣະເຢຊູໄດ້ຊົງຕອບວ່າ, "ເຮົາບໍ່ໄດ້ບອກພຽງເຈັດເທື່ອເທົ່ານັ້ນ ແຕ່ເຖິງເຈັດສິບເທື່ອຄູນກັບເຈັດ" (18: 22).

ຄວາມຈິງແລ້ວຄົງບໍ່ມີໃຜທີ່ຮູ້ແນ່ນອນວ່າການຍົກຜິດໃຫ້ພີ່ນ້ອງຕ້ອງຍົກກັນຈັກເທື່ອ; ແຕ່ຕົວເລກເຈັດທີ່ພຣະເຢຊູຊົງແນະນຳເປັນເລກທີ່ຖືວ່າບໍຣິບູນໃນສມັຍນັ້ນ. ເຈຕນາຂອງພຣະເຢຊູແມ່ນຢາກສອນໃຫ້ເຫັນວ່າການອະພັຍໂທດບໍ່ຕ້ອງມີຂອບເຂດ; ໃນຂະນະດຽວກັນ ຖ້າພວກເຮົາຕັ້ງໃຈນັບວ່າໄດ້ຍົກຜິດຄົນອື່ນຫລາຍປານໃດແລ້ວ ກ່ອນທີ່ຈະເຖິງຄັ້ງທີ 470 ພວກເຮົາກໍຄົງສຳນຶກວ່າຕົນເອງບໍ່ໄດ້ໃຫ້ອະພັຍຄົນນັ້ນໆເລີຍ. ພຣະເຢຊູໄດ້ຊົງຕອບການວາງກຳໜົດໃນການໃຫ້ອະພັຍພີ່ນ້ອງຂອງເປໂຕດ້ວຍນ້ຳເບີທີ່ໃຫຍ່ກວ່າ ເປັນການສອນວ່າການອະພັຍບໍ່ຢູ່ທີ່ຕົວເລກ ແຕ່ຢູ່ທີ່ຈິດໃຈ. ໂປໂລໄດ້ຂຽນໄວ້ໃນ 1 ໂກຣິນໂທ 13: 5 ວ່າຄວາມຮັກ "ບໍ່ຊອບຈົດຈຳຄວາມຜິດ."

## 2. <u>ຄຳອຸປມາຂອງພຣະເຢຊູ:</u> (ມັດທາຍ 18: 23-34)

ພຣະເຢຊູໄດ້ຊົງໃຫ້ຕົວຢ່າງເຣື່ອງການໃຫ້ອະພັຍເປັນຄຳອຸປມາຊຶ່ງມີທ່ານມັດທາຍຜູ້ດຽວທີ່ໄດ້ບັນທຶກໄວ້. ຜູ້ຂຽນຄົນອື່ນມັກໃຊ້ຄຳວ່າ "ຣາຊອານາຈັກພຣະເຈົ້າ" ແຕ່ທ່ານມັດທາຍໄດ້ໃຊ້ຄຳວ່າ "ຣາຊອານາຈັກສວັນ" (18: 23); ທັງສອງຄຳ ເວົ້າເຖິງສິ່ງດຽວກັນຄືການສາມັກຄີທັມຂອງຜູ້ເຊື່ອ.

ຄຳອຸປມາຂອງພຣະເຢຊູໃນຕອນນີ້ໄດ້ແບ່ງເປັນສາມພາກໃຫຍ່. ພາກນຶ່ງ:ເຈົ້າກະສັດອົງນຶ່ງຕ້ອງການຄິດບັນຊີກັບພວກຂ້າໃຊ້ທີ່ເປັນໜີ້ (18: 23); ຂ້າໃຊ້ຜູ້ນີ້ "ເປັນໜີ້ໝື່ນຕາລັນຕົນ" (18: 24). ນັກວິຈັຍຫລາຍຄົນມັກຕີມູນຄ່າໃສ່ເງິນໃນສມັຍນີ້ ແລະຕ່າງຄົນກໍອອກຈຳນວນມາບໍ່ຄືກັນ; ຄວາມຈິງແລ້ວພວກເຮົາຮູ້ວ່າເປັນເງິນຈຳນວນຫລາຍສົມຄວນຈົນຂ້າໃຊ້ຜູ້ນີ້ບໍ່ສາມາດທີ່ຈະທົດແທນໄດ້ (18:25). ຂ້າໃຊ້ບໍ່ມີທາງເລືອກນອກຈາກຂໍໃຫ້ກະສັດຜ່ອນຜັນໃຫ້ (18: 26). ເຈົ້າກະສັດເກີດຄວາມເມດຕາຈຶ່ງປ່ອຍຕົວຂ້າໃຊ້ ພ້ອມທັງຍົກໜີ້ໃຫ້ຜູ້ກ່ຽວ (18: 27).

ພາກສອງ: ເມື່ອຂ້າໃຊ້ຜູ້ຖືກຍົກໜີ້ອອກຈາກກະສັດໄປ ລາວໄດ້ພົບເພື່ອນຂ້າໃຊ້ທີ່ເປັນໜີ້ຕົນ "ນຶ່ງຮ້ອຍເດນາຣິອົນ" (18: 28). ຈຳນວນໜີ້ຖືວ່າໜ້ອຍສຳລັບຄົນໃນສມັຍນັ້ນ; ບາງຄົນບອກວ່າຄົງຈະປະມານນຶ່ງຮ້ອຍໂດລາອະເມຣິກາ ແຕ່ໜີ້ທີ່ລາວເຄີຍຕິດເຈົ້າກະສັດແມ່ນປະມານສິບລ້ານໂດລາ. ແທນທີ່ຂ້າໃຊ້ຄົນນີ້ຈະຍົກໜີ້ໃຫ້ໝູ່ຂອງຕົນ ລາວກັບໄປຈັບບີບຄໍເຂົາແລ້ວສັ່ງໃຫ້ໃຊ້ໜີ້ໃນທັນໃດນັ້ນ; ເມື່ອລາວຂໍຄວາມເມດຕາ ແລະຂໍເວລາຕໍ່ ຂ້າໃຊ້ຄົນນັ້ນກໍບໍ່ຍອມອະພັຍແລະຈັບລູກໜີ້ໄປຂັງ (18: 29-30).

ພາກສາມ:ເຣື່ອງຄວາມໂຫດຮ້າຍຂອງຂ້າໃຊ້ຜູ້ບໍ່ມີຄວາມເມດຕາໄດ້ຍິນໄປເຖິງເຈົ້າກະສັດ; ພຣະອົງຈຶ່ງເອີ້ນຂ້າໃຊ້ຜູ້ນັ້ນມາເຝົ້າ; "32…ແລ້ວໄດ້ຊົງກ່າວວ່າ 'ອ້າຍຂີ້ຂ້າຊາດຊົ່ວເຮີຍ, ກູໄດ້ຍົກໜີ້ໃຫ້ມຶງທັງໝົດເພາະມຶງ

ໄດ້ອ້ອນວອນຂໍນຳກູ 33 ມຶງຄວນຈະສົງສານເພື່ອນຂອງມຶງເໝືອນດັ່ງກູໄດ້ສົງສານມຶງ ບໍ່ແມ່ນຫລື" (18:32 -33). ກະສັດຊົງໄດ້ສັ່ງເຈົ້າໜ້າທີ່ໃຫ້ຈັບຂ້າໃຊ້ຜູ້ຊາດຊົ່ວນັ້ນໄປທໍາຣະມານໄວ້ຈົນກວ່າມັນຈະໃຊ້ໜີ້ພຣະອົງໃຫ້ໝົດ (18: 34).

## 3. **ຄໍາເຕືອນຂອງພຣະເຢຊູ:** (ມັດທາຍ 18: 35)

ໃນຂະນະທີ່ພວກເຮົາອ່ານຄໍາອຸປມາຂອງພຣະເຢຊູເຣື່ອງການໃຫ້ອະພັຍ, ໃຫ້ພວກເຮົາຈົດຈໍາໄວ້ວ່າຄໍາອຸປມານີ້ບໍ່ໄດ້ສອນວ່າອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເປັນເໝືອນເຈົ້າກະສັດໃນເຣື່ອງນີ້. ໃນກໍຣະນີທີ່ພຣະເຢຊູຊົງປະສົງຈະປຽບທຽບຄົນໃນເຣື່ອງໃສ່ກັບພຣະເຈົ້າ, ພຣະອົງຈະເພີ້ມຄໍາແນະນໍາເໝືອນທີ່ພວກເຮົາໄດ້ເຫັນຢູ່ໃນພາກສຸດທ້າຍຂອງການສອນເຣື່ອງອ້ອນວອນໃນ ລູກາ 11: 1-13. ໃນຕອນທ້າຍພຣະເຢຊູຊົງກ່າວວ່າ, "ເຫດສັນນັ້ນຖ້າທ່ານທັງຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາຜູ້ຊົງສະຖິດຢູ່ໃນສວັນຈະຊົງປະທານພຣະວິນຍານບໍຣິສຸດແກ່ຜູ້ທີ່ຂໍຈາກພຣະອົງ."

ຄໍາວ່າ "ຢ່າງນັ້ນແຫລະ" ເປັນປັດຈັຍສໍາຄັນໃນມັດທາຍ 18, ແຕ່ໃນຕອນນີ້ພຣະເຢຊູໄດ້ປຽບທຽບພຣະເຈົ້າໃສ່ກະສັດຂອງມະນຸດ ແທນທີ່ຈະປຽບທຽບພຣະເຈົ້າໃສ່ກັບພໍ່ໃນໂລກມະນຸດ. ພຣະເຢຊູບໍ່ໄດ້ຊົງສອນວ່າພຣະເຈົ້າຈະເຮັດເໝືອນດັ່ງເຈົ້າກະສັດ ເຊັ່ນການທໍຣະມານບຸກຄົນທີ່ບໍ່ມີໃຈອະພັຍ;ແຕ່ພຣະເຢຊູຊົງສອນວ່າແມ່ນແຕ່ເຈົ້າກະສັດຂອງມະນຸດຍັງປາຖນາໃຫ້ຂ້າໃຊ້ຂອງເພິ່ນສະແດງການໃຫ້ອະພັຍ ຢ່າງນັ້ນແຫລະພຣະມະຫາກະສັດຂອງພວກເຮົາໃນຟ້າສວັນກໍຊົງຕ້ອງການໃຫ້ພວກເຮົາເຮັດໃນທໍານອງນັ້ນເໝືອນກັນ.

## **ນໍາໄປປະຕິບັດ**

ຈຸດສູນກາງໃນຄໍາອຸປມາຂອງພຣະເຢຊູແມ່ນສໍາລັບຄຣິສຕຽນໃນທຸກໆສມັຍ ການພ້ອມທີ່ຈະໃຫ້ອະພັຍເປັນກຸນແຈໄປສູ່ການເກີດຜົນດີໃນວຽກງານການຮັບໃຊ້. ໜ້າເສັຽດາຍບາງຄັ້ງຄວາມເຈັບໃຈ ແລະການຢາກແກ້ແຄ້ນເຮັດໃຫ້ວຽກງານຂອງພຣະເຈົ້າບໍ່ໄດ້ຜົນເທົ່າທີ່ຄວນ. ໃນສັຕວັດທີນຶ່ງ ພວກເຮົາໄດ້ເຫັນບັນຫາໃນຄຣິສຕະຈັກຫລາຍຢ່າງເຊັ່ນການຖົກຖຽງກັນລະຫວ່າງຜູ້ຍິງຊາວກຣີກ ແລະຜູ້ຍິງຊາວຢິວໃນກິຈການ 6:1, ການບໍ່ຍອມກັນລະຫວ່າງໂປໂລແລະບາຣະນາບາໃນກິຈການ 15:39-40. ແນ່ນອນໃນສມັຍນີ້ການບໍ່ເຂົ້າໃຈກັນກໍຍັງມີຢູ່ໃນຄຣິສຕະຈັກຊຶ່ງຜູ້ອ່ານຫລາຍຄົນສາມາດເປັນພຍານໄດ້.

ນອກນັ້ນຍັງມີອີກມຸມມອງນຶ່ງທີ່ພວກເຮົາສາມາດຮຽນຈາກຄໍາອຸປມານີ້; ພວກເຮົາບໍ່ໄດ້ອະພັຍຄົນອື່ນເພື່ອໃຫ້ພຣະເຈົ້າອະພັຍພວກເຮົາ; ແຕ່ພວກເຮົາອະພັຍຄົນອື່ນໆ ເພາະພວກເຮົາເປັນຜູ້ໄດ້ຮັບການໃຫ້ອະພັຍຈາກພຣະເຈົ້າແລ້ວ; ນີ້ແມ່ນນິສັຍຂອງຄົນທັງຫລາຍທີ່ເປັນສະມາຊິກໃນຣາຊອານາຈັກຂອງພຣະເຈົ້າ; ຍ້ອນພວກເຮົາໄດ້ຮັບການໃຫ້ອະພັຍແລ້ວ ພວກເຮົາຈຶ່ງໃຫ້ອະພັຍຄົນອື່ນໆ.

**ຄຳຖາມ**:

1. ແມ່ນຫຍັງຄືບັນຫາໃນຄຳຖາມຂອງເປໂຕທີ່ວ່າ ລາວຄວນຍົກຜິດໃຫ້ພີ່ນ້ອງຈັກເທື່ອ?

2. ແມ່ນຫຍັງເປັນຕົ້ນເຫດໃຫ້ມີການຜິດຖຽງກັນໃນຄຣິສຕະຈັກ?

3. ຖ້າທ່ານມີຄວາມຂັດແຍ່ງກັບບາງຄົນຢູ່ໃນຄຣິສຕະຈັກ, ມີບາດກ້າວໃດແດ່ທີ່ທ່ານສາມາດເຮັດໄດ້ເພື່ອນຳໄປສູ່ການຄືນດີ?

4. ທ່ານເຄີຍມີປະສົບການ ຫລືເຄີຍເຫັນການບໍ່ຍອມໃຫ້ອະພັຍຂອງບາງຄົນເຮັດໃຫ້ເກີດຄວາມບໍ່ສະດວກສຳລັບການຮັບໃຊ້ໃນຄຣິສຕະຈັກບໍ່?

5. ທ່ານເຄີຍເຫັນການໃຫ້ອະພັຍແບບເກີນທັມມະດາໃນຄຣິສຕະຈັກບໍ່?

6. ທ່ານຈະຕ້ອງໃຫ້ອະພັຍຜູ້ໃດແດ່? ເປັນຫຍັງທ່ານຈຶ່ງຕ້ອງລໍຄອຍມາເຖິງມື້ນີ້?

*ສ.ຄ.*

# ບົດຮຽນທີ 10
## <u>ສະມາຊິກໃນຣາຊອານາຈັກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ມັດທາຍ 20: 1-16

**<u>ພູມຫລັງຂອງພຣະຄັມພີ</u>**: ມັດທາຍ 20: 1-16

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ການເປັນສະມາຊິກໃນຣາຊອານາຈັກໄດ້ເປີດອະນຸຍາດຜ່ານພຣະຄຸນແລະເປີດໄວ້ສຳລັບທຸກຄົນ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ພວກເຮົາຕ້ອງການຄວາມທ່ຽງທັມຂອງພຣະເຈົ້າຫລືພຣະຄຸນຂອງພຣະອົງ ເວລາເວົ້າເຖິງການຈະເປັນສະມາຊິກຂອງຣາຊອານາຈັກ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອສແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນທີ່ໄດ້ຮັບຂ້ອຍເຂົ້າຢູ່ໃນຣາຊອານາຈັກ.

**<u>ອ່ານລວບ:</u>** ເວລາພວກເຮົານັບພຣະພອນ ຫລືປຽບທຽບພອນຂອງພວກເຮົາກັບຂອງຜູ້ອື່ນໆ, ພວກເຮົາຈະພາດເຣື່ອງພຣະຄຸນອັນຍິ່ງໃຫຍ່ຂອງພຣະເຈົ້າ.

### <u>ຄຳນຳ</u>

ຄຳອຸປມາຂອງພຣະເຢຊູທີ່ຮູ້ກັນດີ ແມ່ນຄຳອຸປມາເຣື່ອງລູກທີ່ເສັຽ; "ຜູ້ນຶ່ງມີລູກຊາຍສອງຄົນ..." ຜູ້ນ້ອງໜີຈາກບ້ານໄປທ່ຽວເມືອງໄກ ລາວໄດ້ຜານຊັບຂອງຕົນຈົນໝົດ ໃນຂະນະທີ່ຜູ້ເປັນອ້າຍກົກໄດ້ຢູ່ບ້ານຊ່ວຍພໍ່ໃນວຽກງານຢ່າງສັດຊື່ (ລູກາ 15). ແຕ່ວ່າເມື່ອຜູ້ເປັນນ້ອງກັບຄືນບ້ານ, ຜູ້ເປັນພໍ່ໄດ້ຕ້ອນຮັບດ້ວຍງານລ້ຽງຢ່າງຊົມຊື່ນຍິນດີ; ຜູ້ເປັນອ້າຍກົກເມື່ອເຫັນເຊັ່ນນັ້ນກໍຄຽດແລະບໍ່ຍອມເຂົ້າເຮືອນ ເພາະພໍ່ບໍ່ເຄີຍຈັດງານລ້ຽງໃຫ້ລາວຈັກເທື່ອ. ຜູ້ເປັນພໍ່ຈຶ່ງເຕືອນລູກຊາຍກົກວ່າລາວບໍ່ຄວນຄຽດເພາະວ່າ 'ຝ່າຍເຈົ້າໄດ້ຢູ່ນຳພໍ່ຕລອດສິ່ງຂອງທັງໝົດຂອງພໍ່ກໍເປັນຂອງເຈົ້າ' (ລູກາ 15: 31).

ພຣະເຢຊູຊົງມີຄຳຂວັນໃນທຳນອງດຽວກັນໃນຄຳອຸປມາທີ່ຢູ່ໃນ ມັດທາຍ 20: 1-16 ນີ້. ໃນພາກສຸດທ້າຍຂອງຄຳສັ່ງສອນເຣື່ອງເສດຖີໜຸ່ມ, ເປໂຕໄດ້ຖາມພຣະເຢຊູວ່າ ,"ພວກຂ້ານ້ອຍຈະໄດ້ຫຍັງແດ່?" (ມທ 19: 27). ພຣະເຢຊູຊົງຕ້ອງການໃຫ້ຄຳຕອບສຳລັບພວກສາວົກ ເພາະພຣະອົງຊົງຮູ້ຈິດໃຈຂອງຜູ້ຖາມ ໃນຄຳອຸປມາຂອງບົດຮຽນມື້ນີ້, ພຣະເຢຊູຈະຊົງແກ້ໄຂທັງຄຳຖາມແລະຜູ້ຖາມ; ພ້ອມດຽວກັນພຣະອົງຈະຊົງສຳແດງໃຫ້ເຫັນເຣື່ອງພຣະຄຸນຢ່າງເພື່ອແຜ່ຂອງພຣະເຈົ້າ.

## 1. <u>ເຈົ້າຂອງສວນເອີ້ນໃຫ້ໄປທຳງານ:</u> (ມັດທາຍ 20: 1-7)

ໃນຄໍາອຸປມາຂອງພຣະເຢຊູ, ເຈົ້າຂອງສວນໄດ້ອອກໄປຕລາດແຕ່ເຊົ້າເພື່ອຈ້າງຄົນງານ (20: 1). ສັງເກດເບິ່ງວ່າເຈົ້າຂອງສວນໄປຊອກຄົນງານ ແລະບໍ່ແມ່ນຄົນງານມາຫາລາວ. ໃນຣາຊອານາຈັກກໍເປັນເຊັ່ນນັ້ນ. ພຣະເຈົ້າຊົງເປັນຜູ້ເລີ້ມ; ພຣະເຈົ້າຊົງເປັນຜູ້ສ້າງຣາຊອານາຈັກສວັນ, ບໍ່ແມ່ນມະນຸດ ພຣະເຈົ້າຊົງຄອບຄອງແຜ່ນດິນໂລກ ແລະພຣະອົງຊົງເອີ້ນພວກເຮົາໃຫ້ເຂົ້າຮ່ວມງານກັບພຣະອົງ ເພາະພຣະຄຸນ.

ເຈົ້າຂອງສວນໄດ້ເອີ້ນເອົາລູກຈ້າງແຕ່ລະໂມງຕ່າງໆກັນ (20: 3-7). ວັນນຶ່ງຂອງຄົນຢິວແມ່ນເລີ້ມແຕ່ຫົກໂມງເຊົ້າເຖິງຫົກໂມງແລງ, ແຕ່ຕະເວັນຂຶ້ນເຖິງຕາເວັນຕົກ. ເຈົ້າຂອງສວນເລີ້ມຈ້າງຄົນງານແຕ່ຫົກໂມງເຊົ້າ, ເກົ້າໂມງເຊົ້າ, ທ່ຽງວັນ, ສາມໂມງແລງ, ແລະເຖິງພວກສຸດທ້າຍແມ່ນຖືກເອີ້ນເວລາຫ້າໂມງແລງ. ບາງຄົນເຊື່ອວ່າເວລາທີ່ແຕກຕ່າງກັນໃນຄໍາອຸປມານີ້ເວົ້າເຖິງຂອງເວລາໃນຊີວິດຄົນທີ່ໄດ້ມາເປັນຄຣິສຕຽນ; ຫົກໂມງເຊົ້າ- ແມ່ນບອກເຖິງຜູ້ທີ່ມາຫາຮັບພຣະຄຣິດຕອນຍັງນ້ອຍ, ທ່ຽງ- ແມ່ນຜູ້ມາເປັນຄຣິສຕຽນຕອນກາງອາຍຸຄົນ ແລະໄດ້ຜ່ານຊີວິດຫລາຍສົມຄວນ ແລະຫ້າໂມງແລງ- ແມ່ນຜູ້ມາຮັບພຣະຄຣິດໃນບັ້ນປາຍຂອງຊີວິດ. ພວກເຮົາສາມາດຮັບພຣະຄຣິດໄດ້ທຸກເວລາ ແລະບໍ່ມີຄໍາວ່າແກ່ຊະຣາຈົນເກີນໄປ.

ບາງຄົນກໍເຊື່ອວ່າເວລາຖືກຈ້າງໃຫ້ໄປເຮັດງານທີ່ແຕກຕ່າງກັນໃນຄໍາອຸປມານີ້ເວົ້າເຖິງລະຍະຊີວິດຂອງຄຣິສຕຽນທີ່ຖືກເອີ້ນໃຫ້ຮັບໃຊ້ໃນຣາຊອານາຈັກສວັນ. ພວກສາວົກສິບສອງຄົນໄດ້ຮັບໃຊ້ໃນຕອນພຣະເຢຊູເລີ້ມຕົ້ນ; ອີກຫລາຍຄົນໄດ້ຮັບໃຊ້ຮ່ວມກັບພຣະອົງໃນຕອນປາຍ. ສໍາລັບຄຣິສຕະຈັກໃນສມັຍແລກ, ຄໍາອຸປມານີ້ອາດຈະແມ່ນການຮັບຮູ້ເຖິງການພົວພັນໃນລະຍະການພັທນາຂອງຣາຊອານາຈັກ; ຊາວຢິວໃນເຢຣູຊາເລັມໄດ້ຍິນເຣື່ອງຂ່າວປະເສີດກ່ອນຄົນອື່ນ, ຫລັງຈາກນັ້ນແມ່ນຄົນຢິວໃນປາເລສໄຕ, ຕໍ່ໄປຈຶ່ງແມ່ນຄົນຕ່າງຊາດ ແລະຊາວຊະມາເຣັຽ, ແລະຕໍ່ໄປກໍແມ່ນຊາວຢິວທີ່ໄດ້ອົພຍົບໄປຢູ່ຕ່າງປະເທດ. ພຣະເຈົ້າໄດ້ຊົງເອີ້ນແຕ່ລະຄົນໃນເວລາຕ່າງໆກັນ.

## 2. <u>ຄ່າຈ້າງ:</u> (ມັດທາຍ 20: 8-10)

ພຣະເຢຊູໄດ້ຊົງກ້າວມາເຖິງຈຸດສໍາຄັນຂອງຄໍາອຸປມາຊຶ່ງແມ່ນການໃຫ້ຄ່າຈ້າງແກ່ຄົນງານ. ເມື່ອເຖິງເວລາຄໍ່າແລ້ວພໍ່ເຮືອນຜູ້ເປັນເຈົ້າຂອງສວນຈຶ່ງເອີ້ນຄົນງານໃຫ້ມາຮັບຄ່າຈ້າງ ເລີ້ມແຕ່ຜູ້ມາສຸດທ້າຍຈົນເຖິງຜູ້ມາກ່ອນ. ພວກມາຕອນຫ້າໂມງແລງໄດ້ຮັບຄ່າຈ້າງຄົນລະນຶ່ງເດນາຣິອົນຊຶ່ງເປັນຄ່າແຮງສໍາລັບນຶ່ງວັນ (20: 9); ພໍ່ເຮືອນຜູ້ເປັນເຈົ້າຂອງສວນໄດ້ໃຫ້ຄ່າຈ້າງເທົ່າກັນໝົດທຸກໆພວກ ຈົນເຖິງຜູ້ມາທໍາງານຕັ້ງແຕ່ຫົກໂມງເຊົ້າ (20: 10). ການເຮັດສິ່ງນີ້ໄດ້ບອກພວກເຮົາຢ່າງໃດກ່ຽວກັບພຣະເຈົ້າ?

ຈຸດສໍາຄັນໃນທີ່ນີ້ບໍ່ແມ່ນວ່າທຸກຄົນໄດ້ຮັບລາງວັນເທົ່າກັນ ແຕ່ຈຸດສໍາຄັນແມ່ພຣະຄຸນຂອງພຣະເຈົ້າທີ່ຊົງປະທານໃຫ້ທຸກໆຄົນ. ທຸກຄົນທີ່ທໍາງານໄດ້ຮັບຄ່າຈ້າງ; ເຊັ່ນດຽວກັນ ທຸກຄົນທີ່ທໍາງານໃຫ້ພຣະເຈົ້າກໍຈະໄດ້ຮັບລາງວັນທຸກໆຄົນ. ສໍາລັບຄົນງານທີ່ສະແດງຄວາມບໍ່ພໍໃຈ ຈົ່ງຮູ້ເຖິດວ່າເຈົ້າຂອງສວນນີ້ໄດ້ເຮັດຖືກຕ້ອງແລ້ວ

ເພາະເພິ່ນໄດ້ຈ່າຍຄ່າແຮງງານໃຫ້ຄົນທີ່ມາຕອນເຊົ້າຕາມຄ່າຈ້າງທີ່ໄດ້ຕົກລົງກັນ. ເປົ້າໝາຍຂອງຄໍາອຸປມາຂອງພຣະເຢຊູບໍ່ແມ່ນສອນເລື່ອງຍົກຍ້ອງຄົນງານ ແຕ່ສອນເລື່ອງໃຫ້ສັຣເສີນພຣະເຈົ້າຜູ້ຊົງເພື່ອແຜ່.

### 3. <u>**ຄໍາອະທິບາຍ:**</u> (ມັດທາຍ 20: 11-16)

ເນື່ອງຈາກຄວາມເພື່ອແຜ່ຂອງເຈົ້າຂອງສວນ, ຄົນງານບາງຄົນໄດ້ພາກັນຈົ່ມວ່າ (20: 11-12). ຄົນທີ່ເຮັດແຕ່ຕອນເຊົ້າຈົນເຖິງຕອນແລງໄດ້ຮັບຄ່າຈ້າງເທົ່າກັບຜູ້ເຮັດງານຊົ່ວໂມງສຸດທ້າຍ. ເຈົ້າຂອງສວນຕອບວ່າ, "ສະຫາຍເອີຍ, ຂ້ອຍບໍ່ໄດ້ເຮັດຜິດຕໍ່ເຈົ້າດອກ ເຈົ້າໄດ້ຕົກລົງກັນແລ້ວກັບຂ້ອຍວັນລະນຶ່ງເດນາຣິອົນ ບໍ່ແມ່ນຫລື" (20: 13). ຄວາມຈິງແລ້ວຄົນງານພວກນີ້ບໍ່ມີສິດທີ່ຈະຕໍ່ວ່າຄ່າແຮງງານ; ຖ້າເຈົ້າຂອງສວນຕ້ອງການທີ່ຈະຈ່າຍຜູ້ມາກ່ອນແລະຜູ້ມາທີຫລັງເທົ່າໆກັນກໍເປັນສິດທິຂອງລາວ ແລະຜູ້ອື່ນໆບໍ່ສົມຄວນທີ່ຈະຖາມເຖິງຄວາມເພື່ອແຜ່ຂອງເພິ່ນ (20: 13-15).

ພຣະເຢຊູຊົງໃຊ້ຄໍາອຸປມານີ້ສອນບໍ່ໃຫ້ມີການປຽບທຽບ; ຖ້າບາງຄົນໄດ້ຮັບພຣະພອນ ພວກເຮົາກໍບໍ່ຄວນຄິດວ່າຕົນເອງສົມຄວນໄດ້ຮັບຫລາຍກວ່າ ຫລືຕ້ອງຖາມພຣະເຈົ້າວ່າເປັນຫຍັງເຮົາບໍ່ໄດ້ພຣະພອນແນວນັ້ນແນວນີ້. ພຣະເຈົ້າຊົງສາມາດທີ່ຈະໃຫ້ພຣະພອນທຸກຄົນຢ່າງລົ້ນເຫລືອ ຈົນບໍ່ມີທີ່ເກັບໄວ້ (ລູກາ 6: 38). ໃຫ້ພວກເຮົາເຂົ້າຫາພຣະເຈົ້າດ້ວຍຈິດໃຈທີ່ເຕັມລົ້ນດ້ວຍການຂອບພຣະຄຸນ ເພື່ອປະຊາກອນຂອງອານາຈັກສວັນຈະບໍ່ໄດ້ອິດສາກັນເລື່ອງລາງວັນ. ຄົນທີ່ມາກ່ອນກໍໃຫ້ຂອບພຣະຄຸນພຣະເຈົ້າເພາະໄດ້ມີສ່ວນໃນວຽກງານຂອງພຣະອົງເປັນເວລາດົນນານ ແລະພວກທີ່ມາທີຫລັງກໍຈົ່ງຢ່າເສັຽໃຈວ່າຕົນເອງມາຊ້າແລະໄດ້ມີສ່ວນນ້ອຍໃນພຣະຣາຊກິດ. ທຸກຄົນຈົ່ງຂອບພຣະຄຸນເພາະໄດ້ເດີນຄຽງຂ້າງພຣະອົງຜູ້ຊົງເປັນຊີວິດ.

## <u>ນໍາໄປປະຕິບັດ</u>

ໃນຄໍາອຸປມານີ້ ພຣະເຢຊູໄດ້ຊົງເຕືອນຜູ້ຟັງເຖິງຄວາມຈິງສອງຢ່າງກ່ຽວກັບພຣະເຈົ້າ. ນຶ່ງ, ພຣະເຢຊູຊົງເວົ້າເຖິງຄວາມເພື່ອແຜ່ຂອງພຣະເຈົ້າ. ບໍ່ວ່າຈະເປັນສິ່ງໃດທີ່ພວກເຮົາໄດ້ຮັບຈາກພຣະອົງ ພວກເຮົາໄດ້ຮັບເກີນກວ່າສົມຄວນໄດ້ຮັບ; ຄວາມທ່ຽງທັມຄືສິ່ງທີ່ພວກເຮົາສົມຄວນໄດ້ຮັບ, ແຕ່ພວກເຮົາໄດ້ປະສົບການກັບຄວາມເພື່ອແຜ່ຢ່າງເກີນຄາດໝາຍ. ສອງ, ພຣະເຢຊູຊົງສອນວ່າພຣະເຈົ້າຊົງຄອບຄອງທຸກຢ່າງ. ເໝືອນເຈົ້າຂອງສວນໃນຄໍາອຸປມານີ້, ພຣະເຈົ້າຊົງສາມາດສະແດງຄວາມເພື່ອແຜ່ຕາມທີ່ພຣະອົງຊົງຊອບພຣະທັຍ. ເຖິງເຈົ້າຂອງສວນຈະຈ່າຍຄ່າແຮງງານຕາມທີ່ໄດ້ສັນຍາ, ຄວາມຮູ້ສຶກວ່າບໍ່ຍຸດຕິທັມບໍ່ມີສ່ວນຫຍັງໃນການກະທໍາຂອງເຈົ້າຂອງສວນກັບຄົນອື່ນໆ. ເຈົ້າຂອງສວນມີສິດທີ່ຈະເຮັດຕາມທີ່ໃຈລາວປາຖນາ. ໃນທໍານອງດຽວກັນ, ພຣະເຈົ້າຊົງສາມາດເຮັດໄດ້ກັບທຸກຄົນ ຕາມທີ່ພຣະອົງໄດ້ຊົງຕັ້ງພຣະທັຍໄວ້, ບໍ່ແມ່ນຕາມທີ່ພວກເຮົາໄດ້ມີຄວາມຮູ້ສຶກວ່າສິ່ງນັ້ນໆທ່ຽງທັມ ຫລືສົມຄວນ.

**<u>ຄຳຖາມ:</u>**

1. ພວກຄົນງານທີ່ເຮັດການໝົດມື້ແຕ່ໄດ້ຄ່າຈ້າງເທົ່າກັນກັບພວກຄົນງານທີ່ເຮັດການຊົ່ວໂມງດຽວ ມີເຫດຜົນພຽງພໍໃນການຕໍ່ວ່າເຈົ້າຂອງສວນຂອງພວກເຂົາຫລືບໍ່?

2. ການພົວພັນຂອງທ່ານໃນພັນກິດຂອງຣາຊອານາຈັກສວັນ ມີສ່ວນຄ້າຍຄືກັນກັບພວກຄົນງານທີ່ໄດ້ມາເຮັດການໃນສວນເປັນເວລາຕ່າງໆກັນວິທີໃດ?

3. ຖ້າທ່ານໄດ້ເຂົ້າຮ່ວມໃນພັນທະກິດຂອງພຣະເຈົ້າແຕ່ຍັງໜຸ່ມ ມີພຣະພອນແນວໃດແດ່ທີ່ໄດ້ຮັບເປັນພິເສດໃນການຮັບໃຊ້ອົງພຣະຜູ້ເປັນເຈົ້າ?

4. ຖ້າທ່ານໄດ້ເຂົ້າຮ່ວມຮັບໃຊ້ໃນພັນທະກິດຂອງພຣະເຈົ້າຕອນອາຍຸແກ່ແລ້ວ, ມີພຣະພອນແນວໃດແດ່ທີ່ທ່ານໄດ້ປະສົບການ?

5. ທ່ານໄດ້ພົບຄວາມເພື່ອແຜ່ອັນມະຫາສານຂອງພຣະເຈົ້າໃນຕອນໃດ ແລະດ້ວຍວິທີໃດ?

6. ແມ່ນຫຍັງຄືຢາແກ້ສຳລັບຄວາມອິດສາທີ່ອາດຈະເກີດຂຶ້ນເວລາທ່ານໄດ້ເຫັນພຣະເຈົ້າຊົງໃຫ້ພຣະພອນກັບຄົນອື່ນໆ ຊຶ່ງແຕກຕ່າງກັບພຣະພອນທີ່ທ່ານໄດ້ຮັບ?

*ສ.ຄ.*

# ບົດຮຽນທີ 11
## <u>ເຂົາຈັບພຣະອົງຂຶ້ນສານ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ມັດທາຍ 26:47-50, 57-66; 27:11-26

**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 26:47-27:31

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ພຣະເຢຊູບໍ່ໄດ້ປະຕິເສດເຂົາກ່າວຫາໃດໆ ແລະຍອມຍັງເຊື່ອຟັງພຣະບິດາສເມີ.

**<u>ຄໍາຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະຮຽນເອົາແບບຢ່າງພຣະອົງຊົງຟັງພຣະບິດາຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອສອນເຮົາໃຫ້ເຊື່ອຟັງພຣະບິດາເມື່ອມີເຫດການອັດຕະຄັດ.

## <u>ບົດນໍາ</u>

ພຣະທັມມັດທາຍບອກຢ່າງແຈ້ງວ່າ ພຣະເຢຊູຊົງເປັນກະສັດທີ່ຖືກເຂົາຈັບໄປຍັງສານຢິວ ແລະສານໂຣມັນເພື່ອກ່າວໂທດປະຫານພຣະອົງແທນຄົນບາບທັງປວງທີ່ເຊື່ອໄວ້ວາງໃຈໃນພຣະອົງ.

### 1. <u>ເຂົາຈັບພຣະອົງ:</u> (ມັດທາຍ 26:47-56).

ເຂົາໄປຈັບພຣະເຢຊູທີ່ສວນແຫ່ງນຶ່ງທີ່ມີຊື່ວ່າ ເຄັດເຊມາເນ ໃນພາສາກຣີກແມ່ນສວນໝາກກອກເທດ ໃນຂະນະທີ່ພຣະອົງກໍາລັງໄຫວ້ວອນຢູ່. ສ່ວນພຣະທັມໂຢຮັນບອກອີກວ່າເຂົາຈັບພຣະອົງຫລັງຈາກກິນສິນມະຫາສນິດ. ສວນນັ້ນບໍ່ໄກຈາກບ່ອນທີ່ກິນສິນມະຫາສນິດຈົນພໍທີ່ຈະຫລຽວເຫັນກັນໄດ້ (ໂຢຮັນ 18:1, 26). ພວກເຈົ້າໜ້າທີ່ປະຈໍາພຣະວິຫານໄດ້ພາພວກທະຫານໄປຈັບພຣະອົງ ແລ້ວພາໄປຍັງສານຊາດຢິວ, ແລະສານແຊນຮີດຣິນໃນເຊົ້າຕໍ່ມາ. ເວລານັ້ນເປັນເວລາທີ່ເຢຣູຊາເລັມຫວຸ້ນວາຍຫລາຍເຣື່ອງ ເພາະມີຜູ້ຄົນເດີນທາງເຂົ້າອອກຢ່າງຫລວງຫລາຍ ດ້ວຍເຫດນີ້ຣັຖບານໂຣມຈຶ່ງເຄັ່ງຄັດໃນການກວດກາເພື່ອບໍ່ໃຫ້ມີເຫດການຮ້າຍແຮງເກີດຂຶ້ນ.

ກ່ອນອື່ນເຮົາຈະຕ້ອງເຂົ້າໃຈວັດທະນະທັມໃນສັຕະວັດທີນຶ່ງຂອງຊາວເມດີເທີແຣນຽນ (ຊາວຕາເວັນອອກກາງ) ແມ່ນພວກຜູ້ຊາຍຖາມຂ່າວຄວາມສະບາຍດີໂດຍການຈູບແກ້ມ ຊຶ່ງເປັນການບົ່ງບອກວ່າຮັກແລະນັບຖື. ດັ່ງທີ່ເຮົາຈະໄດ້ເຫັນຢູດາຜູ້ເປັນສິດຖາມຂ່າວພຣະອາຈານໂດຍການຈູບແກ້ມໃນຂະນະທີ່ລາວນໍາພາພວກທະຫານມາຈັບພຣະເຢຊູ, "*ຢູດາເຂົ້າມາຫາພຣະເຢຊູທັນທີທູນວ່າ, "ສະບາຍດີ, ພຣະອາຈານ" ແລ້ວຈູບ ພຣະອົງຢ່າງຮັກແພງ ຝ່າຍພຣະເຢຊູຊົງກ່າວແກ່ຢູດາວ່າ, "ສະຫາຍເອີຍ, ມາທີ່ນີ້ເຮັດຫຍັງ?* (ມັດທາຍ 26:49-50).

ມັດທາຍບອກວ່າການກະທໍາຂອງຢູດາແມ່ນການກະທໍາແບບຄົນໜ້າຊື່ໃຈຄົດ, ລາວໄດ້ຈູບພຣະເຢຊູເໝືອນ

ເປັນຄົນຮັກແພງກັນແຕ່ໃນໃຈຂອງລາວໄດ້ຂາຍຄວາມຮັກແພງດ້ວຍເງິນ 30 ຫລຽນແລ້ວ. ມັດທາຍ26:15). <u>ເຮື່ອງສັງຄົມ</u>ໃນສມັຍນັ້ນຄຳວ່າ (ສະຫາຍ) ມີຄວາມໝາຍບໍ່ຄືວັນນີ້, ພຣະເຢຊູຮ້ອງຢູດາວ່າ "ສະຫາຍ" ຈະມີຄວາມຫໝາຍຢ່າງໃດນັ້ນໃຫ້ເຮົາເບິ່ງພຣະຄັມພີສາມຕອນດັ່ງຕໍ່ໄປນີ້;

1.) *"ທ່ານຈຶ່ງຕອບຜູ້ນຶ່ງໃນໝູ່ນັ້ນວ່າ, "ສະຫາຍເອີຍ, ຂ້ອຍບໍ່ໄດ້ເຮັດຜິດຕໍ່ເຈົ້າດອກ ເຈົ້າໄດ້ຕົກລົງກັບແລ້ວກັບຂ້ອຍວັນລະນຶ່ງເດນາຣິອົນ ບໍ່ແມ່ນຫລື"* (ມັດທາຍ 20:13).

2.) *"ພຣະອົງຊົງຖາມຜູ້ນັ້ນວ່າ, "ສະຫາຍເອີຍ, ເຫດໃດທ່ານຈຶ່ງອາດເຂົ້າມາທີ່ນີ້ໂດຍບໍ່ນຸ່ງເຄື່ອງສຳລັບງານສົມຣົດ" ສ່ວນຄົນນັ້ນກໍມິດຢູ່ປາກບໍ່ອອກ ກະສັດຈຶ່ງຊົງສັ່ງແກ່ພວກຂ້າໃຊ້ວ່າ "ຈົ່ງມັດຕີນມັດມືຄົນນີ້ເອົາໄປຖິ້ມເສັຽບ່ອນມືດພາຍນອກ ທີ່ນັ້ນມີການຮ້ອງໄຫ້ແລະຂົບແຂ້ວຢູ່ "* (ມັດທາຍ 22:12-13).

3.) *ພຣະເຢຊູກ່າວກັບຢູດາໃນຂະນະທີ່ລາວພາເຂົາມາຈັບພຣະອົງວ່າ "ສະຫາຍເອີຍ, ມາທີ່ນີ້ເຮັດຫຍັງ?* (ມັດທາຍ 26:50). ເມື່ອສັງເຫດເບິ່ງທັງສາມຕົວຢ່າງທີ່ພຣະຄັມພີກ່າວວ່າ (ສະຫາຍ) ນັ້ນແມ່ນການກ່າວຂອງຜູ້ມີສິດອຳນາດ, ສ່ວນໃນສມັຍນີ້ອາດຈະມີຄວາມໝາຍວ່າ ເພື່ອນຮ່ວມງານ, ເພື່ອນທີ່ເຂົ້າໃຈກັນ ຫລືເປັນໝູ່ຮັກແພງກັນດັ່ງນັ້ນເປັນຕົ້ນ.

## 2. <u>ສານແຣກ ບໍ່ສາມາດຕັດສິນ:</u> (ມັດທາຍ 26:57-67).

ສານຂອງຊາດຢິວເປັນເໝືອນການຈັດຕຽມຂໍ້ກ່າວຫາເທົ່ານັ້ນ ເພາະສານຂອງຊາດຢິວບໍ່ມີສິດອຳນາດເຣື່ອງຄຳຂາດບາດຕາຍແຕ່ຢ່າງໃດ ແຕ່ແມ່ນສານຂອງໂຣມັນເທົ່ານັ້ນທີ່ມີສິດໃນເຣື່ອງໃຫຍ່ໆເຊັ່ນນີ້. ພວກຜູ້ນຳສາສນາຢິວໄດ້ເປີດຄຳຖາມທີ່ເດີ່ນບ້ານຂອງມະຫາປະໂຣຫິດ ເພື່ອຢາກຮູ້ວ່າເຣື່ອງຣາວເປັນແນວໃດກັນແທ້ດ້ວຍວ່າພວກປະໂຣຫິດຕົນໃຫຍ່ກັບພວກສະມາຊິກຂອງສານຢິວມີໃຈຢາກຂ້າພຣະເຢຊູເສັຽ ຈົນມີສອງຄົນກ່າວຂຶ້ນດ້ວຍສຽງດັງວ່າ "*ຜູ້ນີ້ແຫລະໄດ້ກ່າວວ່າ ເຮົາສາມາດຈະມ້າງພຣະວິຫານຂອງພຣະເຈົ້າ ແລະສ້າງຂຶ້ນໃໝ່ພາຍໃນສາມວັນ*" (ຂໍ້ 61). ຂໍ້ກ່າວຫານີ້ເປັນຂໍ້ກ່າວຫາວ່າເປັນການໝິ່ນປມາດພຣະເຈົ້າ ເພາະວ່າເຂົາຖືວ່າພຣະວິຫານເປັນຂອງພຣະເຈົ້າ, ສ່ວນພຣະເຢຊູກໍບໍ່ໄດ້ຖົກຖຽງເຂົາແຕ່ຢ່າງໃດເລີຍ. ແລ້ວປະໂຣຫິດຈຶ່ງຖາມພຣະເຢຊູວ່າ "*ເຈົ້າບໍ່ຕອບຫຍັງຫລື ຄຳພຍານທີ່ຄົນເຫລົ່ານີ້ກ່າວຕໍ່ສູ້ເຈົ້າເປັນແນວໃດ"ແຕ່ພຣະເຢຊູຊົງມິດຢູ່* "(ຂໍ້ 62). ແຕ່ປະໂຣຫິດກ່າວຫາວ່າພຣະເຢຊູໝິ່ນປມາດພຣະເຈົ້າ (ຂໍ້ 65). ດັ່ງນັ້ນເມື່ອຮຸ່ງເຊົ້າມາເຂົາຈຶ່ງພາພຣະເຢຊູໄປຍັງສານສູງສຸດຂອງໂຣມັນທີ່ມີຊື່ວ່າ ສານແຊນຮີດຣິນ ຊຶ່ງໂປໂລເຄີຍເປັນສະມາຊິກຂອງສານແຫ່ງນີ້. ສານແຊນຮີດຣິນ ເປັນສານສູງສຸດທີ່ປົກຄອງຊາດຢິວໄດ້ ປະຕິເສດແລະບໍ່ໄດ້ຕັດສິນຂໍ້ກ່າວຫາເພາະວ່າສານນີ້ບໍ່ເຫັນຄວາມຜິດພໍທີ່ຈະປະຫານຈຶ່ງໃຫ້ເຂົາພາພຣະເຢຊູໄປຫາປີລາດ (ມັດທາຍ 27:2).

ມັດທາຍບອກວ່າພວກເຂົາໄດ້ກ່າວຫາພຣະເຢຊູວ່າ ພຣະອົງຊົງໝິ່ນປມາດພຣະເຈົ້ານັ້ນເປັນຫົນທາງດຽວທີ່ເຂົາຈະປະຫານພຣະອົງໄດ້ ເພາະໃນພຣະທັມຣະບຽບຂອງພວກເລວີໄດ້ກ່າວວ່າ "*ຜູ້ໃດທີ່ຫມິ່ນປມາດພຣະນາມຂອງພຣະເຈົ້າຈະຕ້ອງຖືກໂທດເຖິງຕາຍ*" (ລະບຽບຂອງພວກເລວີ 24:16). ແຕ່ພຣະເຢຊູບໍ່ໄດ້ກ່າວປະນາມອອກພຣະນາມພຣະເຈົ້າແຕ່ຢ່າງໃດ ພໍພຽງແຕ່ພຣະອົງເວົ້າເຖິງການມ້າງແລະສ້າງພຣະວິຫານພາຍໃນສາມວັນອັນໝາຍເຖິງຕົວພຣະອົງເອງ ທີ່ຈະຕ້ອງຕາຍແລະຈະຟື້ນຄືນມາໃນວັນຖ້ວຍສາມ, ແຕ່ເຂົາບໍ່ເຂົ້າໃຈ. ພວກປະໂຣຫິດຈຶ່ງຖາມພຣະເຢຊູວ່າ *"ເຈົ້າບໍ່ຕອບຫຍັງຫລື ຄຳພຍານທີ່ຄົນເຫລົ່ານີ້ກ່າວຕໍ່ສູ້ເຈົ້າເປັນແນວໃດ" ແຕ່*

*ພຣະເຢຊູຊົງນິດຢູ່ ແລ້ວມະຫາປະໂຣຫິດຈຶ່ງກ່າວວ່າ, "ເຮົາໃຫ້ເຈົ້າສາບານໂດຍອ້າງພຣະເຈົ້າຜູ້ຊົງພຣະຊົນຢູ່ ໃຫ້ເຈົ້າບອກເຮົາວ່າເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຫລືບໍ່ "ພຣະເຢຊູຊົງຕອບວ່າ, "ທ່ານເວົ້ານັ້ນແລ້ວ ແລະຫລາຍກວ່ານັ້ນອີກ, ເຮົາບອກພວກທ່ານວ່າ ໃນເວລາຕໍ່ໄປພວກທ່ານຈະເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງຣິດທານຸພາບ ແລະກຳລັງສະເດັດມາເທິງເມກໃນທ້ອງຟ້າ" ເມື່ອນັ້ນມະຫາປະໂຣຫິດໄດ້ຈີກເສື້ອຜ້າຂອງຕົນແລ້ວກ່າວວ່າ, "ມັນໄດ້ເວົ້າໝິ່ນປມາດພຣະເຈົ້າແລ້ວ ພວກເຮົາຍັງຈະຕ້ອງການພຍານອັນໃດອີກ ນີ້ແຫລະ, ທ່ານໄດ້ຍິນຄຳປມາດນັ້ນແລ້ວພວກທ່ານຄຶດເຫັນຢ່າງໃດ" ເຂົາຕອບວ່າ, "ຄວນຖືກໂທດປະຫານຊີວິດ"* (ມັດທາຍ 26:62-66). ຕອນນີ້ພຣະອົງຊົງຕອບເຂົາດ້ວຍພຣະທັມດານີເອນ ທີ່ໄດ້ທຳນວາຍໄວ້ແລ້ວວ່າ "*ຂ້າພະເຈົ້າໄດ້ເຫັນຜູ້ນຶ່ງມີຮູບຮ່າງເຫມືອນມະນຸດ ທ່ານໄດ້ເຂົ້າມາໃກ້ໆອ້ອມຮອບດ້ວຍເມກ ແລະໄດ້ເຂົ້າເຝົ້າພຣະຜູ້ຊົງພຣະຊົນຢູ່ເປັນນິດຢູ່ທີ່ນັ້ນ ທ່ານໄດ້ຮັບອຳນາດກຽດຕິຍົດແລະເດຊານຸພາບເພື່ອປະຊາຊົນທຸກປະເທດ ທຸກເຊື້ອຊາດ ແລະພາສາຈະຮັບໃຊ້ທ່ານ ເດຊານຸພາບຂອງທ່ານຈະ ມີຢູ່ຕລອດໄປ ແລະຣາຊອານາຈັກກໍຈະບໍ່ມີເວລາສິ້ນສຸດລົງ*" (ດານີເອນ 7:13-14). ແຕ່ເຂົາບໍ່ເຂົ້າໃຈໃນເຣື່ອງທີ່ພຣະອົງຊົງກ່າວໃນພຣະທັມດານີເອນນັ້ນແມ່ນກ່າວເຖິງພຣະອົງເອງ ດ້ວຍເຫດນີ້ເຂົາຈຶ່ງພາກັນຮ້ອງ ວ່າ "*ຄວນຖືກໂທດປະຫານຊີວິດ*" ເພາະເຂົາຖືວ່າເພິ່ນໝິ່ນປມາດພຣະເຈົ້າ. ແລ້ວເຂົາຈຶ່ງນຳຕົວພຣະອົງໄປຫາປີລາດເພື່ອຕັດສິນປະຫານ ແຕ່ພຣະອົງກໍບໍ່ໄດ້ຕອບໂຕ້ເຂົາແຕ່ຢ່າງໃດ ດ້ວຍມີຄຳທຳນວາຍໄວ້ໃນພຣະທັມເອຊາຢາວ່າ "*ທ່ານຖືກຫມິ່ນປມາດຢ່າງເຈັບແສບ ແຕ່ກໍມີຄວາມສຸພາບອ່ອນຫວານ ທ່ານບໍ່ເວົ້າຈາຫຍັງເລີຍເຫມືອນລູກແກະທີ່ຖືກນຳໄປຂ້າ ແລະເຫມືອນແກະທີ່ຖືກເຂົາຕັດຂົນ ທ່ານບໍ່ເວົ້າຈາຫຍັງເລີຍ*" (ເອຊາຢາ 53:7).

## 3. <u>ເຂົາກ່າວຫາຕໍ່ໜ້າສານໂຣມັນ:</u> (ມັດທາຍ 27:11-26).

ແຂວງຢູດາຍແມ່ນເຂດການປົກຄອງຂອງໂຣມັນທີ່ມີສິດເຕັມສ່ວນໃນການຕັດສິນຄວາມຕ່າງໆ ຕລອດເຖິງການສັ່ງປະຫານຊີວິດ ເພາະວ່າທີ່ນີ້ເປັນສານສູງສຸດ, ສ່ວນສານຂອງພວກຢິວນັ້ນມີຂອບເຂດຈຳກັດໃນການລົງໂທດ ດັ່ງນັ້ນເຂົາຈຶ່ງພາພຣະເຢຊູມາຂຶ້ນສານແຫ່ງນີ້ທີ່ມີທ່ານປີລາດເປັນຜູ້ຕັດສິນຄວາມຜູ້ສູງສຸດຜູ້ທີ່ຫົກໃນສມັຍການປົກຄອງຂອງຈັກກະພັກໂຣມັນທີ່ແຂວງຢູດາຍ. "*ເມື່ອພຣະເຢຊູຊົງຢືນຢູ່ຕໍ່ໜ້າຜູ້ປົກຄອງ ຜູ້ປົກຄອງຈຶ່ງຖາມພຣະອົງວ່າ, "ເຈົ້າເປັນກະສັດຂອງຊາດຢິວຫລື". ພຣະເຢຊູຊົງຕອບວ່າ, "ທ່ານເວົ້ານັ້ນແລ້ວ" ເມື່ອພວກປະໂຣຫິດຕົນໃຫຍ່ແລະພວກເຖົ້າແກ່ໄດ້ກ່າວໂທດໃສ່ພຣະອົງ ພຣະອົງກໍບໍ່ໄດ້ຊົງຕອບປະການ ໃດ ປີລາດຈຶ່ງກ່າວແກ່ພຣະອົງວ່າ, "ເຈົ້າບໍ່ໄດ້ຍິນຫລື ເຂົາເບີກພຍານຕໍ່ສູ້ເຈົ້າຫລາຍປະການເທົ່າໃດ" ແຕ່ພຣະເຢຊູບໍ່ໄດ້ຊົງຕອບຈັກຄຳ ຈົນຜູ້ປົກຄອງປລາດໃຈຫລາຍ*" (ຂໍ້ 11-14). ນອກຈາກເຂົາປລາດໃຈທີ່ບໍ່ເຫັນພຣະເຢຊູໂຕ້ຕອບແລ້ວ ພວກເຂົາຍັງບໍ່ເຫັນວ່າພຣະອົງມີຄວາມຜິດອັນໃດພໍທີ່ຈະຕັດສິນລົງໂທດປະຫານຊີວິດ, ເມື່ອເປັນດັ່ງນັ້ນເພື່ອເປັນການເອົາໃຈພວກຢິວທາງພວກຜູ້ປົກຄອງຈຶ່ງຊອກຫາຊ່ອງທາງປ່ອຍ ພຣະເຢຊູຜູ້ບໍ່ມີຄວາມຜິດໃຫ້ພົ້ນຈາກການກ່າວຫາທັງໝົດ.

ພວກຜູ້ປົກຄອງຈຶ່ງກ່າວກັບພວກຢິວວ່າ ເນື່ອງໃນເທສການປັສຄາກິນເຂົ້າຈີ່ບໍ່ມີເຊື້ອແປ້ງນັ້ນໄດ້ມີຣະບຽບໃຫ້ປ່ອຍນັກໂທດໃຫ້ເປັນອິສຣະເພື່ອເປັນການສເລີມສລອງງານປັສຄາອັນສຳຄັນນີ້ປີລະເທື່ອ. ດັ່ງນັ້ນ ປີລາດຈຶ່ງເບີກຕົວນັກໂທດທີ່ເປັນຜູ້ຮ້າຍຂ້າຄົນຜູ້ນຶ່ງ (ມາຣະໂກ 15:7) ແລະເອົາພຣະເຢຊູມາ ມາຢືນຮຽງກັນແລ່ວຖາມເຂົາວ່າຈະໃຫ້ປ່ອຍຜູ້ໃດ? ປີລາດຫວັງໃຈວ່າເຂົາຄົງຈະຂໍໃຫ້ປ່ອຍພຣະເຢຊູຜູ້ບໍ່ມີຄວາມຜິດ. "

*ຄາວນັ້ນມີນັກໂທດຄົນນຶ່ງຜູ້ທີ່ເຂົາຮູ້ຈັກທົ່ວໄປ ຊື່ເຢຊູບາຣາບາເມື່ອປະຊາຊົນມາປະຊຸມກັນແລ້ວປີລາດໄດ້ຖາມເຂົາວ່າ, "ພວກເຈົ້າຢາກໃຫ້ເຮົາປ່ອຍຜູ້ໃດ ປ່ອຍເຢຊູບາຣາບາ ຫລືເຢຊູທີ່ເອີ້ນວ່າພຣະຄຣິດ*" (ຂໍ້ 17). ດ້ວຍຄວາມກຽດແຄ້ນຂອງພວກປະໂຣຫິດ ເຂົາຈຶ່ງພາກັນຍົວະຍົງໃຫ້ພວກຢິວຂໍໃຫ້ປີລາດປ່ອຍຜູ້ຮ້າຍຂ້າຄົນ ແລະຂໍໃຫ້ສັ່ງປະຫານພຣະເຢຊູຜູ້ບໍ່ມີຄວາມຜິດເສັຽ " *ຝ່າຍປະໂຣຫິດຕົນໃຫຍ່ກັບພວກເຖົ້າແກ່ໄດ້ຍົວະຍົງປະຊາຊົນ ໃຫ້ຂໍປ່ອຍບາຣາບາ ແລະໃຫ້ຂ້າພຣະເຢຊູເສັຽ*" (ຂໍ້ 20). ດ້ວຍຄວາມຄຽດແຄ້ນຂອງພວກປະໂຣຫິດນັ້ນໄດ້ປິດບັງຄວາມຈິງເຂົາຈຶ່ງເຫັນຜິດເປັນຖືກ "*ຜູ້ປົກຄອງຈຶ່ງຖາມເຂົາອີກວ່າ, "ໃນສອງຄົນນີ້ພວກເຈົ້າຢາກໃຫ້ເຮົາປ່ອຍຜູ້ໃດ" ເຂົາຕອບວ່າ, "ບາຣາບາ"* (ຂໍ້ 21) ເມື່ອເປັນເຊັ່ນນັ້ນປີລາດຈຶ່ງຖາມເຂົາເປັນຄັ້ງທີສອງ*ວ່າ "ຖ້າຢ່າງນັ້ນ, ເຮົາຈະເຮັດຢ່າງໃດແກ່ເຢຊູຜູ້ເອີ້ນວ່າພຣະຄຣິດ" ເຂົາພາກັນຕອບວ່າ, "ໃຫ້ຄຶງເສັຽ ທີ່ໄມ້ກາງແຂນ"* (ຂໍ້ 22). ປີລາດຈຶ່ງຖາມເຂົາຄັ້ງທີສາມວ່າ *"ຄືງເຮັດຫຍັງ ຄົນນີ້ໄດ້ເຮັດຜິດອັນໃດ" ເຂົາແຮ່ງພາກັນຮ້ອງຂຶ້ນວ່າ, "ໃຫ້ຄຶງເສັຽທີ່ໄມ້ກາງແຂນ"* (ຂໍ້ 23). ປີລາດພະຍາຍາມທີ່ຈະຊ່ອຍພຣະເຢຊູຕັ້ງສາມຄັ້ງແຕ່ບໍ່ໄດ້ຜົນ ເນື່ອງຈາກວ່າຄວາມຄຽດຄ້າຍ, ຄວາມກຽດຊັງຂອງພວກປະໂຣຫິດແລະພວກຢິວທີ່ມີຕໍ່ພຣະເຢຊູນັ້ນຮ້າຍແຮງຈົນເຖິງຂັ້ນສຸດຂີດຈົນເຂົາເຮັດໃຫ້ທຸກສິ່ງຫວຸ້ນວາຍໄປໝົດ. ສ່ວນປີລາດເອງບໍ່ຢາກມີສ່ວນຮ່ວມໃນການຕັດສິນຄັ້ງນີ້ທ່ານຈຶ່ງລ້າງມືເພື່ອເປັນສັນຍາລັກວ່າບໍ່ມີສ່ວນຮ່ວມ " *ມີແຕ່ການຫວຸ້ນວາຍກຳລັງເກີດຂຶ້ນ ຈຶ່ງໄດ້ເອົານໍ້າມາລ້າງມືຕໍ່ໜ້າປະຊາຊົນ ໂດຍກ່າວວ່າ, "ເຮົາບໍ່ມີຜິດດ້ວຍເຣື່ອງຄວາມຕາຍຂອງຜູ້ ນີ້ ໃຫ້ເປັນທຸຣະຂອງພວກເຈົ້າເອງ*" (ຂໍ້ 24). ເຖິງປານນັ້ນພວກເຂົາກະຍັງບໍ່ຍອມຜ່ອນຜັນແລະຍອມຮັບເອົາໂທດກັມທັງໝົດໂດຍກ່າວວ່າ "*ໃຫ້ໂທດເຣື່ອງຄວາມຕາຍຂອງມັນຕົກໃສ່ພວກເຮົາກັບທັງລູກຫລານຂອງເຮົາ"* (ຂໍ້ 25), ແລ້ວເຂົາກໍນຳພຣະເຢຊູໄປຄຶງທີ່ໄມ້ກາງແຂນ.

**<u>ຄຳຖາມ:</u>**

1. ທ່ານຄຶດວ່າແມ່ນຫຍັງເຮັດໃຫ້ຢູດາທັກຫລັງພຣະເຢຊູ?

2. ເປັນຫຍັງພຣະເຢຊູຈຶ່ງຍອມໃຫ້ເຂົາຈັບ?

3. ສົມມຸດວ່າເຈົ້າໜ້າທີ່ມາຈັບທ່ານໃນເວລານີ້ ທ່ານຈະເຮັດແນວໃດ ເມື່ອທ່ານບໍ່ໄດ້ເຮັດຫຍັງຜິດ?

4. ເປັນຫຍັງປີລາດຈຶ່ງຢາກຊ່ອຍພຣະເຢຊູ?

5. ແມ່ນຫຍັງເຮັດໃຫ້ພວກປະໂຣຫິດຄຽດແຄ້ນພຣະເຢຊູ?

6. ທ່ານຄຶດວ່າປີລາດພົ້ນຈາກຄວາມຜິດບາບບໍ່?

*ທ.ວ.*

# ບົດຮຽນທີ 12
## <u>ຖືກຄຶງທີ່ໄມ້ກາງແຂນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມັດທາຍ 27:32-54

**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 27:32-54

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະອົງຊົງໄຖ່ບາບຂອງເຮົາໂດຍຖືກຄຶງທີ່ໄມ້ກາງແຂນ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ການຕາຍຂອງພຣະອົງໄດ້ບອກເຖິງການເປັນພຣະເຈົ້າແນວໃດ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອສຶກສາຄົ້ນຄວ້າເບິ່ງການເປັນພຣະເຈົ້າຂອງພຣະອົງ

## <u>ບົດນຳ</u>

ອັຄສາວົກມັດທາຍຂຽນບອກວ່າ ພຣະເຢຊູຊົງເປັນຈອມກະສັດທີ່ດື່ມຈອກແຫ່ງຄວາມທຸກຣະທົມ ເພື່ອສະແດງເຖິງຄວາມເປັນກະສັດທີ່ຍອມທົນທຸກເຊັ່ນນີ້ເພື່ອໄພ່ພົນຂອງພຣະອົງຈະໄດ້ພົ້ນ, ພຣະອົງໄດ້ຊົງຍອມຕາຍທີ່ໄມ້ກາງແຂນ ເພື່ອຄົນບາບທັງຫລາຍທີ່ຍອມຮັບເອົາພຣະອົງຈະພົ້ນຄວາມທຸກທໍຣະມານທີ່ບຶງໄຟນະຣົກເປັນແນ່.

### 1. <u>ຈອມກະສັດທີ່ໂຄລະໂຄທາ:</u> (ມັດທາຍ 27:32-37)

ພຣະເຢຊູຖືກຄຶງໂນນແຫ່ງນຶ່ງໃກ້ກັບກຸງເຢຣູຊາເລັມບ່ອນທີ່ມີຊື່ວ່າ ໂຄລະໂຄທາ (Golgotha) ເຊິ່ງເປັນພາສາ ອາຣາມິກ ແລະແປວ່າບ່ອນກອງຫົວກະໂຫລກຄົນຕາຍ. ເຂົາໄດ້ບັງຄັບໃຫ້ພຣະອົງແບກໄມ້ກາງແຂນອັນໜັກຂອງພຣະອົງຈາກກຸງເຢຣູຊາເລັມໄປຍັງໂຄລະໂຄທາ, ໃນຂະນະທີ່ແບກກາງແຂນອັນໜັກໜ່ວງນັ້ນພວກທະຫານໄດ້ຂ້ຽນຕີພຣະອົງ, ສ່ວນປະຊາຊົນກໍພາກັນດ່າວ່າພຣະອົງຕ່າງໆນາໆເພື່ອໃຫ້ພຣະອົງໄດ້ຮັບຄວາມອັບອາຍ. ຊາວຢິວຖືວ່າກຸງເຢຣູຊາເລັມແມ່ນເມືອງສັກສິດ ເພາະທີ່ນັ້ນມີພຣະວິຫານອັນສັກສິດ ເມື່ອຖືວ່າເປັນບ່ອນສັກສິດແລ້ວຈຶ່ງບໍ່ມີການຂ້າສັດຕັດຊີວິດໃນທີ່ນັ້ນ, ໃນເວລາທີ່ເຂົາຂ້າສັດຖວາຍບູຊາພື່ອໄຖ່ໂທດຂອງຜິດບາບນັ້ນ ແມ່ນໄດ້ປະຕິບັດດ້ານນອກແລະນຳການຖວາຍເຂົ້າມາດ້ານໃນຂອງເຢຣູຊາເລັມ. ເມື່ອເບິ່ງຮູບພາບແລ້ວ ພຣະເຢຊູເອງກໍເປັນເໝືອນແກະທີ່ຖືກຂ້າຖວາຍບູຊາເພື່ອໄຖ່ໂທດຄວາມຜິດບາບຂອງຄົນທັງຫລາຍ ທີ່ໄດ້ຖືກປະຫານທີ່ດ້ານນອກຂອງກຸງເຢຣູຊາເລັມ (ອ່ານເຮັບເຣີ 13:11-12). ມັດທາຍບອກວ່າ ໃນຂະນະທີ່ພຣະເຢຊູກຳລັງແບກໄມ້ກາງແຂນໄປເກືອບຈະໄປບໍ່ໄຫວເນື່ອງຈາກຄວາມເຈັບປວດທີ່ເຂົາຂ້ຽນຕີພຣະອົງຈົນເກືອບເປັນລົມກາງທົນທາງນັ້ນ ພວກທະຫານໄດ້ເກນເອົາຊາຍຜູ້ນຶ່ງທີ່ມາຈາກເມືອງກີເຣເນ ລາວມີຊື່ວ່າ ຊີໂມນໃຫ້ແບກໄມ້ກາງແຂນຂອງພຣະເຢຊູໄປຈົນເຖິງໂຄລະໂຄທາ.

ເຣື່ອງຂອງຊາຍຄົນນີ້ເປັນແນວໃດນັ້ນບໍ່ມີຜູ້ໃດເວົ້າຫຍັງຫລວງຫລາຍ ມີແຕ່ຮູ້ວ່າລາວເປັນຄົນຢິວມາຈາກເມືອງກີເຣເນ ເຊິ່ງເມືອງນີ້ຢູ່ໃກ້ກັບເຢຣູຊາເລັມປະມານ 15 ກິໂລແມດ, ສາສນາສາດສັນນິຖານວ່າລາວໄດ້ເຂົ້າມາກຸງເຢຣູຊາເລັມເນື່ອງໃນງານປັສຄາ ລະນຶກເຖິງການຊົງໄຖ່ຈາກການເປັນຂ້ອຍຂ້າທີ່ປະເທດເອຢິບ. ເຫດການຕອນນີ້ໄດ້ສະທ້ອນເຖິງຄຳເວົ້າພຣະເຢຊູທີ່ກ່າວວ່າ *"ຖ້າຜູ້ໃດຢາກຕິດຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເອງເສັຽ ແລ້ວຮັບແບກໄມ້ກາງແຂນຂອງຕົນ ແລ້ວຕິດຕາມເຮົາມາ"* (ມັດທາຍ 16:24). ພວກທະຫານເຫັນພຣະອົງຊົງອິດເມື່ອຍແລະຫິວນ້ຳ ເຂົາຈຶ່ງເອົາເຫລົ້າແວງປະສົມກັບນ້ຳບີມາໃຫ້ພຣະອົງເພື່ອເປັນການເຍາະເຍີ້ຍ, ເຂົາໄດ້ຈົກເສື້ອຜ້າຂອງພຣະອົງແລ້ວມາແບ່ງປັນກັນເພື່ອໃຫ້ພຣະອົງໄດ້ຮັບຄວາມອັບອາຍຂາຍໜ້າເມື່ອຖືກເປືອຍກາຍ (ຂໍ້ 34-35)ເຣື່ອງນີ້ໄດ້ເປັນໄປຕາມຄຳທຳນວາຍໄວ້ໃນ (ເພງສັຣເສີນ 22:19), ນອກຈາກນັ້ນເຂົາຍັງຂຽນປ້າຍນ້ອຍວ່າ *"ຜູ້ນີ້ຄື ເຢຊູກະສັດຂອງຊາດຢິວ"* (ຂໍ້ 37). ເປັນປ້າຍທີ່ເຂົາຕັ້ງໃຈວ່າໃຫ້ເປັນການດູຖູກ ແຕ່ມັນເປັນຄວາມຈິງຄືພຣະອົງຊົງເປັນກະສັດບໍ່ແມ່ນແຕ່ຊາດຢິວເທົ່າ ແຕ່ຍັງເປັນກະສັດຂອງຄົນທຸກຊາດທຸກພາສາ ແລະຍັງເປັນກະສັດຂອງກະສັດຝ່າຍໂລກອີກ ຈຶ່ງຮ້ອງວ່າກະສັດຈອມກະສັດ.

## 2. <u>ຊົງຖືກໝິ່ນປມາດ:</u> (ມັດທາຍ 27:38-44).

ມີຄົນສາມຈຳພວກທີ່ເຮັດການເຍາະເຍີ້ຍພຣະເຢຊູ; 1 ແມ່ນຜູ້ຄົນທີ່ຜ່ານໄປມາ ເຫັນປ້າຍນັ້ນແລ້ວອາດຈະຫົວຂວັນຫລືໂມໂຫສົມນ້ຳໜ້າ. 2. ແມ່ນພວກປະໂຣຫິດ ແລະ 3. ແມ່ນໂຈນທີ່ຖືກຄຶງຢູ່ໃກ້ກັບພຣະອົງ.

1) <u>ຄົນທີ່ຍ່າງຜ່ານໄປແລະມາ</u>ໄດ້ກ່າວດູຖູກໝິ່ນປມາດສັ່ນຫົວວ່າ *"ເຈົ້າຜູ້ມ້າງພຣະວິຫານແລະສ້າງຂຶ້ນໃໝ່ໃນສາມວັນເຮີຍ, ຈົ່ງຊ່ອຍຕົວເອງໃຫ້ພົ້ນ ຖ້າເຈົ້າເປັນບຸດຂອງພຣະເຈົ້າ ແລະຈົ່ງລົງມາຈາກໄມ້ກາງແຂນ ແມ່"* (ຂໍ້ 40). ມັດທາຍບອກວ່າເຂົາສັ່ນຫົວ (Wagging) ພາສາພວກເຮົາແມ່ນແກ່ວງຫົວໄປຊ້າຍໄປຂວາສອງສາມເທື່ອ ທີ່ພວກເຮົາເຄີຍເຮັດໃນເມື່ອພວກເຮົາບໍ່ຕົກລົງປົງໃຈກັນ. ດັ່ງນັ້ນຈຶ່ງສລຸບຄຳໝິ່ນປມາດຂອງຄົນທີ່ກາຍໄປມາວ່າ ເຂົາບໍ່ເຫັນພ້ອມກັບຄຳທີ່ພຣະອົງກ່າວວ່າ "*ເຮົາສາມາດມ້າງພຣະວິຫານຂອງພຣະເຈົ້າ ແລະຈະສ້າງຂຶ້ນໃໝ່ພາຍໃນສາມວັນ*" (ມັດທາຍ 26:61). ເຂົາຈຶ່ງເອົາຄຳເວົ້າຂອງພຣະອົງກັບມາເວົ້າເຍາະເຍີ້ຍພຣະອົງ.

2) <u>ພວກປະໂຣຫິດ</u> ໄດ້ເຍາະເຍີ້ຍວ່າ *"ມັນຊ່ອຍຄົນອື່ນໃຫ້ພົ້ນໄດ້ ແຕ່ຊ່ອຍຕົນເອງບໍ່ໄດ້ ເຂົາເປັນກະສັດອິສຣາເອນ ໃຫ້ມັນລົງມາຈາກໄມ້ກາງແຂນດຽວນີ້ເທາະ ແລ້ວພວກເຮົາຈະໄດ້ເຊື່ອຖືມັນ"* (ຂໍ້ 42). ພວກປະໂຣຫິດຖືວ່າເປັນຄົນສິລທັມ, ເປັນພວກຜູ້ນຳສາສນາ ຍັງໃຊ້ວ່າຈາຫຍາບຊ້າ ເຣື່ອງນີ້ເປັນບົດຮຽນບໍ່ໃຫ້ຄຣິສຕຽນໃຊ້ຄຳຫຍາບຊ້າ.

3. ໂຈນທີ່ຖືກຄຶງນັ້ນໄດ້ເວົ້າດູຖູກເຍາະເຍີ້ຍວ່າ *"ທ່ານໄດ້ວາງໃຈໃນພຣະເຈົ້າ ຖ້າພຣະເຈົ້າຊົງພໍພຣະທັຍໃນທ່ານ ກໍໃຫ້ພຣະເຈົ້າຊົງໂຜດໃຫ້ທ່ານພົ້ນໄດ້ໃນບັດນີ້" ເພາະເຂົາໄດ້ເວົ້າວ່າ "ເຮົາເປັນບຸດຂອງພຣະເຈົ້າ"* (ຂໍ້ 42). ໂຈນຜູ້ນີ້ຈວນຈະຕາຍກໍຍັງບໍ່ຍອມອ່ອນນ້ອມ ຈຶ່ງເຮັດໃຫ້ຂ້າພະເຈົ້າຄຶດເຖິງອາຈານຜູ້ນຶ່ງໄປຢ້ຽມຢາມຄົນໃກ້ຈະຕາຍທີ່ໂຮງໝໍເພື່ອນຳຂ່າວປະເສີດໄປຫາລາວກ່ອນລາວສິ້ນໃຈຕາຍ. ຜູ້ປ່ວຍນັ້ນໄດ້ເວົ້າກັບອາຈານວ່າ "ຂ້ອຍກຳລັງໃກ້ຈະຕາຍ ເປັນຫຍັງຈຶ່ງເອົາເຣື່ອງຕາຍໆ ມາເວົ້າໃຫ້ຂ້ອຍຟັງ?'

## 3. ຊົງສິ້ນພຣະຊົນ: (ມັດທາຍ 27:45-50)

ໃນກາງທ່ຽງວັນແສດໆໄດ້ເກີດມີຟ້າມືດເປັນເວລາສາມຊົ່ວໂມງຄືຈາກເວລາ 12 ໂມງທ່ຽງຈົນເຖິງ 3 ໂມງແລງ ເບິ່ງແລ້ວຄືຟ້າຮ້ອງໄຫ້ດ້ວຍຄວາມຣະທົມຂົມຂື່ນ "*ແລ້ວໄດ້ເກີດການມືດມົວທົ່ວແຜ່ນດິນຕັ້ງແຕ່ທ່ຽງໂມງຈົນເຖິງເກົ້າໂມງ*" (ຂໍ້ 45). ມັນເປັນສັນຍາລັກໃນການພິພາກສາລົງໂທດຄົນຜິດບາບທີ່ຈະມີຂຶ້ນໃນວັນທີ່ພຣະເຢຊູສເດັດກັບຄືນມາຄັ້ງທີສອງ (ອ່ານມັດທາຍ 24:29; ອ່ານພຣະທັມອາໂມດ 8:9).

ໃນຊົ່ວໂມງທີ່ພຣະອົງຊົງຖືກຄຶງທີ່ໄມ້ກາງແຂນນັ້ນ ພຣະອົງໄດ້ຊົງກ່າວຄຳເມດຕາສົງສານຄົນຜິດບາບທີ່ຕ້ອງທົນທຸກທໍຣະມານທີ່ພຣະອົງໄດ້ຮັບແທນເຂົາແລ້ວໃນເວລານັ້ນ. ພຣະອົງໄດ້ຊົງກ່າວເຖິງມານດາຝ່າຍໂລກຂອງພຣະອົງ (ໂຢຮັນ 19:26-27). ພຣະອົງຊົງຂໍດື່ມນໍ້າ (ໂຢຮັນ 19:28). ພຣະອົງຊົງກ່າວຄຳໃຫ້ອະພັຍຄົນຜິດບາບ(ລູກາ 23:34). ແລະໃນທີ່ສຸດພຣະອົງຊົງກ່າວກັບພຣະບິດາວ່າ "*ເອລີ ໆ ແລມາ ຊາບັກທານີ" (ແປວ່າ, "ພຣະເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງເອີຍ, ເຫດສັນໃດຈຶ່ງຊົງປະຖິ້ມຂ້າພຣະອົງເສັຽ"*). ໃນທັນໃດນັ້ນໄດ້ມີທະຫານຜູ້ນຶ່ງທີ່ເຝົ້າຍາມຢູ່ທີ່ນັ້ນແລ່ນໄປເອົາເຫລົ້າແວງປະສົມກັບນໍ້າສົ້ມໃສ່ປາຍໄມ້ອໍ້ແລ້ວຍື່ນໃສ່ປາກຂອງພຣະອົງ "*ໃນທັນໃດນັ້ນມີຜູ້ນຶ່ງໃນພວກເຂົາແລ່ນໄປເອົາຟອງນໍ້າຈຸ່ມເຫລົ້າແວງສົ້ມໃຫ້ເຕັມ ແລ້ວສຽບໃສ່ປາຍໄມ້ອໍ້ຍື່ນໃຫ້ພຣະອົງສເວີຍແຕ່ຄົນອື່ນເວົ້າວ່າ, "ຟ້າວເທື່ອ, ຖ້າເບິ່ງກ່ອນວ່າເອລີຢາຈະມາຊ່ອຍເຂົາໃຫ້ພົ້ນຫລືບໍ່" ສ່ວນພຣະເຢຊູກໍຊົງຮ້ອງສຽງດັງຂຶ້ນອີກ ແລ້ວຊົງປ່ອຍຈິດວິນຍານໄປແລະເບິ່ງແມ ຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເປັນສອງຕ່ອນ ຕັ້ງແຕ່ເທິງລົງເຖິງລຸ່ມ ແຜ່ນດິນກໍສະທ້ານຫວັ່ນໄຫວ ສີລາກໍແຕກອອກຈາກກັນ* " (ຂໍ້ 48-50).

## 4. ຣິດອຳນາດຕອນສິ້ນພຣະຊົນ: (ມັດທາຍ 27:51-54).

ມັດທາຍບອກວ່າພຣະເຢຊູໄດ້ຮ້ອງດ້ວຍສຽງດັງ ແລ້ວຊົງປ່ອຍຈິດວິນຍານໄປ ແປວ່າສິ້ນໃຈຕາຍໃນຂໍ້ 50 ພຣະອົງຮ້ອງດ້ວຍສຽງດັງນັ້ນໂຢຮັນໄດ້ຍິນວ່າ "*ສຳເຣັດແລ້ວ" ແລ້ວພຣະອົງຊົງກົ້ມພຣະສຽນລົງ ພຣະອົງຊົງມອບຈິດວິນຍານໄວ້*"(ໂຢຮັນ 19:30). ເມື່ອສຳເຣັດແລ້ວ ພຣະອົງຈຶ່ງມອບຈິດວິນຍານໄວ້ກັບພຣະເຈົ້າ ສ່ວນພຣະກາຍຂອງພຣະອົງເປັນຂອງຝ່າຍໂລກຈະຕ້ອງຢູ່ກັບໂລກ. ໃນເວລານັ້ນຜ້າກັ້ງໃນພຣະວິຫານອັນສັກສິດທີ່ກຸງເຢຣູຊາເລັມໄດ້ຖືກຈີກເປັນສອງຕ່ອນຕັ້ງແຕ່ເທິງຈົນຮອດລຸ່ມ ອັນເປັນສັນຍາລັກວ່າພຣະເຈົ້າຊົງຮັບເອົາຄວາມສຳເຣັດທີ່ພຣະອົງໄດ້ເຮັດໃນໂລກນີ້ແລ້ວ ຄືກາຍຊົງໄຖ່ໂທດຄົນບາບທຸກຄົນທີ່ຍອມເຊື່ອໃນພຣະບຸດຂອງພຣະອົງ. ໃນເວລານັ້ນມີການອັສຈັນອັນໃຫຍ່ເກີດຂຶ້ນ "*ອຸບໂມງຝັງສົບກໍໄຂອອກ ສົບພວກໄພ່ພົນຂອງພຣະເຈົ້າຫລາຍຄົນທີ່ລ່ວງຫລັບໄປແລ້ວກໍເປັນຄືນມາ ເຂົາທັງຫລາຍຈຶ່ງພາກັນອອກຈາກອຸບໂມງ ແລະເມື່ອ ພຣະເຢຊູຊົງເປັນຄືນມາແລ້ວເຂົາກໍໄດ້ເຂົ້າໄປໃນນະຄອນສັກສິດ ປາກົດຕົວໃຫ້ຫລາຍຄົນເຫັນ ສ່ວນນາຍຮ້ອຍ ແລະທະຫານທີ່ເຝົ້າພຣະສົບພຣະເຢຊູຢູ່ນຳກັນ ເມື່ອໄດ້ເຫັນແຜ່ນດິນຫວັ່ນໄຫວແລະເຫດການທັງປວງທີ່ເກີດຂຶ້ນນັ້ນ ກໍພາກັນຢ້ານຫລາຍຈຶ່ງເວົ້າກັນວ່າ, "ຈິງແທ້ແລ້ວ, ທ່ານຜູ້ນີ້ແມ່ນພຣະບຸດຂອງພຣະເຈົ້າ*" (ຂໍ້ 52-54).

## ຄຳຖາມ

1. ອົງຕາມຄຳເຫັນຂອງທ່ານເປັນຫຍັງພຣະເຢຊູຈຶ່ງທົນທຸກທໍຣະມານຕໍ່ຄວາມເຈັບປວດ, ຕໍ່ຄວາມອັບອາຍ

ຈົນສິ້ນໃຈຕາຍ)

2. ຄຳເວົ້າອັນໃດໃນຕອນທ້າຍທີ່ພຣະເຢຊູໄດ້ກ່າວອອກມາເຮັດໃຫ້ທ່ານປະທັບໃຈ?

3. ຊາຍຄົນນຶ່ງຊ່ອຍແບກໄມ້ກາງແຂນຂອງພຣະອົງໄປຈົນເຖິງບ່ອນເຂົາຄຶງພຣະອົງນັ້ນມີຊື່ວ່າແນວໃດ? ເປັນຫຍັງບໍ່ມີໃຜເວົ້າເຣື່ອງຂອງລາວຕໍ່ໄປ, ຫລືງຽບຫາຍໄປຈາກພຣະຄັມພີ?

4. ຄົນສາມຈຳພວກທີ່ເວົ້າດູຖູກເຍາະເຍີ້ມພຣະອົງນັ້ນມີໃຜແດ່?

5. ເປັນຫຍັງຈຶ່ງເກີດມີຟ້າມືດຝົນຕົກເປັນເວລາສາມຊົ່ວໂມງ.

6. ຜ້າກັ້ງໃນພຣະວິຫານຈີກຈາກເທິງຮອດລຸ່ມນັ້ນທ່ານຄິດແນວໃດ?

*ທ.ວ.*

# ບົດຮຽນທີ 13

## ຈອມຣາຊາຊົງຄືນພຣະຊົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 28:1-10, 16-20.

**ພູມຫລັງຂອງພຣະຄັມພີ:** ມັດທາຍ 28:1-20

**ຈຸດສຳຄັນຂອງບົດຮຽນນີ້:** ຊົງຊະນະຄວາມຕາຍແລະມອບອຳນາດໃຫ້ສາວົກໄປປະກາດ.

**ຄຳຖາມເພື່ອການຄົ້ນຄວ້າ:** ຂ້ອຍໄດ້ເຊື່ອໃນພຣະອົງບໍ່? ຈະສ້າງສາວົກທຸກຊາດແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ອຍຂ້ອຍໃຫ້ເຊື່ອໃນພຣະອົງແລະອອກໄປສ້າງສາວົກ.

## ບົດນຳ

ອັຄສາວົກມັດທາຍບັນທຶກໄວ້ວ່າພຣະເຢຊູຊົງຄືນພຣະຊົນ ແລະມີພຣະປະສົງຈະຢູ່ກັບທຸກຄົນໂດຍສັ່ງສອນພວກສາວົກໃຫ້ອອກໄປບອກຂ່າວດີນີ້ໃຫ້ແກ່ທຸກຊາດທຸກພາສາ.

### 1. ເຢຊູຈອມກະສັດຄືນແລ້ວ: (ມັດທາຍ 28:1-10)

ໃນວັນຖ້ວນສາມທີ່ເຂົາບັນຈຸສົບຂອງພຣະເຢຊູໄວ້ທີ່ອຸບໂມງນັ້ນ ພວກແມ່ຍິງໄດ້ພາກັນໄປຍັງອຸບໂມງຝັງສົບແຕ່ເຊົ້າມືດ ຫລືບໍ່ທັນເຖິງເວລາຮຸ່ງແຈ້ງເທື່ອໂດຍຕັ້ງໃຈວ່າໄປທົດສິ່ງສົບຂອງພຣະອົງດ້ວຍນ້ຳຫອມ, ພວກແມ່ຍິງເຫລົ່ານີ້ຮູ້ແລ້ວວ່າປາກອຸບໂມງຖືກອັດດ້ວຍຫີນແຜ່ນໃຫຍ່ ແລະພວກນາງກໍຮູ້ວ່າພວກນາງບໍ່ມີຄວາມສາມາດກິ້ງຫີນນັ້ນອອກໄດ້ ແຕ່ກໍໄປດ້ວຍຄວາມຮັກອັນຍິ່ງໃຫຍ່ຂອງເຂົາ. ອັຄສາວົກມັດທາຍຊີ້ແຈງວ່າໃນເວລາທີ່ພວກແມ່ຍິງໄປເກືອບເຖິງອຸບໂມງນັ້ນໄດ້ເກີດມີແຜ່ນດິນໄຫວຢ່າງໜັກ, ການເກີດແຜ່ນດິນໄຫວຄັ້ງນີ້ບໍ່ແມ່ນແນວອື່ນໄກ ແຕ່ແມ່ນເທວະດາລົງມາຈາກສວັນເພື່ອກິ້ງຫີນທີ່ອັດປາກອຸບໂມງອອກ (ຂໍ້ 2). ຢ່າເຂົ້າໃຈຜິດວ່າເທວະດາໄດ້ເຮັດໃຫ້ພຣະເຢຊູຄືນມາມີຊີວິດ ຫລືກິ້ງກ້ອນຫີນອອກເພື່ອໃຫ້ພຣະເຢຊູອອກຈາກອຸບໂມງແຕ່ຢ່າງໃດ ແຕ່ແມ່ນເປີດອອກໃຫ້ເຫັນວ່າມັນເປັນອຸບໂມງອັນຫວ້າງເປົ່າທີ່ບົ່ງບອກວ່າພຣະເຢຊູບໍ່ປະທັບຢູ່ທີ່ນັ້ນແຕ່ໄດ້ເປັນຄືນມາແລ້ວ.

ຂໍ້ 4 ບອກວ່າພວກຄົນຍາມ (ທະຫານຍາມ) ກາຍເປັນເໝືອນຄົນຕາຍ ແປວ່າພວກເຂົາພາກັນແຂງກະດ້າງປາກບໍ່ອອກເພາະຄວາມຢ້ານເອົາແທ້ເອົາວ່າຈົນກະດ້າງຄາທີ່, ສ່ວນພວກແມ່ຍິງກໍພາກັນຢ້ານແຕ່ຖືກເລົ້າໂລມຈາກເທວະດາວ່າ " *ຝ່າຍເທວະດາຕົນນັ້ນໄດ້ກ່າວແກ່ພວກຜູ້ຍິງວ່າ, "ພວກເຈົ້າຢ່າຊູ່ຢ້ານ ເຮົາກໍຮູ້ແລ້ວວ່າພວກເຈົ້າມາຊອກຫາພຣະເຢຊູ ຜູ້ທີ່ຖືກຄຶງໄວ້ທີ່ໄມ້ກາງແຂນພຣະອົງບໍ່ປະທັບຢູ່ທີ່ນີ້ ເພາະຖືກຊົງບັນດານໃຫ້ເປັນຄືນມາ ຕາມທີ່ພຣະອົງໄດ້ຊົງກ່າວແລ້ວ ຈົ່ງມາເບິ່ງບ່ອນທີ່ພຣະອົງໄດ້ບັນທົມຢູ່ນັ້ນ* " (ຂໍ້ 5-6).

ເຮົາບໍ່ຮູ້ວ່າພວກແມ່ຍິງມີຄວາມຢ້ານອັນໃດ? ບາງທີອາດຈະແມ່ນຄວາມສັ່ນສະເທືອນຂອງແຜ່ນດິນໄຫວເຮັດໃຫ້ພວກນາງຢ້ານ, ບາງທີພວກເຂົາອາດຈະເປັນຫ່ວງພຣະສົບພຣະເຢຊູທີ່ໃນອຸບໂມງ, ເມື່ອເຫັນເທວະດາກໍຍິ່ງເພີ້ມການຢ້ານດ້ວຍວ່າໄດ້ມີແສງອັນຮຸ່ງກ້າໄປຮອບຕົວຂອງເທວະດາ (ຂໍ້ 3). ແຕ່ພວກແມ່ຍິງນັ້ນກໍໄດ້ຮັບຄໍາຊີ້ແຈງຂອງເທວະດາໃຫ້ໄປບອກຂ່າວນີ້ແກ່ສາວົກທີ່ຊຸມນຸມກັນຢູ່ວ່າ *"ພຣະອົງຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍແລ້ວ ແລະເບິ່ງແມ, ພຣະອົງສະເດັດໄປຍັງແຂວງຄາລິເລກ່ອນທ່ານທັງຫລາຍ ພວກທ່ານຈະໄດ້ເຫັນພຣະອົງຢູ່ທີ່ນັ້ນ" ນີ້ແຫລະ, ເຮົາໄດ້ບອກພວກເຈົ້າແລ້ວ"* (ຂໍ້ 7). ຫລັງຈາກພວກແມ່ຍິງໄດ້ຍິນຄໍາບອກເລົ່າຈາກເທວະຢ່າງຄັກແນ່ແລ້ວ ຈຶ່ງພາກັນຟ້າວແລ່ນໄປບອກຂ່າວດີນີ້ແກ່ພວກສາວົກ (ຂໍ້ 8). ເຮົາສັງເກດເຫັນວ່າແທນທີ່ຈະແມ່ນພວກາສາວົກຜູ້ຢູ່ໃກ້ຊິດກັບພຣະເຢຊູໄປບອກຂ່າວດີເຣື່ອງການຄືນມາຈາກຕາຍໃຫ້ພວກຜູ້ຍິງແລະຜູ້ອື່ນໆຟັງ ແຕ່ມັນກໍກັບຫລັງໂດຍແມ່ນພວກແມ່ຍິງໄປບອກສາວົກເຣື່ອງຂອງ ພຣະເຢຊູ. ເຣື່ອງນີ້ອາດຈະເປັນເພາະວ່າພວກຜູ້ຍິງມີໃຈຮ້ອນຮົນສົນໃຈເຣື່ອງພຣະເຢຊູຫລາຍກວ່າ ພຣະເຈົ້າຈຶ່ງສົ່ງເທວະດາມາເພື່ອບອກຂ່າວນີ້ແກ່ເຂົາ.

ໃນຂໍ້ 9 ມັດທາຍບອກວ່າ "*ພຣະເຢຊູໄດ້ສະເດັດມາພົບເຂົາແລະຊົງກ່າວວ່າ, "ຈົ່ງຈະເຣີນເທີນ" ຍິງເຫລົ່ານັ້ນກໍເຂົ້າມາຈັບພຣະບາດນະມັສການພຣະອົງພຣະເຢຊູຊົງກ່າວວ່າ, "ຢ່າຊູ່ຢ້ານ ຈົ່ງໄປບອກພວກພີ່ນ້ອງຂອງເຮົາ ໃຫ້ໄປຍັງແຂວງຄາລິເລ ເຂົາຈະໄດ້ເຫັນເຮົາທີ່ນັ້ນ*" (ຂໍ້ 9-10). ເຣື່ອງເປັນດັ່ງນີ້ ອີງຕາມພຣະທັມໂຢຮັນບັນທຶກ, ຄືຫລັງຈາກພວກແມ່ຍິງແລ່ນໄປບອກພວກສາວົກແລ້ວພວກເຂົາທັງໝົດກໍພາກັນແລ່ນກັບໄປຍັງອຸບໂມງ ແຕ່ເມື່ອເຂົ້າໄປໃນອຸບໂມງແລ້ວກໍບໍ່ເຫັນພຣະສົບຂອງພຣະເຢຊູ ຈຶ່ງພາກັນຮ້ອງໄຫ້ດ້ວຍຄວາມອາລັຍອາວອນ, ໃນຂະນະນັ້ນພຣະເຢຊູໄດ້ປາກົດເລົ້າໂລມໃຈເຂົາ (ອ່ານໂຢຮັນ 20:11-15). ໝາຍຄວາມວ່າ ພຣະເຢຊູຊົງປາກົດໃຫ້ພວກຜູ້ຍິງເຫັນນີ້ແມ່ນຕອນເຂົາກັບໄປຄັ້ງທີສອງຮ່ວມກັບພວກສາວົກ.

## 2. <u>ຊົງມອບອໍານາດໃຫ້ສາວົກ:</u> (ມັດທາຍ 28:11-20).

ຂໍ້ 11 ກໍເປັນເຣື່ອງຊັບຊ້ອນແດ່ ແຕ່ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນຈຶ່ງຂໍອະທິບາຍດັ່ງນີ້; ເຣື່ອງນີ້ແມ່ນຕໍ່ຈາກຂໍ້ 8 ນັ້ນເອງ, ມັດທາຍບັນທຶກວ່າ "*ເມື່ອຍິງເຫລົ່ານັ້ນກໍາລັງໄປ ມີຜູ້ເຝົ້າຍາມລາງຄົນໄດ້ເຂົ້າໄປໃນເມືອງ ເລົ່າເຫດການທັງປວງທີ່ເກີດຂຶ້ນນັ້ນໃຫ້ພວກປະໂຣຫິດຕົ້ນໃຫຍ່ຟັງ"* (ຂໍ້ 11). ເວົ້າອີກຢ່າງນຶ່ງແມ່ນພວກແມ່ຍິງໄປເລົ່າຂ່າວການຄືນພຣະຊົນໃຫ້ພວກສາວົກຟັງ, ສ່ວນພວກທະຫານໄປລາຍງານເຫດການທີ່ເກີດຂຶ້ນໃຫ້ປະ ໂຣຫິດຟັງ. ເມື່ອພວກປະໂຣຫິດໄດ້ຮັບຄໍາລາຍງານຂອງພວກທະຫານຍາມແລ້ວ ເຂົາກໍພາກັນປະຊຸມດ່ວນ ດ້ວຍວ່າເຂົາບໍ່ຢາກໃຫ້ຂ່າວເຣື່ອງການຄືນພຣະຊົນຂອງພຣະເຢຊູນັ້ນແຜ່ກວ້າງອອກໄປ ຫລືຢາກປິດຂ່າວ ນີ້ບໍ່ໃຫ້ຜູ້ໃດຮູ້ອີກຕໍ່ໄປດັ່ງນັ້ນເຂົາຈຶ່ງຕົກລົງກັນເອົາເງິນຈໍານວນຫລາຍຈ້າງທະຫານບໍ່ໃຫ້ເວົ້າເຣື່ອງນີ້ອີກ "*ເມື່ອພວກປະໂຣຫິດຕົ້ນໃຫຍ່ໄດ້ປະຊຸມປຶກສາກັນກັບພວກເຖົ້າແກ່ແລ້ວ ກໍເອົາເງິນຈໍານວນຫລາຍແຈກໃຫ້ພວກທະຫານສັ່ງວ່າ, "ໃຫ້ພວກເຈົ້າເວົ້າວ່າ "ພວກສາວົກຂອງເຂົາໄດ້ມາໃນເວລາກາງຄືນ ລັກເອົາສົບໄປເວລາຫມູ່ເຮົານອນຫລັບຢູ່*" (ຂໍ້ 12-13).

ພວກທະຫານຍາມເຫລົ່ານັ້ນກໍໄດ້ຮັບເງິນປິດປາກແລ້ວກໍພາກັນເຮັດຕາມພວກປະໂຣຫິດສັ່ງ, ເງິນໄດ້ເຮັດ

ໃຫ້ພວກທະຫານທີ່ຖືວ່າເປັນຄົນເຂັ້ມແຂງກາຍເປັນຄົນອ່ອນແອໄປຢ່າງບໍ່ຮູ້ສຶກຕົວ ເພາະວ່າ...

1. ເງິນໄດ້ເຮັດໃຫ້ເຂົາປົກປິດຄວາມຈິງໄວ້.
2. ເງິນໄດ້ເຮັດໃຫ້ເຂົາປັ້ນຄວາມຈິງ ມາເປັນເລື່ອງຂີ້ຕົວະ ຫາເລື່ອງວ່າສາວົກມາລັກສົບໄປ.
3. ເງິນໄດ້ເຮັດໃຫ້ເຂົາປະກາດຄວາມອ່ອນແອວ່າ ເຂົານອນຫລັບ ຊຶ່ງເປັນເລື່ອງທີ່ນາຍທະຫານ ບໍ່ຢາກໄດ້ຍິນ ແລະເມື່ອໄດ້ຍິນວ່າທະຫານຍາມນອນຫລັບຈະຕ້ອງຖືກໂທດຢ່າງໜັກ.

ສ່ວນພວກແມ່ຍິງນັ້ນຖືວ່າເປັນກຸ່ມແຣກ ທີ່ໄດ້ໄປເວົ້າຂ່າວປະເສີດເລື່ອງພຣະເຢຊູຊົງຄືນພຣະຊົນແລ້ວໃຫ້ພວກສາວົກຟັງ, ພວກແມ່ຍິງເຫລົ່ານີ້ໄດ້ໄປບອກເລົ່າຄວາມຈິງໂດຍບໍ່ຖືກຈ້າງດ້ວຍເງິນຄຳແຕ່ຢ່າງໃດ ແຕ່ກໍເຕັມໃຈຟ້າວໄປບອກກ່າວດ້ວຍຄວາມຍິນດີ, ເລື່ອງນີ້ໄດ້ເຮັດໃຫ້ຜູ້ປະກາດຂ່າວປະເສີດທຸກວັນນີ້ໄດ້ຮຽນເອົາແບບຢ່າງຂອງພວກຜູ້ຍິງນີ້ ຄືພາກັນອອກໄປທົ່ວແຜ່ນດິນໂລກ ໂດຍບໍ່ຄິດເຖິງຄ່າຈ້າງລາງວັນອັນໃຫຍ່ຫລວງແຕ່ຢ່າງໃດ ຂໍພຽງແຕ່ມີບ່ອນຢູ່ ແລະມີອາຫານການກິນ ແລະມີເງິນພຽງເລັກນ້ອຍໃຊ້ໃນວຽກງານເຂົາເຈົ້າກໍພໍໃຈແລ້ວ.

ແລ້ວມັດທາຍບັນທຶກຕໍ່ໄປວ່າ ພວກສາວົກໄປຍັງແຂວງຄາລີເລຕາມຄຳບອກເລົ່າຂອງພວກແມ່ຍິງ ເພື່ອຈະໄປພົບກັບພຣະເຢຊູຢູ່ທີ່ນັ້ນ " *ແຕ່ພວກສາວົກສິບເອັດຄົນນັ້ນໄດ້ໄປຍັງແຂວງຄາລີເລ ເຖິງພູທີ່ພຣະເຢຊູໄດ້ຊົງກຳນົດໄວ້ກັບເຂົາ* " (ຂໍ້ 16). ເລື່ອງທີ່ພວກແມ່ຍິງໄປບອກກັບສາວົກນັ້ນເປັນຈິງທຸກຢ່າງ, ພວກສາວົກຈຶ່ງພົບກັບພຣະເຢຊູຕາມທີ່ກຳນົດໄວ້ແລ້ວ ເມື່ອພວກສາວົກເຫັນພຣະອົງແລ້ວພໍພາກັນຂາບລົງນະມັສການ ພຣະອົງ. ການຂາບລົງນະມັສການນີ້ຂ້າພະເຈົ້າເຊື່ອແນ່ວ່າຄົນລາວທີ່ເປັນຜູ້ໃຫຍ່ມາແຕ່ລາວແລ້ວຄົງເຂົ້າໃຈດີ ແຕ່ຫາກຍັງມີໃຜບໍ່ທັນເຂົ້າໃຈນັ້ນ ຢາກຂໍອະທິບາຍເພີ້ມເຕີມໂດຍມີຕົວຢ່າງທີ່ຊາວພຸດເຫັນຄຣູບາເຂົາເຈົ້າກໍຈະນັ່ງແລະກົ້ມຂາບນະມັສການຄຣູບາອົງນັ້ນ ແຕ່ການຂາບນະມັສການຂອງຊາດຢິວແມ່ນກົ້ມລົງເອົາໜ້າຜາກແປະໃສ່ພື້ນດິນອັນສະແດງເຖິງຄວາມນອມນ້ອມຖ່ອມຕົວ ແລະສະແດງຄວາມໂຄຣົບຢຳເກງຈົນເຖິງທີ່ສຸດ. ໃນຂະນະທີ່ສາວົກສິບເອັດຄົນກົ້ມລົງນະມັສການພຣະເຢຊູນັ້ນມັດທາຍບອກວ່າ ມີລາງຄົນຍັງສົງສັຍ " *ເມື່ອເຂົາເຫັນພຣະອົງແລ້ວຈຶ່ງຂາບໄຫວ້ນະມັສການ ແຕ່ລາງຄົນຍັງສົງສັຍຢູ່* " (ຂໍ້ 17).

ສາວົກລາງຄົນທີ່ກ່າວມານັ້ນມັດທາຍບໍ່ໄດ້ບອກວ່າແມ່ນຜູ້ໃດ ມີແຕ່ບອກວ່າລາງຄົນເທົ່ານັ້ນ, ລາງຄົນສົງສັຍກໍເພາະວ່າໃນຄວາມເຊື່ອຂອງຊາວຢູດາຍໃນເວລານັ້ນ ພາກັນເຊື່ອວ່າການຄືນມາຈາກຕາຍແລ້ວກັບຄືນມາເປັນຕົນຕົວນັ້ນບໍ່ມີໃນຄວາມເຊື່ອຖືຂອງເຂົາ, ດັ່ງນັ້ນການຄືນພຣະຊົນຂອງພຣະເຢຊູຈຶ່ງເປັນໝາກຜົນທຳອິດໃນປະຫວັດສາດ ແລະການຄືນພຣະຊົນນີ້ຍັງເປັນຮູບພາບທີ່ຈະມາພາຍໜ້າ ຄືຜູ້ທີ່ເຊື່ອໃນພຣະອົງກໍຈະເປັນຄືນມາອີກ (ອ່ານ 1ເທຊະໂລນີກ 4:16). ສ່ວນຈະເປັນຄືນມາແນວໃດນັ້ນບໍ່ມີໃຜຮູ້ ແຕ່ມີຂໍ້ສັງເກດເຫັນໃນພຣະທັມ ເອເຊກຽນ 37:7 ເວົ້າເຖິງກະດູກແຫ້ງກັບຄືນມາມີຊີວິດ.

ໃນຂະນະທີ່ສາວົກລາງຄົນຍັງສົງສັຍຢູ່ນັ້ນພຣະເຢຊູສະເດັດມາໃກ້ເຂົາແລ້ວກ່າວວ່າ "*ອຳນາດທັງຫມົດໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກ*

*ເຈົ້າໄວ້ແລ້ວນັ້ນ ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆ ວັນຈົນຫມົດກັບ* " (ຂໍ້ 18-20). ພຣະເຢຊູບອກສາວົກທັງສິບເອັດຄົນເຣື່ອງສິດອຳນາດຂອງພຣະອົງ ໂດຍສະເພາະແມ່ນອຳນາດເໜືອຄວາມຕາຍທີ່ເປັນຜູ້ດຽວໃນໂລກທີ່ຄືນຈາກຕາຍ ແລະມີຊີວິດຢູ່ຕລອດໄປເປັນນິດ, ມາບັດນີ້ພຣະອົງຊົງສັ່ງແລະມອບອຳໃຫ້ພວກສາວົກດັ່ງນີ້;

1. ທ່ານທັງຫລາຍຈຶ່ງອອກໄປ, ອັນໝາຍເຖິງອອກຈາກບ່ອນຕົນເອງອາສັຍຢູ່.
2. ຈົ່ງເຮັດໃຫ້ທຸກຊາດເປັນລູກສິດ, ແປວ່າໄປສອນຄົນທຸກຊາດໃຫ້ຮັບເຊື່ອພຣະເຢຊູຄຣິດ.
3. ເມື່ອເຂົາຮັບເຊື່ອແລ້ວໃຫ້ເຂົາບັບຕິສະມາໃນພຣະນາມ ພຣະບິດາ, ພຣະບຸດ ແລະພຣະວິນຍານບໍຣິສຸດ.
4. ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດ ແປວ່າສອນເຂົາໃຫ້ຖືຮັກສາຄຳສອນທຸກຢ່າງຂອງພຣະເຈົ້າ.
5. ພຣະອົງຊົງສັນຍາກັບສາວົກວ່າຈະຢູ່ກັບເຂົາຈົນສິ້ນຍຸກ ແປວ່າຈົນກວ່າໂລກສລາຍ.

**<u>ຄຳຖາມ:</u>**

1. ແມ່ນໃຜໄປຫາພຣະເຢຊູຫລັງຈາກສາມວັນທີ່ເຂົາເອົາສົບຂອງພຣະອົງບັນຈຸໄວ້ໃນອຸບໂມງ?

2. ເປັນຫຍັງເຂົາຈຶ່ງໄປ ເມື່ອເຂົາຮູ້ແລ້ວວ່າຈະເຂົ້າໄປໃນອຸບໂມງບໍ່ໄດ້?

3. ເມື່ອເຂົາໄປຮອດແລ້ວມີຫຍັງເກີດຂຶ້ນ?

4. ຫລັງຈາກນັ້ນພວກແມ່ຍິງໄປເລົ່າຂ່າວນີ້ແກ່ໃຜ? ແລະພວກທະຫານໄປລາຍງານກັບໃຜ?

5. ເມື່ອພວກທະຫານລາຍງານແລ້ວ ພວກປະໂຣຫິດເຮັດແນວໃດ?

6. ພວກສາວົກໄປພົບກັບພຣະເຢຊູຢູ່ໃສ?

7. ເມື່ອເຂົາພົບພຣະອົງແລ້ວ ພຣະອົງຊົງກ່າວແນວໃດກັບເຂົາແດ່?

8. ວັນນີ້ພຣະອົງຊົງກ່າວອັນໃດກັບທ່ານ?

*ທ.ວ.*